

# ກ່ອນຈະເຖິງ ວັນນີ້

ໂດຍ... ດວງຈຳປາ



# ກ່ອນຈະເຖິງ ວັນນີ້

ໂດຍ... ດວງຈຳປາ

* ໃບອະນຸຍາດພິມ ເລກທີ ໐໔໐/ພ.ວ.ນ
* ທະບຽນພິມຈຳໜ່າຍ ເລກທີ ໐໒໙/ພ.ຈ.ນ

ລົງວັນທີ ໒໖/໘/໘໘

ພິມທີ່ ໂຮງພິມແຫ່ງລັດ
ສ.ປ.ປ.ລ
ຈຳນວນ ໔໐໐໐ ຫົວ
ຄ.ສ. ໑໙໘໘

# ກ່ອນຈະເຖິງວັນນີ້

ໂຮມເລື່ອງສັ້ນ

ຂອງ

ດວງຈຳປາ

ສຳນັກພິມ ວັນນະສິນ

1988

# ກ່ອນຈະເຖິງວັນນີ້

ໂຮມເລື່ອງສັ້ນ ຂອງ **ດວງຈຳປາ**

ພິມຄັ້ງທີໜຶ່ງ ເດືອນ ກັນຍາ ໑໙໘໘

ສຳນັກພິມ ວັນນະສິນ

ຄຸ້ມນ້ຳພຸ ວຽງຈັນ

ຄະນະຈັດທຳ ດວງເດືອນ ບຸນຍາວົງ
ໂອທອງ, ຈັນເພັງ
ມາລິ, ພັນທະມາ
ພອນທິບ.

ອອກແບບປົກ ສຸມັນທາ ກັນລະຍາ
ແບບປົກ ສີລະວັນ ອິນທະວົງສາ
ຖ່າຍພາບປົກ ໂສພາ
ພາບປະກອບເລື່ອງ ບຸນທຽວ ສີລິປະພັນ

# ສາລະບານ


ຄຳນຳຂອງສຳນັກພິມ ຂ

ຮູ້ຈັກກັບດວງຈຳປາໜ້ອຍໜຶ່ງ ຈ

1. ກ່ອນຈະເຖິງວັນນີ້ 3

2. ຂ້ອຍຜິດເອງ 19

3. ລູກ 39

4. ນາງຄືນນັ້ນ 51

5. ຄ່າກັບລາຄາ 61

6. ຕັດສິນໃຈ 69

7. ເພື່ອຜູ້ເກີດໃໝ່ 83

8. ທີ່ຝາກໃຈ 99

# ຄຳນຳຂອງສຳນັກພິມ

ຜ່ານມາສຳນັກພິມ " ວັນນະສິນ " ຍັງບໍ່ເຄີຍຈັດພິມຜົນງານທາງດ້ານ ວັນນະກຳປະເພດເລື່ອງສັ້ນເລື່ອງຍາວ ບົດກະວີ ຂອງນັກປະພັນຄົນໃດ ທັງໆທີ່ວ່າຕະຫຼອດເວລາເກືອບສິບປີແລ້ວ ທີ່ ວັນນະສິນ ໄດ້ດຳລົງຕົນເປັນເວທີສະແດງ ຂອງ ນັກ ປະດິດແຕ່ງ, ເປັນອົງກອນໜຶ່ງທີ່ເຍື້ອນຍ່າງຄຽງບ່າຄຽງໄຫລ ກັບອົງກອນຮ່ວມອຸດົມການອື່ນໆ ເທິງຖະໜົນອັກສອນມາດົນນານສົມຄວນ. ພໍເວົ້າໄດ້ວ່າຄັງສາງຂອງ ເຮົາອຸດົມຮັ່ງມີຂຶ້ນເລື້ອຍໆ. ປະຈຸບັນພວກເຮົາມີ ເລື່ອງສັ້ນຮ່ວມສະໄໝຮ້ອຍກວ່າເລື່ອງ ຈາກນັກຂຽນ ມາກໜ້າຫຼາຍຕາ ທັງໜຸ່ມນ້ອຍດ້ານໄວ ແລະ ປະສົບການກັບຜູ້ອາວຸໂສ, ມີບົດກະວີຫລາກຫຼາຍສີສັນເປັນ

ພັນໆບົດຈາກ ນັກກອນ ທົ່ວປະເທດ, ນອກນີ້ ພວກເຮົາຍັງສະສົມບົດແປ ວັນນະຄະດີຕ່າງປະເທດ ແລະ ນິທານພື້ນເມືອງໄວ້ອີກ ເປັນຈຳນວນຫຼວງຫຼາຍ.

ເວົ້າໄດ້ວ່າ ພວກເຮົາ ບັນລຸເປົ້າໝາຍ ອັນທີ່ໜຶ່ງແລ້ວ ຫຼຽວໄປຂ້າງໜ້າ ເປົ້າໝາຍ ທີສອງ - ພວມຍິ້ມແຍ້ມທ້າທາຍຄືຢາກໃຫ້ພວກເຮົາເລັ່ງຝີຕີນໃຫ້ໄປຮອດໄວໆ...

ໂຮມເລື່ອງສັ້ນຂອງ ດວງຈຳປາ ຊຸດນີ້ ປະກອບດ້ວຍເລື່ອງທີ່ຂຽນຂຶ້ນສົດໆຮ້ອນໆກໍ່ມີພິມອອກຜ່ານສາຍຕານັກອ່ານວັນນະສິນໃນຊຸມຕົ້ນປີ ໘໐ ກໍ່ມີ ແລະ ທີ່ເກົ່າແກ່ຈົນເກືອບລືມກໍ່ມີ, ແຕ່ຄວາມເກົ່າ ຫຼື ໃໝ່ຕາມຈິດສຳນຶກຂອງເວລາບໍ່ໄດ້ລຶບລ້າງ ຫຼືຫລຸດຄຸນຄ່າ

ຂອງປ້າຍ " ປາກກາ " ເຫລັກກ້າ ດວງນີ້ໄດ້.

ຖາຫາກວ່າ " ກ່ອນຈະເຖິງວັນນີ້ " ເປັນ ລູກຫົວປີຂອງວັນນະສິນ ທີ່ທ່ານຜູ້ອ່ານ ຢ່າກຊຸມຢາກແຍງມາແຕ່ດົນແລ້ວນັ້ນ ພວກເຮົາກໍ່ຫວັງວ່າ ລູກຄົນທີສອງ ຄົນທີສາມ ແລະ ຕໍ່ໆ... ໄປຂອງວັນນະສິນຈະສ້າງຄວາມພໍໃຈສົມຫົວໃຈຂອງທ່ານຜູ້ອ່ານ ທີ່ນິຍົມຊົມຊອບວັນນະກຳລາວ.

ດ້ວຍຄວາມຮັກແພງ

ສຳນັກພິມ ວັນນະສິນ

ກັນຍາ ໑໙໘໘



# ຮູ້ຈັກກັບ
# ດວງຈຳປາ ໜ້ອຍໜຶ່ງ

ດອກຈຳປາບໍ່ເຄີຍຢຸດເຊົາສົ່ງກິ່ນຫອມ ກິ່ນຊຶ່ງບໍ່ວ່າຜູ້ໃດເມື່ອໄດ້ດົມແລ້ວ ຍ່ອມຄິດຮອດຄວາມຫຼັງ ຄິດຮອດບ້ານເກົ່າ ບ້ານເກີດເມືອງນອນ ກິ່ນດອກຈຳປາຝັງເລິກຢູ່ໃນຈິດໃຈຂອງຄົນລາວທຸກຜູ້ທຸກນາມ. ດອກຈຳປາສະແດງຕົວອອກຢູ່ໃນ ບົດເພງ, ບົດກະວີ,ບົດຟອນ, ເປັນຊື່ຂອງຫຼາຍໆສະຖານທີ່ ແລະ ຫຼາຍຜູ້ຄົນ ແລະ " ດວງຈຳປາ " ກໍຄືໜຶ່ງໃນຫຼາຍໆຜູ້ຄົນ ທີ່ເອົາຊື່ດອກໄມ້ຊະນິດນີ້ມາເປັນສັນຍະລັກບົ່ງບອກຕົນເອງ.

ແຕ່ "ດວງຈຳປາ" ດອກນີ້ສົ່ງກິ່ນຫອມ ແຕກ ຕ່າງຈາກດອກອື່ນໆ... ພວກເຮົາສຳຜັດກິ່ນຫອມໄດ ຈາກພົນງານ, ຈາກການປະດິດແຕ່ງທີ່ມີທັງ ບົດກະວີ ລະຄອນ, ນິຍາຍ, ເລື່ອງສັ້ນ, ບົດຄວາມ ແລະອື່ນ ອື່ນ... " ດວງຈຳປາ " ເຂົ້າສູ່ວົງການຂີດ ຂຽນ ມາດົນສົມຄວນ ຈົນອາຍຸຍ່າງເຂົ້າໄວກາງຄົນແລວ . ເລີ່ມຈາກເປັນນັກຂຽນສະໝັກຫລິ້ນ, ຕໍ່ມາເປັນເຄິ່ງ ອາຊີບ ແລ້ວກໍ່ກົ້ງເກືອກລິເລືອກັບວົງການຂີດຂຽນຕະຫຼອດມາຮອດສູ່ມື້ນີ້. ພົນງານທີ່ປະກົດຕໍ່ສາຍຕາ ຜູ້ ອ່ານ ກໍເປັນທີ່ຍອມຮັບກັນວ່າເຂົ້າຂັ້ນມາດຕະຖານ ແລະ ບາງເລື່ອງກໍ່ດີເດັ່ນຈົນໄດ້ຮັບການຄັດເລືອກໃຫ້ ນຳໄປເຜີຍແຜ່ໃນວາລະສຳຄັນ ເຊັ່ນ ລະຄອນເລື່ອງ " ຫອມກິ່ນບົວແດງ " .

ໃນໂຮມເລື່ອງສັ້ນຊຸດນີ້ ພວກເຮົາຈະໄດ້ສຳຜັດ ກັບຊີວິດຂອງຄົນ ຊຶ່ງສະທ້ອນໃຫ້ເຫັນຫນໍ່ແຫນງ ຂອງ ລະບອບໃຫມ່ສັງຄົມນິຍົມ - ເປັນພາບຈຳລອງ ຊີວິດ ຊຶ່ງໃນຕົວຈິງ ອາດຈະໃຊ້ເວລາດົນສົມຄວນກ່ອນທີ່ຈະ

ພົບເຫັນ - ແຕ່ກໍ່ບໍ່ແມ່ນວ່າ ບໍ່ມີເລີຍ - ບົດບາດ
ຂອງແມ່ຍິງໄດ້ຮັບການເຊີດຊູໃຫ້ເດັ່ນຂຶ້ນ ຈຶ່ງເວົ້າໄດ້
ວ່າຜູ້ອ່ານຈະຕ້ອງອິດສາຕົວລະຄອນໃນເລື່ອງສັ້ນບາງ
ເລື່ອງ ນັ້ນ ໝາຍຄວາມວ່າ ຜູ້ອ່ານເພດຍິງ ຈຳ
ນວນບໍ່ໜ້ອຍຈະນຸ້ກບິນ ເພື່ອຍົກຖານະບົດບາດ ຂອງ
ຕົນໃນສັງຄົມໃຫ້ສູງຂຶ້ນ ແລະ ກ້າວໄປສູ່ການປົດປ່ອຍ
ແມ່ຍິງຢ່າງສົມບູນໃນອະນາຄົດ. ຕົວລະຄອນ ເຊັ່ນ
ນາງ "ແກ້ວມະນີ" ໃນເລື່ອງ " ກ່ອນຈະເຖິງ ວັນ
ນີ້ " ເປັນແມ່ແບບຂອງແມ່ຍິງທີ່ເປັນເຈົ້າຕົນເອງ,
ແລະ ຕົວລະຄອນ ຊຶ່ງຜູ້ອ່ານຮູ້ຈັກພຽງແຕ່ວ່າ" ເຂົາ"
ໃນເລື່ອງ "ຄ່າກັບລາຄາ" ສ່ອງແສງໃຫ້ເຫັນຄົນ ຜູ້
ທະນົງໃນກຽດສັກສີຂອງພະນັກງານທີ່ບໍລິສຸດ ສັດຊື່.
ຈາກພາບຈຳລອງຂອງໜໍ່ແໜງ ທີ່ພົບໃນໂຮມເລື່ອງ
ສັ້ນຊຸດນີ້ ແນ່ນອນວ່າ ຜ່ານກາລະເວລາ ແລະ ບົດ
ຮຽນໃນພຶດຕິກຳຕົວຈິງ ພວກເຮົາອາດຈະພົບ ໜໍ່
ແໜງດັ່ງກ່າວໃນຊີວິດຕົວຈິງເພີ່ມຫຼາຍຂຶ້ນ - ນັ້ນ
ໝາຍຄວາມວ່າ ເຮົາມີຄົນໃໝ່ຄົນທີ່ສັງຄົມຕ້ອງການ

ດິນທີ່ເປັນອະນາຄົດຂອງປະເທດຊາດ.

ດອກຈຳປາ ບໍ່ຢຸດເຊົາສົ່ງກິ່ນຫອມ, " ດວງຈຳປາ " ກໍເຊັ່ນກັນ ຍັງຈະຜະລິດຜົນງານດ້ານ ວັນນະກຳໃຫ້ພວກເຮົາໄດ້ອ່ານ ແລະ ຈະຢູ່ໃນວົງການ ນີ້ຕໍ່ໄປຕະຫຼອດເທົ້າພອງໃດ - ຂ້າພະເຈົ້າເຊື່ອຈັ່ງຊັ້ນ.

ອຸທິນ ບຸນຍາວົງ

ກັນຍາ ໑໙໘໘



ເພື່ອນສິລະປິນ ຫຼາຍຄົນມັກຈົ່ມໃສ່ຫູວ່າການຟ້ອນ ການລຳ ເປັນອາຊີບທີ່ບໍ່ມີກຽດ...

ສັງຄົມຍັງບໍ່ຮັບຮູ້... ບໍ່ສູ້ໄປເປັນ ແມ່ຄ້າຊາວຂາຍ

ຂ້ອຍຂໍປະຕິເສດ !

ແລະ ຂໍຢັ້ງຢືນກັບເພື່ອນວ່າ ວັນໜຶ່ງ ທີ່ເພື່ອນເຄີຍໄຝ່ຝັນນັ້ນ ກາຍມາເປັນວັນນີ້ແລ້ວ..

ຂໍມອບເລື່ອງນີ້ ເປັນກຳລັງໃຈໃຫ້ແກ່ ສິລະປິນທຸກທ່ານ.



# ກ່ອນຈະເຖິງ ວັນນີ້

໑໙໘໓

**ທ່ານ** ອາດຈະເຄີຍຮູ້ຈັກຄູ່ຜົວເມັຍຫຼາຍໆຄູ່ ທີ່ວ່າ ກວ່າຈະມາລົງເອີຍ ສິ້ນສຸດຊີວິດໂສດກັບ " ຊູ້ຜູ້ສຸດທາຍ " ຕ່າງຝ່າຍຕ່າງກໍໄດ້ມີປະສົບການມາແລ້ວບໍ່ຫຼາຍກໍຫນອຍ ອາດເປັນບົດຮຽນທີ່ເຈັບແສບຊ້ຳໃຈ, ຫຼືຄວາມລະນຶກເຖິງທີ່ອ່ອນຫວານ ຊາບຊຶ້ງ ບໍ່ມີວັນຈືດຈາງ ສຳລັບຄູ່ຂອງຂາພະເຈົ້າແລ້ວ ນາງຖືວ່າ ບົດຮຽນ ຂອງນາງ ຝາກຮອງຮອຍ ເປັນຄະຕິເຕືອນໃຈຕະຫຼອດມາ ນາງຍິນດີຈະເລົ່າສູ່ໃຜໆຟັງສະເຫມີ ຄືດຽວກັບທີ່ນາງເຄີຍເລົ່າໃຫ້ຂາພະເຈົ້າຟັງ ແຕ່ຕອນກ່ອນຈະແຕ່ງດອງກັນພຸ້ນ.

ບ້ອຍ ວ່ານີສຽງລົດຈັກແລ່ນເຂົ້າເດີ່ນບ້ານມາ ແກ້ວມະນີ ກໍສ່ອງຫນ້າໃສ່ແວ່ນແຍງອີກຄັ້ງໜຶ່ງ

- ກາຍວ່າໄດ້ແລ້ວລະ! ແກ້ວມະນີບອກຕົວເອງດ້ວຍຍິ້ມຫວານ ທີ່ຣິມສົບສີບົວອ່ອຍຫນ່ອຍ ເບິ່ງບໍ່ຄັກ ອາດຈະວ່າ ແມ່ນສີທຳມະຊາດຂອງສາວໄວສິບແປດ ຄືນາງ ແຕ່ສາຍຕາຂອງຜູ້ຮູ້ຈັກໂລກຮູ້ຈັກສັງຄົມ ຈະເຫັນທັນທີວ່າ ມີການເສີມແຕ່ງພໍສົມຄວນ ໃນທົ່ວໃບຫນ້າ

ຈະເຮັດແນວໃດໄດ້ ຂອງວ່າອາຊີບມັນພາໃຫ້ໄດ້ແຕ່ງຢູ່ເກືອບທຸກມື້ ! ແກ້ວມະນີຈື່ວ່າ ຕອນຍັງນ້ອຍກວ່ານີ້ ນາງມັກເຮັດຫນ້າບູດຢູ່ເລີຍໆ ເມື່ອພວກຜູ້ໃຫຍ່ເພີ່ນແຕ້ມສີໃສ່ພີສົບ ແລະ ແກ້ມຂອງນາງ ກ່ອນຈະອອກສະແດງຟ້ອນ. ເທື່ອທຳອິດທີ່ຖືກແຕ້ມແຕ່ງ ແກ້ວມະນີໄຫ້ກາກຂຶ້ນກັບບາດທັນທີທີ່ສ່ອງແວ່ນເບິ່ງໂຕເອງ ເຫັນສົບແດງຈ່າຍວ່າຍ ປານນາງພີຍັກ ! ຕອນນັ້ນອາຍຸຄົງ ຈະປະມານແປດຂວບ. ເລີ່ມຕົ້ນເປັນດາວດວງເດັ່ນຂອງໂຮງຮຽນປີໜຶ່ງລະ. ຈາກນັ້ນມາ ພວກເອື້ອຍຄູກໍພາກັນອົດໆຢ່ອນໆແດ່ ໃນການ "ແຕ່ງຫນ້າ" ໃຫ້ນາງນ້ອຍແກ້ວມະນີຜູ້ສະງຽມຄຽມຄົມ.

ມາຮອດມື້ນີ້ ແກ້ວກໍກາຍເປັນນັກແຕ່ງຫນ້າໃຫ້ໆນັກຮຽນໄປແລ້ວເພາະປີນີ້ ເລີ່ມອອກສອນ ທັງຍັງເປັນຜູ້ກຳກັບແຕ່ງຕົວໃຫ້ນັກສະແດງຮຸ່ນນ້ອຍອີກ ແຕ່ສະເພາະນາທີນີ້ ແກ້ວຄິດວ່າ ໄດ້ເບົານີ້ລົງເປັນພິເສດລະໄປ - ກະຄະເນເອົາວ່າ ແຕ່ງສ່ຳນີ້ ກໍແມ່ນປານບໍ່ແຕ່ງເອົາສາເລີຍ.

ຄິດໄດ້ - ແກ້ວກໍຄວາເອົາກະເປົານ້ອຍ ສາຍຍາວຄ້ອງໃສ່ບ່າ ແລ່ນອອກມາສູ່ລະບຽງ. ແຕ່ພໍຮູ້ເນື້ອວ່າ "ແຂກ" ທີ່ມາຖ້າແມ່ນໃຜ ນາງກໍ ຢັ້ງບາດຕີນໄວ້ຢ່ານຈະສໍ່ສະແດງ ຄວາມດີໃຈຈົນອອກນອກຫນ້າ ມັນຈະເສັຽສັກສີຂອງລູກຜູ້ຍິງ.

ຊາຍໜຸ່ມທີ່ນັ່ງຢູ່ລົດຈັກເກົ່າໜັງ ຈົ້ງຕາເບິ່ງ ນາງຢ່າງຕື່ນໆ. ສາຍຕາແຫຼມຄົມຂອງເຂົາຄືຈັ່ງຊອກແກະໄງ້ຫາຫຍັງແບບແປກປະຫຼາດ ແຕ່ກໍ ແຝງຮອຍ ຖະນຸ ຖະໜອມບໍ່ແມ່ນໜ້ອຍ - ຕໍ່ພາບຂອງນາງສາວທີ່ພວມຍ່າງກົງມາຫາ.

- ຊຸດນີ້ລະ ຊິໄປໃຫ້ແມ່ອ້າຍເຫັນ ?

ສຽງຂອງເຂົາ...ແກວບໍ່ຈື່ວ່າ ແມ່ນຖາມແປນໆບໍ ຫຼືວ່າແກມເຢີ້ຍ ? ນາງເຮັດຕາກົ້ງເປັນຄຳຖາມຄືນໃສ່.

- ນ້ອງຄືບໍ່ນຸ່ງສິ້ນການທຳມະດາຫັ້ນ ?

ຮອດບັ້ນນີ້ ແກວຈຶ່ງຕີຄວາມໝາຍອອກວ່າ ເຂົາບໍ່ພໍໃຈໃຫ້ນາງນຸ່ງສິ້ນຜືນນີ້·ໄປໃຫ້ "ແມ່ຍ່າໃນອະນາຄົດ" ເບິ່ງ !

- ຕີນສິ້ນນ້ອງແສ່ວເອງໃດ໋ນີ້.

ແກວມະນີຕອບຢ່າງໄຮ້ດຽງສາ ແຝງຄວາມພາກພູມໃຈເຕັມປ່ຽມ. ກໍແມ່ນແນວນັ້ນແທ້ໆ. ເຖິງແມ່ນວ່າ ແກວອາຍຸຍັງບໍ່ຮອດຊາວ ແຕ່ການທີ່ເປັນລູກກຳພ້າ ຊີວິດພະເນຈອນໄປຢູ່ນຳຍາດພີ່ນ້ອງຫຼາຍເຮືອນມາແລ້ວ ເຮັດໃຫ້ແກວແອບເປັນຄົນນັກຄິດມາແຕ່ນ້ອຍໆ. ແກວຈະບໍ່ເຮັດຫຍັງລົງໄປເລີຍ ຖ້າບໍ່ໄດ້ຄິດຮົ່ນຕອງເສັຽກ່ອນ...ເທື່ອນີ້ກໍຄືກັນ ກໍຮູ້ກັນຢູ່ແລ້ວວ່າ ມື້ນີ້ເພິ່ນຈະພາໄປຢາມແມ່ເພິ່ນ ສິ້ນໃດແກວຈະບໍ່ວາງແຜນຢ່າງລະອຽດຖີ່ຖ້ວນ ? ນຸ່ງສິ້ນຜືນນີ້ ກໍແມ່ນນຸ່ງຢ່າງມີຈຸດປະສົງເປົ້າໝາຍ. ສິ້ນໄໝທຽມສີດຳທຳມະດາ-ດອກ ແຕ່ຕີນແສ່ວໄໝສີ - ສີມືຂອງນາງເອງ ເຄີຍນຸ່ງໄປໃສ່ຕໍ່ໃສ ມາແລ້ວນັບເທື່ອບໍ່ໄດ້ ນຸ່ງເທື່ອໃດກໍມີແຕ່ຜູ້ຊົມວ່າງາມ, ແສ່ວໄດ້ດີ ສະຫຼັບສີໄດ້ເໝາະເຈາະ ຜູ້ນຸ່ງກໍຄືສິ້ນ ສິ້ນກໍຄືຜູ້ນຸ່ງເອົາແທ້ເອົາວ່າ ວ່າຊັ້ນ !

ບໍ່ ອ້າຍສິມບູນຄົງບໍ່ເຂົ້າໃຈດອກ ! ເພິ່ນບໍ່ອາດເຂົ້າໃຈ ໄດ້ວ່າການທີ່ແມ່ຍິງເຮົາໄດ້ຮັບຄຳຊົມໃນສີມືປະດິດໃດໜຶ່ງນັ້ນ ມັນແມ່ນຍອດສູງແຫ່ງຄວາມພາກພູມໃຈຢ່າງໜຶ່ງ

ສົມມຸດນີ້ຫວງວ່າ :

- ຕົນສົ້ນນ້ອງຈັ້ງແມ່ນງາມ ນ້ອງແສ່ວເອງຫວະ ? ແລ້ວແກ້ວ ໄດ້ຕອບວ່າ :

- ເຈົ້າ.

ທີ່ນັ້ນກໍເຫຼືອກິນລະ ສຳຫຼັບແມ່ຍິງຜູ້ອ່ອນນ້ອມຄືນາງ ຈະບັງເກີດຄວາມເຊື່ອໝັ້ນໃນຕົນເອງນັ້ນມາຢ່າງອາດຫານ ເຖິງຂັ້ນວ່າ ມັ້ນ ຄັ້ງທຳອິດ ທີ່ຈະໄປຮູ້ຈັກກັບແມ່ອ້າຍສົມບູນ ໃສ່ສົ້ນຕີນແສວເອງໄປ ຈະໄດ້ມີອັນອວດ (ຖ້າເພິ່ນຖາມ) ວ່າຍິງສາວທີ່ລູກຊາຍເພິ່ນ "ຈະເລືອກ" ເປັນຄູ່ຄອງນັ້ນ ກໍບໍ່ຕ່ຳແຕ້ນປານໃດດອກ ພໍມີວິຊາ ມາກິນ ນຳບ້ານເມືອງເພິ່ນຢູ່...

ເລື່ອງມັນກໍຂັດກັນ ນັບແຕ່ຕອນຈະອອກຈາກເຮືອນພີ່ລະໄປ ແກ້ວມະນີເຊື່ອໝັ້ນໃນເຫດຜົນຂອງນາງເອງ ບໍ່ຍອມຂຶ້ນເມືອປ່ຽນສົ້ນຕີນອື່ນ !

**ເຮືອນ** ອ້າຍສົມບູນເປັນເຮືອນແຝດ ກົກເສົາໃຫຍ່ ຈົນຊຸກອດບໍ່ຫຼູ້ມ ປະກົດວ່າ ຢູ່ຈັກຊາວຄົນກໍຄົງໄດ້ ແຕ່ຕາມທີ່ຮູ້ມາກ່ອນ ກໍວ່າ ມີແຕ່ແມ່ ກັບ ລູກຊາຍຄົນດຽວ ຢູ່ນຳກັນ

- ແມ່ອ້າຍປາກບໍ່ມ່ວນ ແຕ່ໃຈດີດອກ ອ້າຍສົມບູນເຄີຍບອກແນວນີ້, ຖ້ານ້ອງຮູ້ເອົາໃຈເພິ່ນຈັກໜ້ອຍ ກໍສະບາຍ ເພິ່ນມັກແນວໃດ ເຮົາ ເຮັດນຳສາກໍແລ້ວເລື່ອງ !

ການພົບພໍ້ກັນເລີ່ມຂຶ້ນທີ່ຄອກໝູ !

ແກ້ວມະນີ ຍໍມືນົບເພິ່ນອ່ອນຊ້ອຍ ສົມເປັນສາວສິລະປະ. ແຕ່ຄືເພິ່ນ

ບໍ່ເຫັນ ຫຼື ຈະຖືວ່າເພິ່ນນັ້ນຈະເປັນ " ແມ່ພິວ ". ໃນອະນາຄົດບໍ່ ເພິ່ນຈຶ່ງເສີຍໃສ່ . ມີແຕ່ຄຳເວົ້າທີ່ນັ້ນ ທີ່ສະແດງອອກວ່າ ເຫັນແລວວານາງມາ.

- ຫມູອາຍສິບນັ້ນລະ ຊອກມາໃຫ້ແມ່ລ້ຽງ ພໍ່ບໍ່ໃຫ້ເສັຽນ້ຳເຂົ້າ! ແມ່ສາວນັ້ນ ເຂົາກໍມາຖາມຊື້ຢູ່ ແມ່ບໍ່ຂາຍ. ຊິເອົາລູກກ່ອນ ແລວຈຶ່ງຂາຍ ແມ່ນັ້ນນຳຫຼັງ.

ແກວບໍ່ມີຄວາມຮູ້ເລື່ອງຫມູດີປານໃດ. ກໍເຄີຍລ້ຽງຊອຍປ້າຢູ່ ແຕ່ບໍ່ສົນທັດກໍລະນີວ່າ ຫມູສາວຕອງລ້ຽງໄວ້ເອົາລູກນັ້ນ.

ເພິ່ນຄືບໍ່ຖາມ ບໍ່ລືມແມວອື່ນແດ່ນໍ້ ?

ລູກຊາຍເພິ່ນເປັນຜູ້ຕັກນ້ຳສາງມາຖອກ ລ້າງຄອກຫມູ ແມ່ເປັນຜູ້ເອົາຟອຍການພາວູຄວັດເຄັ່ຽ ນຳພື້ນຄອກ. ປະມານສິບນາທີ ຈຶ່ງແລວບໍ່ລິບູນ . ທຸກຄົນຕ່າວຫນາມາເຮືອນ.

- ນັ່ງກອງລ່າງນີ້ເທາະ ຄານຂຶ້ນຄານລົງ.

ຜູ້ເປັນແມ່ເວົ້າຄືຈິ່ມ. ເພິ່ນເປັນຄົນຮ່າງຕຸ້ຍພີ ຈີນຫນ້າຕູບ ຕາຫີບຮີ່ສອດແນນເບີ່ງແກວ ແຕ່ຫົວຮອດຕີນ ແລະ ແຕ່ຕີນຮອດຫົວ.

- ເຮືອນນັ້ນເພິ່ນໄດ້ນ້ຳຕານລັດມາເປັນສິບໆໂລ. ແມ່ເລີ້ມເລື່ອງທີສອງ.

- ຕູເຈົ້າຕັ້ງສອງຄົນ ຄັນໄປແຫຍ່ອາດຊິໄດ້ຫຼາຍກວ່ານັ້ນ. ຢູ່ ຮ້ານເອກະຊົນເຂົາຂາຍກິໂລລະສອງຮອຍແລວໃດ !

- ແມ່ຊິເອົາມາເຮັດຫຍັງຫວະຫຼາຍປານນັ້ນ ?

---

* ລາຄາເອກະຊົນສະໄຫມຍັງໃຊ້ເງິນປົດປ່ອຍ

---

ແກ້ວຖາມອອກມາຕາມປະສາຊື່.

- ຊຸຍ ເວົ້າຈາແຫລກ ! ສູເຈົ້າບໍ່ຫາງທ້ອນເງິນໄວ້ແຕ່ພີ້ ແມ່ບໍ່ມີພໍຊິໃຫ້ເຮັດດອງໃດ່ເນີ. ກະໄປຊື້ອອກມາເທື່ອສິບຊາວໂລ ຂາຍເອົາ ກຳໄລທ້ອນໄວ້ລະບໍ່ເຄີຍ !

ຮອດບັ້ນນີ້ ແກ້ວກໍ່ຈຶ່ງຮອດບານບໍ່ໂອ !

ຍັງບໍ່ແລວ ! ! !

- ເລື່ອງເຮັດດອງກໍຄືກັນ ! ແມ່ບໍ່ເຮັດເດັ້ອັນຊິເຊີນໝູ່ເຊີນກອງ - ບ່າວສາວສູເຈົ້າມາກິນກັນຍິ່ງ ບໍ່ຊ່ອຍພໍອັດນະ ! ແມ່ຊິເຊີນສະເພາະ ພວກພີ່ນ້ອງ ຜູ້ອາວຮັ່ງມີແດ່ ເພີ່ນຈັ່ງຊິໃສ່ຊອງມາໃຫ້ມັນກຸ້ມທຶນຄືນ ປ່ອຍໃຫ້ເປັນພາລະຂອງແມ່ເອງອັນນັ້ນນະ !

ແກ້ວມະນີຄຳແຫງ ຢາກກິນນ້ຳຂຶ້ນມາ ອ້າຍສົມບູນກໍ່ເກີນບໍ່ຄິດພໍ້ເລີຍ ນັ່ງແນມປາກກັນຢູ່ນີ້ລະ ! ພີ່ນ້ອງຂອງແກ້ວ ເພີ່ນຄົງບໍ່ໃຫ້ເລົ່າຫຼາຍຕິເພາະມີແຕ່ຜູ້ທຸກຍາກ ແກ້ວຈະເອົາໜ້າໄປໄວ້ໃສ. ພວກເພີ່ນທຸກບໍ່ພໍ ແຕ່ຫຼາຍຄົນກໍໃຈບຸນ ອິດສາລະຍຽງດູແກ້ວຈົນໃຫຍ່ ໄດ້ຮ່ຳໄດ້ຮຽນ. ແກ້ວຈະ ລືມບຸນຄຸນເພີ່ນເຖິງຂັ້ນບໍ່ເຊີນມາກິນດອງ ກໍຈະໂພດໄປລະຕິ ? ເອົາເທາະ ເລື່ອງນີ້ໄວ້ເວົ້າກັບສົມບູນ ຄາວໜ້າກໍ່ໄດ້ດອກ.

ນັ່ງຢູ່ກອງລາງເຮືອນ ເປັນຊົ່ວໂມງໆ ໃສ່ຊິໄດ້ພາກັນນັ່ງຢູ່ລ້າ. ແມ່ມີບຸງໝາກງິ້ວເປັນສິບລຽນແຖວໄວ້ ຊ່ອຍກັນແກະບໍ່ເຊົາມື ຫຼືເພີ່ນຈະຫາງເຮັດເສື່ອໃຫ້ກິນດອງນີ້ບໍ ? ແກ້ວທັງຄຶດທັງແກະ ທັງລະວັງ ຢ້ານງິ້ວຕິດສົ້ນສິດຳກໍປານນັ້ນ.

- ປີນີ້ ຢ້ານໄດ້ແຕ່ສາມໝື່ນງິ້ວກະດາຍ ລາຄາມັນດີແທ້ໆ ຜັດມາໄດ້ໜ້ອຍລົງ ງິ້ວອີດ ຈີນເຂົາມາເລັ່ງຢາກເອົາໄວ ຢູ່ແກະຊ່ອຍ ແມ່ຮອດຄ່ຳເດີ້ຈັ່ງເມື່ອ.

ແກ້ວມະນີ ນັ່ງແກະງິ້ວຮອດຄ່ຳແທ້ ບ່າວສາວຈາກັນໄວ້ວ່າ ຈະໄປ

ດວງຈຳປາ

ເບິ່ງຮູບເງົາຮອບບ່າຍ ກໍເລີຍຈາວ ແມ່ທາພາເຂົ້າມາສູ່ກິນຕອນທ່ຽງ ມີສົ້ມປານອຍ ໝາກເຂືອ ໝາກເຜັດສົດ ແລະ ໝາກຖົ່ວພູ ລວມມີ ສີ່ເຍື່ອງ !

× × ×

ນັ້ນແມ່ນການພົບປະຄັ້ງທຳອິດ ລະຫວ່າງລູກໄພ້ໃນອະນາຄົດ ກັບ ແມ່ຍ່າໃນອະນາຄົດ !

ແຕ່ກ່ອນທີ່ສົມບູນຈະຍື່ນໃບສະເໜີຂໍສ້າງຄອບຄົວ ກັບແກ້ວມະນີ ຕໍ່ການຈັດຕັ້ງຂອງທັງສອງກົມກອງ ເຂົາກໍມີຂໍ້ສະເໜີຕໍ່ນາງມາກ່ອນ ແລະນັ້ນເອງ ຄືບັນຫາທີ່ຕັດສິນ.

ເວລານັ້ນ ການສອບຫຍັບໝໍ່ທ້າຍປີເຂົ້າມາແລ້ວ ວຽກໂຮງຮຽນໜັກຂຶ້ນ, ທັງຈະກຳກັບສອບເສັງຜ່ານບົດຟ້ອນ ບົດຮອງແຕ່ລະຫອງ ຜັດຍັງມີລາຍການຈະໄປສະແດງຢູ່ສະຫະພາບໂຊວຽດ ຕອນພັກປະຈຳປີອີກ ນັ້ນກໍມີ ຫວິດແຫວວລະວາ ແກ້ວມະນີຈະໄດ້ເປັນຕົວເອກໃນບົດຟ້ອນໃໝ່.

ເວົ້າແທ້ແລ້ວ ແກ້ວກໍເປັນແນວນັ້ນມາແຕ່ໃດ. ຄັນເວົ້າເລື່ອງ ວຽກຂອງໂຮງຮຽນແລ້ວ ແກວ ຕື່ນເຕັ້ນສົນໃຈເປັນພິເສດສະເໝີ ຊ້ອມຢູ່ໂຮງຮຽນຍັງບໍ່ພໍ ເມື່ອເຮືອນຍັງໄປແຍງຊ້ອມຟ້ອນລອງເບິ່ງຕື່ມ ພວກຫຼານຢູ່ເຮືອນຕ້ອງຊ່ອຍເປັນຜູ້ຕິຊົມໃຫ້. ສິລະປະການຟ້ອນ ມັນຫາກເປັນແນວນັ້ນ ແຮງຮຽນແຮງຟ້ອນ ກໍແຮງຮູ້ວ່າ ຈຳເປັນຕ້ອງມີຄວາມຊຳນານ ແມ່ນບຸ່ນຽນຂຶ້ນ ຊັກໄຊ້ ການໝູນຕົວຕ້ອງຄອງ ບໍ່ມີເຊ ຫຼື ລົ້ມ. ຈັງຫວະຈະປ່ຽນ ທ່າແຂນຕ້ອງໄປຕາມສຽງເສບເນີບ ນາບ ນວຍ ນາຍ... ພໍດີກັນ ບໍ່ແມ່ນຮາວໄດຮາວປ່ຽນປຸບປັບ.

ພອນກຳລັງມັນນຳເລື່ອງຊ້ອມຟ້ອນບົດໃໝ່ ຊຶ່ງຄະນະອຳນວຍການ ກໍ ຍ້ອງວ່າ ແກ້ວຟ້ອນໄດ້ດີ. ພວກເພິ່ນເຊື່ອວ່າ ຄົງຈະບໍ່ຜິດຫວັງ ໄປສະແດງ ຕ່າງປະເທດເທື່ອນີ້ ແມ່ນງານສະແດງນາໆຊາດ. ຖ້າເຮັດໄດ້ດີ ລາວເຮົາ ກໍຈະມີຊື່ສຽງໄປທົ່ວຫຼາຍໆປະເທດໃນໂລກ ໂດຍສະເພາະ ບັນດາ ປະເທດ ອ້າຍນ້ອງສັງຄົມນິຍົມ ກໍຈະເຊີນເຮົາໄປສະແດງຕື່ມໃນປີຕໍ່ໆໄປ ສຳລັບ - ແກ້ວເອງ ຖ້າໄດ້ໄປນຳໝູ່ ກໍຖືວ່າເປັນໂອກາດພິເສດ ເພາະເປັນຄັ້ງທຳອິດ ໃນຊີວິດ ທີ່ຈະໄດ້ອອກຕ່າງປະເທດ.

ແລງນັ້ນລະ ອ້າຍສິນບຸນມາຫາຮອດເຮືອນ ລົມກັນຢູ່ລະບຽງ ສອງ ຕໍ່ ສອງ ກ່ຽວກັບໂຄງການຈະສ້າງຄອບຄົວໃນອະນາຄົດ. ຕອນໜຶ່ງ ສິນບຸນ ຜາຣິບວາ :

- ແມ່ອິ່ນນຳນ້ອງແຕ່ແນວດຽວ ເລື່ອງດອງເພິ່ນຈະຈັດການໃຫ້ໝົດ ວ່າພວກເຮົາບໍ່ມີເງິນ ກໍບໍ່ເປັນຫຍັງ ຕະຫຼອດຮອດບ່ອນຢູ່ບ່ອນນອນ ເພາະ ເພິ່ນຖືວ່າຈະເອົາໄພເຂົ້າເຮືອນ.

ເລື່ອງທີ່ວ່າ ແກ້ວຈະໄປຢູ່ນຳຍ່ານີ້ ກໍຫາກເວົ້າກັນມາດົນແລ້ວ. ຮູ້ ແຕ່ມື້ມັກກັບອ້າຍສິນບຸນທຳອິດພຸ້ນ. ຂອງວ່າເພິ່ນເປັນລູກຊາຍໂທນ ຕົນ ເອງຜັດເປັນກຳພ້າຢູ່ແລ້ວ ແກ້ວກໍກຽມພ້ອມຢູ່ ຂັ້ນວ່າ ໄດ້ຕົກລົງປົງໃຈ ຈະຮ່ວມຊີວິດກັນແລ້ວ ເພິ່ນວ່າແນວໃດກໍແນວລະ ແກ້ວຄຶດວ່າ ຊິພໍອົດ ທົນ ໄດ້ທຸກຢ່າງ ທະແມ່ນວ່າ ຜົວເມັຍຮັກແພງເອົາກັນ ຕະຫຼອດໄປ.

- ແມ່ໃຫ້ນ້ອງລາອອກຈາກວຽກເປັນຄູສອນຟ້ອນມາຕະສິນນີ້ນາ ເພິ່ນ ບໍ່ມັກມີລູກໄພ້ເປັນສິລະປະຟ້ອນກິນລຳກິນຄືບໍ່ຄັກ ເພິ່ນວ່າ !

ສຽງອ້າຍສິນບຸນກໍລົມໄປຈອດໆ ຄືທຳມະດາ ຄືກັນກັບນີ້ ເພິ່ນສະ ເໜີໃຫ້ປ່ຽນພິນສິ້ນນຸ່ງໄປຫາແມ່ຄືກັບ...

ແກ້ວມະນີ ນິດຈັງງັງຢູ່ຄາວໜຶ່ງ  ຄິດຫາຄຳເວົ້າໄດ້ ຈຶ່ງວ່າ :

- ຂັ້ນເພິ່ນຢາກໃຫ້ນ້ອງເມືອຢູ່ເຮືອນນຳເພິ່ນຊື່ໆຂັ້ນຕິ ? ແກ້ວ ຄິດຫາໝູ ສີ່ ໂຕບັກໃຫຍ່ຢູ່ຄອກ ພ້ອມດ້ວຍລູກນ້ອຍໆຂອງມັນ ທີ່ຈະເກີດມາ ຈຳນວນຫລາຍສິບໂຕ... ຄິດເຫັນໝາກງົວສິບບຸງ...ແຕ່ກໍ່ບໍ່ໄດ້ຄິດຈົ່ງຄິດວຽງດອກ.

ສຽງອ້າຍສິນບູນຕອບວ່າ :

- ບໍ່ວ່າ  ເພິ່ນຊິເສັ້ງຮ້ານຂາຍເຄື່ອງຍ່ອຍໃຫ້ນ້ອງຢູ່ຕະຫລາດແລງ ເພິ່ນວ່າເຮັດແນວນີ້ ບໍ່ມີຫລູບບໍ່ມີເສັຽວ່າເດ້. ມີແຕ່ນັ່ງນັບເອົາເງິນເກັບເລັກເກັບນ້ອຍ...

- ອ້າຍສິນ  ! ! !

× × ×

ແກ້ວມະນີ ຈື່ບໍ່ໄດ້ດອກວ່າ ແລງນັ້ນໄດ້ເວົ້າວ່າ ຫຍັງແດ່ກັບ "ອະດີດ" ຂອງຕົນ ແຕ່ກໍ່ຄົງຊຸ່ນແຮງສົມຄວນ ແລ້ວ ວິຖີຂອງສິນບູນ ກັບ ແກ້ວ ກໍ່ບໍ່ໄດ້ວຽນມາບັນຈົບພົບພານກັນອີກ.

ສຳລັບຂ້າພະເຈົ້າ ໃຜຈະວ່າແນວໃດກໍຕາມ. ເທົ່າທຸກມື້ນີ້ ເວລາແກ້ວ ອອກສະແດງ ຂ້າພະເຈົ້າຈະຕ້ອງນັ່ງຢູ່ແຖວໜ້າ ຊົມລາຍການຈົນສຸດ ຢ່າງຊື່ນຊົມຍິນດີ  ໃຜອາດຈະຄິດວ່າ ຂ້າພະເຈົ້າ ເຫີເມັຽ ອອກແຮງຕົບມືໃຫ້ແກ່ການສະແດງຂອງນາງ ແລະ ໝົດຄະນະຈົນມືຊ້ຳມືແດງ . ຂ້າພະເຈົ້າພົບນາງຄັ້ງທຳອິດໃນລາຍການສະແດງໃຫຍ່ ຂອງສູນກາງ ນັກ

ທີ່ນາງເປັນສິລະປິນນັກຟ້ອນ ທີ່ສາມາດຜູ້ໜຶ່ງຂອງປະເທດເຮົາ ຈົນຕິດ ອົກຕິດໃຈ ນຳຮູ້ຈັກຮັກແກວນ. ເຖິງແມ່ນວ່າ ວັນເວລາຈະຜ່ານໄປດົນ ດົນ ຈົນລູກສາວກົກພວກເຮົາຮຽນຢູ່ປະຖົມໜຶ່ງແລ້ວ ແຕ່ຄວາມຮູ້ສຶກພາກພູມໃຈ ໃນຄວາມສາມາດຂອງນາງ ຍັງມີຢູ່ເຕັມປ່ຽມ ໃນທຸກຮອບການສະແດງທີ່ຂ້າພະເຈົ້າໄດ້ຊົມ.

× × ×

ເທື່ອນີ້ ກໍເຊັ່ນດຽວກັນ ເມື່ອການສະແດງຮັບໃຊ້ແຂກຕ່າງປະເທດ ທີ່ມາ ຢ້ຽມຢາມສັນທະວະໄມຕີ ສິ້ນສຸດລົງ ນັກສະແດງຈຳນວນກວ່າສີ່ສິບຄົນ ອອກມາຢືນເປັນສາມແຖວ ຜູ້ນ້ອຍຢູ່ແຖວໜ້າແລະສູງຂຶ້ນຕາມລຳດັບ ຊຸດແຕ່ງກາຍຫຼາຍຫຼາກສີ ຂອງຊົນເຜົ່າລາວ ງົດງາມ ລະລານຕາ ພູນ ແກວມະນີ! ໃນຊຸດຟ້ອນອວຍພອນ ປະດັບປະດາດ້ວຍເຄື່ອງແກ້ວແວວວາວ ຢືນຢູ່ໃຈກາງຂອງຄະນະຮອຍຍິ້ມຫວານ ຫວານໂຊຍ ອອກມາສູ່ຜູ້ຊົມທົ່ວໂຮງ. ບັນດາຜູ້ນຳເຮົາໃນຄະນະຮັບຕ້ອນ ໄດ້ນຳພາຜູ້ນຳຕ່າງປະເທດຂຶ້ນໄປມອບ ກະຕ່າດອກໄມ້ ຊົມເຊີຍສິລະປິນ ນັ້ນ ! ແກວມະນີ ອີກນັ້ນລະ ທີ່ກ້າວອອກ ຍໍມືນົບອ່ອນຊ້ອຍ ທ່ານຜູ້ນຳຕ່າງປະເທດ ຍື່ນມື ໃຫ້ນາງສຳຜັດ ສຽງຕົບມືດັງກຶກກ້ອງຂຶ້ນທົ່ວໂຮງລະຄອນແຫ່ງຊາດ ບັນດາຜູ້ຊົມແຖວທາງໜ້າ ລຸກຂຶ້ນຢືນ ເພື່ອເປັນກຽດແຖວແລ້ວ ແຖວເລົ່າ. ແຮງແຂກຕ່າງປະເທດ ຈັບມື ຊົມເຊີຍສິລະປິນຢູ່ດົນ ແລະ ສັ່ນແຮງ ບັນດາຜູ້ຊົມກໍແຮ່ງຍິນດີນຳຕື່ນທະວີ ຄາຍກັບວ່າ ຄົນລາວເຮົານະທີ່ນີ້ ທຸກຄົນພວມຢືນ ຂຶ້ນນ້ອມຮັບຄຳຊົມເຊີຍ ຂອງພວກເພິ່ນ ຢ່າງພ້ອມພຽງກັນ.

ຂ້າພະເຈົ້າຢືນຖ້າແກ້ວນະມີຢ່າງໃຈຈົດຈໍ່ ບໍ່ເຄີຍຫລຸດລະໃນການຮັບສົ່ງນາງ ຄາວລູກຍັງນ້ອຍ ກໍເບິ່ງແຍງລູກຖ້າ. ຂ້າພະເຈົ້າປາດຖະໜາຢາກໃຫ້ແກ້ວໄດ້ສະແດງໄປຈົນເຖົ້າຄວາມສາມາດ ຫຼື ອາຍຸສັງຂານ ກາຍເປັນສິ່ງກີດຂວາງ ແຕ່ບໍ່ແມ່ນແນວຄິດ ມາເປັນສິ່ງກີດຂວາງ ວິຊາອາຊີບອັນມີກຽດຂອງນາງນີ້. ພຸ້ນ ! ນາງປ່ຽນເຄື່ອງແລ້ວ ພວມຍ່າງກັບມາ ຕິດຕາມດ້ວຍໃຜຜູ້ໜຶ່ງ ທີ່ຂ້າພະເຈົ້າບໍ່ປະກົດຮູ້ຈັກໜ້າ. ພໍມາຮອດບ່ອນ ຂ້າພະເຈົ້າຢືນ ຊາຍຮ່າງພີເອເລ ທອງສວດປານອີ່ຕາພານ ກໍເອີ້ນໃສ່ ແກ້ວສຽງຕື່ນເຕັ້ນ ທັງສອງລົມກັນສອງສາມປະໂຫຍກ ແລ້ວກັບມາທີ່ ຂ້າພະເຈົ້າ.

- ອ້າຍ, ນີ້ເດ້ອ້າຍສົມບູນ ໝູ່ນ້ອງແຕ່ດົນໆພຸ້ນ. ແກ້ວ ແນະນຳໃຫ້ຂ້າພະເຈົ້າຮູ້ຈັກ. ຕາມເຄີຍຮູ້ຈາກແກ້ວ ກໍວ່າສົມບູນຮຸ່ນຮາວຄາວດຽວກັບຂ້າພະເຈົ້າ ແຕ່ເປັນຫຍັງ ບັດນີ້ ເຂົາຈຶ່ງຊົງແກ່ກວ່າ ອາຍຸປານນີ້

ແກ້ວຊອຍໃຫ້ເຂົາບໍ່ເກີ້ເຂີນປານໃດ ແຕ່ທ່າທີ ທີ່ຈັບມືກັບຂ້າພະເຈົ້າກໍສະແດງວ່າ ເຂົາມີຄວາມຂະມ່າອາຍບໍ່ໜ້ອຍເລີຍ ບໍ່ສົມກັບວ່າ ເຂົາ ກໍເປັນພະນັກງານຂັ້ນສຳຄັນຜູ້ໜຶ່ງ ຈຶ່ງຖືກເຊີນມາໃນລາຍການນີ້.

- ຄອບຄົວເດ້ລະ ? ຂ້າພະເຈົ້າທັງຖາມທັງງວາກຊອກຫາ ວ່າຈະມີແມ່ຍິງທີ່ເປັນຄູ່ຊີວິດຂອງເຂົາຢູ່ໜ່ຶງຫັ້ນ.

- ໂອຍ ທາງນັ້ນບໍ່ໄດ້ໄປໄດມາທາງໃດນຳດອກ ຄາລູກແດ່ ຂາຍຂອງຮອດຄ່ຳ ບໍ່ມີຫວັງຊິໄດ້ເຫັນລາຍການດີໆ ຄືນີ້ ນຳເພິ່ນຈັກເທື່ອດອກ

ສົມບູນທາທາງອາຍ ແລະ ຖ່ອມຕົວ.

ແກ້ວຍັດພ້ວດອກກຸຫຼາບສີແດງຊ້ຳ ສົດຊື່ນ ຄືຕັດມາໃໝ່ໆ ໃສ່ມື ຂ້າພະເຈົ້າ ນາງຍິ້ມ ແລະ ບອກວ່າ :

- ອັນນີ້ພູດຂອງອ້າຍ ຄາຕົບມືແຮງ ໝູ່ນ້ອງຝາກມາ.

ຂ້າພະເຈົ້າຍົກດອກໄມ້ສີດຂຶ້ນສູບດົມຢ່າງອອນຊອນ.

ບໍ່ພຽງແຕ່ອອນຊອນດວງດອກ ອັນເປັນສັນຍາລັກແຫ່ງມິດຕະພາບ - ຈາກແຂກເມືອງ ລະດັບຊາດນັ້ນດອກ ແຕ່ຂ້າພະເຈົ້າຍັງອອນຊອນ ພາກພູມໃຈໃນຄວາມສາມາດຂອງສິລະປິນລາວ ແລະ ວົງການສະແດງຂອງລາວທີ່ພວມເຕີບໃຫຍ່ຂະຫຍາຍຕົວ. ໃນນັ້ນ ແນ່ນອນ ແກວມະນີ ເມັຍຮັກຂອງຂ້າພະເຈົ້າ ກໍມີສ່ວນປະກອບຢ່າງຫ້າວຫັນ. ເປັນຕາຕົບມືແຮງໆ ແທ້ໃດ !



# ຂອບໃຈ

ສຸດທີ່ຕີນແປດເປື້ອນ ຫນອງຫມົ່ນມົວສີ
ແຕ່ວ່າ ຄຸນຄວາມດີ ບົ່ມຊອນໃນນິ້ວ
ນີ້ລະ ແຮງຊູຊວານ ແຮງງານຂອງໂລກ
ຂອບໃຈ ຂອບໃຈຄຸນຜູ້ເຈົ້າ ທີ່ດຳເຂົ້າໃສ່ນາ.



ພາບ: ສ.ເຊລະນອງ

# ພໍ່ແມ່ຂອງລູກ

ມາລາ ຫອມຫວງເຮົ້າ ໃນທົ່ວພິພົບ ກໍດີ
ຍົກມອບເວນວາງສະຫນອນ ແມ່ດິ່ງພຽງພ້ອມ
ຍັງໄປ່ທັນສະເຫນີດ້ານ ດວງໃຈເຮົາລູກ
ປາຖະຫນານິບນອມ ພະນິນແກວແກມໃຈ

ສະກຸນາຣ່ຳຮອງ ສຽງມ່ວນຊວນສະດັບ
ທຸກທົ່ວທັງໂລກາ ຊື່ນຊົມແຊວຊອງ
ຍັງໄປ່ທັນສຽງຮອງ ມະໂນໃນຊ່ອຍຊື່ນ
ບຸຄຄ່ຳເພັງເພື່ອເຈົ້າ ຫວັງໃຫ້ແມ່ຍິນ ດອກນາ

ຄວາມຮັກໃນແມ່ລົ້ນ ລວດຝັ່ງນະທີໃຈ ລູກດາຍ
ຫາກກ່າວຄຳໃດສະເຫນີ ປຽບປານທັນອາງ
ຮັກແມ່ນິພົນເທົ້າ ທະວີກູຕິໂກດ
ຍັງໄປ່ເພີຍພໍ່ໃຫ້ ເທັນຮູ້ສ່ວນດຽວ ແມ່ເອີຍ

ບາງເທື່ອອັນທີ່ເຮົາຄິດໄວ້ວ່າ "ຜິດ" ບໍ່ໜ້າໃຫ້ອະໄພໄດ້ຊ້ຳ ກາຍເປັນເລື່ອງທຳມະດາສາມັນສຳລັບຄົນບາງຄົນທີ່ມີຄວາມເຂົ້າອົກ ເຂົ້າໃຈຕໍ່ເພື່ອນມະນຸດ, ຍິນດີໃຫ້ອະໄພແກ່ສິ່ງທີ່ຫຼາຍຫຼາຍຄົນເຫັນວ່າ "ຜິດພາດ". ອ້າຍສົມອົກແມ່ນຕົວແທນ "ສົມມະໂນ" ທີ່ຂ້ອຍຢາກ ໃຫ້ມີຫຼາຍໆຢູ່ໃນທົ່ວສັງຄົມຂອງເຮົາ.



ຂ້ອຍບໍ່ຄວນເຮັດແນວນີ້ເລີຍ !

ຂ້ອຍກັບອ້າຍສົມອົກ ຮັກແພງກັນ ບໍ່ແມ່ນມື້ນີ້ມື້ວານ ບໍ່ແມ່ນວ່າ ບໍ່ຮູ້ໃຈກັນ ແຕ່ຂ້ອຍເປັນຫຍັງຈຶ່ງບໍ່ກ້າ ?

# ຂ້ອຍຜິດເອງ

໑໙໘໘

**ອ້າຍ**ສົມອົກກັບຂ້ອຍ ຮູ້ກັນ ຊິແມ່ນຊາວປີພໍດີ. ພຸ້ນລະ ! ແຕ່ຄາວຂ້ອຍຫາກໍຂຶ້ນບ່າວແອວ ໄປເຂົ້າທະຫານລະດົມ. ເວລານັ້ນ ອ້າຍອົກເປັນ ຄູເຝິກ. ເມື່ອໄປປະຈຳການສູ້ຮົບຢູ່ຂຸມຄອງຕ້ານຈັກກະພັດອາເມລິກາ ນຳກັນ ອ້າຍອົກກັບຂ້ອຍຈຶ່ງບໍ່ພຽງແຕ່ແມ່ນນາຍກອງກັບອ້າຍນ້ອງນັກຮົບທຳມະດາ ແຕ່ແມ່ນອ້າຍ - ແມ່ນນ້ອງກັນປານວ່າ ຄານນຳກັນອອກມາ !

ລາວຊຸກຍູ້ໃຫ້ຂ້ອຍຫ້າວຫັນໃນຫນ້າທີ່ວຽກງານ ລາວກໍ່ສ້າງໃຫ້ ຂ້ອຍເປັນຄົນສັດຊື່ ຮັກແພງຫມູ່ເພື່ອນ ຂ້ອຍຖືວ່າ ເປັນຜູ້ເປັນຄົນໄດ້ດິບໄດ້ດີ ມາເທົ່າຊູ່ມື້ນີ້ ກໍຍ້ອນໄດ້ຢູ່ໃກ້ຊິດກັບອ້າຍອົກມາດົນ ແລະ ຮູ້ ແບບຢ່າງອັນດີ ຂອງລາວ ກໍຝັງແຫນ້ນຢູ່ໃນຄວາມຊົງຈຳຂອງທະຫານຮຸ່ນນ້ອງຄືພວກຂ້ອຍ. ທະຫານພວກເຮົາຫມົດກອງ ບໍ່ມີໃຜ ຈະລືມບຸນຄຸນ ແລະ ຄຸນງາມຄວາມດີຂອງອ້າຍອົກໄດ້. ອັນນີ້ແມ່ນຂ້ອຍກ້າຮັບປະກັນແຫລະ !

ຍາມເສິກ ລາວກ້າສູ້ ກ້ານຳຫນ້າພາທາງ

ຍາມອຶດຫິວ ພັດເສັຽສະຫລະໃຫ້ອ້າຍນ້ອງໄດ້ກິນກ່ອນ

ຍາມຍາກລຳບາກ ລາວທົນທານ ຢູ່ນຳພວກເຮົາ. ບໍ່ເຄີຍຖືຕົນເປັນນາຍ ! ຍາມຜິດພາດລາວອອກຮັບຕາງ - ອ້າຍນ້ອງບໍ່ບູຊາກໍບໍ່ທົນ !

ແຕ່ ອະນິດຈາ ! ປານນັ້ນ ຂ້ອຍຍັງກ້າເຮັດຕໍ່ລາວແນວນີ້ ! ຂ້ອຍຜິດແທ້ໆທີ່ບໍ່ຍອມບອກຄວາມຈິງແກ່ລາວ !

x x

x

ພວກເຮົາ ອ້າຍອົກກັບຂ້ອຍ ຈາກກັນໄກ ຄາວບ້ານເມືອງເຮົາ ພວມກ້າວເຂົ້າສູ່ພາວະສັນຕິພາບ ສະໄຫມຄະນະແນວລາວຮັກຊາດພວກເຮົາ ເຂົ້າມາປອງດອງຊາດຢູ່ວຽງຈັນ ແລະ ສ້າງຕັ້ງລັດຖະບານປະສົມ ຂຶ້ນໃນປີ - ໑໙໗໔. ຂ້ອຍປ່ຽນອາຊີບມາເປັນນັກຂ່າວ. ກໍເລີຍໄດ້ມາປັກຫຼັກເຮັດວຽກຢູ່ວຽງຈັນກ່ອນຫມູ່. ແລ້ວກໍເລີຍບໍ່ຮູ້ຂ່າວຄາວວ່າ ອ້າຍອົກໂຍກຍ້າຍໄປປະຕິບັດງານຢູ່ໃສ.

ວົນນຳວຽກຢູ່ຫຼາຍປີ ຜູ້ຊິເອົາລູກເອົາເມັຽ ຜູ້ຊິກັບຄືນບ້ານເກີດ ເມື່ອເຮັດວຽກຢູ່ທ້ອງຖິ່ນ... ແລ້ວຢູ່ບໍ່ຢ່າ ຂ້ອຍກໍໄດ້ເດີນທາງໄປທັດສະນະສຶກສາຫຼາຍເມືອງ ໃນສະຫະພາບໂຊວຽດ ຄື ມົດສະກູ, ໂວນກາກຼາດ, ຄິເອັຟ - ແລະ ເລນິນກຼາດ ກໍໄປເບິ່ງຊົມສະຖານທີ່ສຳຄັນທາງປະຫວັດສາດ, ຄວາມກ້າວຫນ້າທາງດ້ານເສດຖະກິດ ແລະ ວັດທະນະທຳສັງຄົມ ຂອງປະເທດເພິ່ນ

ເພື່ອເປັນຄວາມຮູ້ຮອບຕົວ ໃຫ້ພວກເຮົາເອົາມາຂີດຂຽນສູ່ພໍ່ແມ່ພີ່ນ້ອງ ລາວ ອານັ້ນລະ ວ່າຜົນສຳເລັດຂອງການກໍ່ສ້າງສັງຄົມນິຍົມ ຢູ່ບ້ານເພິ່ນ ມັນໄດ້ ດີຂະໜາດໃດແລ້ວ ຖືວ່າການໄປຄັ້ງນີ້ ແມ່ນໄດ້ກຳໄລຊີວິດຫຼາຍສົມຄວນ.

ທີ່ນະຄອນ ເລນິນກຣາດ-ອະດີດ ກຸງ ແຊັງ ປີແຕກບຸກ ຫຼື ອີກຊື່ນຶ່ງ ເປໂຕຣກຣາດ - ເມືອງອູ່ແຫ່ງ ມະຫາປະຕິວັດເດືອນຕຸລາ ແມ່ນ ນະ ທີ່ ນະຄອນແຫ່ງສິລະປະ ນີ້ ເອງ ລັດສັງຄົມນິຍົມແຫ່ງທຳອິດໃນໂລກໄດ້ຮັບການສະຖາປະນາຂຶ້ນ.

ແລ້ວນັ້ນ ເມື່ອພວກເຮົາ ຂະບວນນັກຂ່າວ ກັບມາແຕ່ຊົມ ສິລະປະ ບັນເລ ສະໄໝຢູ່ໂຮງມະໂຫລະສົບເລນິນກຣາດ ກໍ່ຕົກເປັນເວລາ ສິບໂມງ - ປາຍແລ້ວ ຈຶ່ງຟ້າວກິນແລງກັນຢ່າງແຊບນົວ ເພາະມັນເລີຍຍາມກິນ ໄປແດ່ (ປົກກະຕິກິນ ໗-໘ ໂມງແລງ ແຕ່ນັ້ນ ຕ້ອງໄປຊົມລາຍການຮອບ ໗.໓໐ ໂມງ ຈຶ່ງກິນເຂົ້າຕາມຫຼັງ - ຕາມທຳນຽມເພິ່ນ !) ຊວາວ່າແລ້ວ ພາ ເຂົ້າກໍ່ເປັນເວລາເກືອບທ່ຽງຄືນພໍດີ. ພວກເຮົາທະຍອຍກັນຂຶ້ນ ຕູ້ໄຟຟ້າ - ແທນຂັ້ນໄດ ເມື່ອຊັ້ນທີ ໑໘ ຊຶ່ງນັກຂ່າວລາວເໝົາເກືອບໝົດປີກຊ້າຍ ຂອງ ຕຶກ. ບ່ອຍວ່າ ຂ້ອຍກ້າວຂາອອກຈາກ ລິຟ ກໍເຫັນໝູ່ຄູ່ເອະອະກັນປານ ວ່າ ມີເຫດຮ້າຍແຮງ ທີ່ແທ້ລະແມ່ນວ່າ ມີນັກສຶກສາລາວຈຳນວນໜຶ່ງ ມາ ຄອຍຖ້າພົບພວກເຮົາຢູ່ທີ່ ລະບຽງຮັບແຂກຂອງຊັ້ນນີ້.

ຕ່າງກໍ່ຈັບມືກັນ ເປັນສົນລະວົນ ຄົນລາວບໍ່ມີແນະນຳຊື່ໂຕເອງ ດອກ

ເຫັນໝູ່ຈັບ ກໍຈັບກັນໄປ ມະນຶງມະນຶດ ຈັກຍິງ ຈັກຊາຍ ຢ່າງເກົ່ງກໍຖາມຂະເຈົ້າວ່າ :

- ນ້ອງຮຽນວິຊາໃດນໍ້ ? "
- ມາໄດ້ຈັກປີແລ້ວ ? "

ຯລຯ

ຂ້ອຍແວະເຂົ້າໄປຊອກຈັບມືຂະເຈົ້າ ເພາະຕື່ນເຕັ້ນນຳ ທີ່ໄດ້ຍິນວ່າມີນັກສຶກສາລາວມາຢາມ

- ເຮັດໃດ໋ພວກເຈົ້າຮູ້ວ່າ ພວກຂ້ອຍມາເຊົາຫນີ້ ? " ຂ້ອຍຖາມໂວ່ໂວ່ ອອກໄປ. ຂອງວ່າງຶດງໍທີ່ເມືອງເພີ່ນກວ້າງຂວາງກະດໍ້ ບໍ່ຊິ່ງວ່າ ຈະພໍ້ກັນໄດ້ງ່າຍໆ.

- ກະອ້າຍໃຫຍ່ເຮົາລະບໍ່ - ຫຼຽວເຫັນຜູ້ສາວນຸ່ງສິ້ນ ໃສ່ສາຍແອວເງິນ ຢ່າງຢູ່ຫມໍ່ໆໂຮງແຮມ ນີ້ກໍເລີຍນຳມາ. ຖາມພວກຍາມວ່າ ມີຜູ້ ແທນລາວມາເຊົາຢູ່ຫນີ້ບໍ່ ? ເຂົາຕອບວ່າ ມີລົດເມຫນຶ່ງພໍ່ດີວ່າຊັ້ນ " ແລວ ນັກສຶກສາຄົນນັ້ນ ກໍຫົວ.

ຂ້ອຍກໍຫົວ ອອນຊອນນຳສາເຫດທີ່ພາໃຫ້ຄົນລາວພວກເຮົາໄດ້ພໍ້ກັນ . ຈັບມືຜູ້ນັ້ນ ຈັບມືຜູ້ນີ້ ເບິ່ງຫນ້າກັນພອນ ກໍເລີຍມາຮອດບ່ອນຂັ້ນວ່າ:

- ອ້າວ ອ້າຍສິນອິກ ອ້າຍຫວະ ?

- ອ້າວ ກະອ້າຍແຫລະ ໂຕມາແນວໃດຫນີ້ ? ອ້າຍອິກຄົງບໍ່ເຄີຍໄດ້ຍິນມາກ່ອນ ວ່າຂ້ອຍປ່ຽນອາຊີບແຕ່ດົນ ແລະຂ້ອຍກໍຄຶດບໍ່ອອກຈັກດີ້ ວ່າຈະມາພໍ້ອ້າຍອິກຢູ່ພີ້.

ສອງອ້າຍນ້ອງພວກເຮົາ ກອດກັນພັນກຽວ ຈັ່ງແມ່ນຊາດຂ້ອຍດີໃຈ . ເບິ່ງຄວາມຈື່ຈຳແຕ່ອະດີດມັນລຽນແຖວກັນມາ ສອງຄົນພວກເຮົາປ່ຽນກັນເລົ່າ ປ່ຽນກັນເວົ້າ ຕື່ນເຕັ້ນ ບໍ່ນຶກບໍ່ຝັນ!

ຄືນນັ້ນ ຂ້ອຍເລີຍຂໍເປັນ ເຈົ້າມືລ້ຽງເບັຍອ້າຍໃຫຍ່ (ແຕ່ລະຊັ້ນໂຮງແຮມ ເພີ່ນມີເບັຍ ແລະ ນ້ຳຊາໄວ້ບໍລິການແຂກ).

ນັ່ງຢູ່ຕັ່ງຮັບແຂກ ຂອງຊັ້ນທີ ໑໘ ຂ້ອຍເຊີນເອົາ ໜູ ສີທາຄຳ ມາຮ່ວມວົງ ຕ້ອນຮັບອ້າຍອິກ-ນິນອງສາວນັກຂ່າວ ທີ່ໄປນຳກັນ ສາມ ນາງ ມາສົມທົບນຳ.

- ສົ້ນລາວນີ້ ມີສະເໜ່ດຶງດູດແທ້ໆ, ອ້າຍອິກວ່າ, ເຫັນຢູ່ໃສ ກໍຈື່ໂລດ ແລະ ກໍໝັ້ນໃຈໄດ້ວ່າຈະແມ່ນ ແມ່ຍິງລາວ ເພາະສົ້ນລາວ ບໍ່ຄືສົ້ນແມ່ຍິງຊາດໃດອີກໃນໂລກ !

ອ້າຍອິກເວົ້າແບບຄົນນິຍົມຊາດ ແລະ ຄົນຄິດຮອດບ້ານແຮງ ຂ້ອຍເຫັນແສງຕາລາວສັກໃສ່ສາວນັກຂ່າວເຮົາ ນາງໜຶ່ງຢ່າງບໍ່ວາງ.

ແລ້ວພວກເຮົາກໍຍົກຈອກໃຫ້ກັນ ຜູ້ນັກສາຍແອວນ້ອຍ ແລະ ຈື່ສົ້ນລາວໄດ້ໄວ !

ເຈົ້າຂອງສາຍແອວຍິ້ມອາຍໆ - ແມ່ນສີວຽງຄຳ ນັກຂ່າວຍິງ ຈາກ ນ.ສ.ພ. ທີ່ຄົນນິຍົມຫຼາຍ ຢູ່ໃນທົ່ວປະເທດເຮົາ. ນາງຫາກໍເຂົ້າມາ ເປັນນັກຂ່າວພຽງແຕ່ສອງສາມປີ ແຕ່ມີຄວາມສາມາດເປັນພິເສດ ມີຜົນງານດີເດັ່ນ ຈຶ່ງຖືກແຕ່ງຕັ້ງໃຫ້ມາໃນຂະບວນພວກເຮົາ ຊຶ່ງໂຮມມີທັງຂັ້ນບັນນາທິການແລະນັກຂ່າວ ອາວແກ່ແດ່ ຄືຂ້ອຍ ຈັ່ງຊີ້ - ນັບວ່າ ສີວຽງຄຳ ອາຍຸອ່ອນ ທີ່ສຸດໃນກຸ່ມພວກເຮົາ ນາງອາຍຸແຕ່ ຊາວປີ.

ຂ້ອຍສົນໃຈ ວ່າອ້າຍອິກມາຮຽນຫຍັງ - ມາຢູ່ຄົນປານໃດແລ້ວ ຊຶ່ງລາວກໍເວົ້າສູ່ຟັງຢ່າງອາລົມດີ.

- ອ້າຍເປັນທະຫານມາດົນ ຂັ້ນເທິງເຫັນວ່າ ຢາກໃຫ້ຍົກລະດັບ ວິຊາການ ພໍດີມີທຶນແພດສາດ ອ້າຍເລີຍສະໝັກມາ. ກະຣຽນຍາກ - ແຕ່ອາຍກໍ່ຕ້ອງອົດທົນ. ສະຫລະໝົດທຸກຢ່າງ - ປານມາບວດເອົາໂລດ ຈຶ່ງ ຣຽນໄດ້ - ເພາະອາຍຸເຮົາມັນຢາກກາຍອິດຣຽນລະ !

- ໃຜວ່າ ? ອ້າຍຍັງບໍ່ແກ່ !

- ນ້ອງໃຫ້ອ້າຍ ໔໒ ທໍ່ນັ້ນ !

ສຽງພວກນັກຂ່າວເຮົາແຊວງ ຂຶ້ນ.

ຂ້ອຍຫົວຢ່າງມີໄຊ ເພາະອາຍຸອ້າຍອົກທໍ່ນັ້ນ ມັນຕ້ອງຄູນເກືອບ ສອງຈຸດພູ້ນຈຶ່ງຖືກ. ຂ້ອຍພາກພູມໃຈໃນໂຕອ້າຍອົກເປັນທະວີຄູນ ທີ່ລາວ ຕັ້ງໃຈຣຽນ ຮັກສາຄຸນສົມບັດຂອງນັກປະຕິວັດຢ່າງບໍ່ໃຫ້ຫລຸດລາ ນີ້ລະເພິ່ນວ່າ ຄົນດີຕົກໄປໃສກໍຍັງເປັນແກ້ວ - ສົມວ່າ ຂັ້ນເທິງເຊື່ອໝັ້ນອີຫລີ.

ພວກເຮົາຊຸມແຊວກັນຢູ່ຫັ້ນຈົນຮອດສອງໂມງ - ບໍ່ແປກປະຫຼາດ ດອກ ເພາະສອງໂມງກາງຄືນຢູ່ເລນິນກຼາດ ຍາມເດືອນ ກ ນັ້ນ ມັນແມ່ນ ຍາມ - ແລງ ຢ່າງບໍ່ມີສິ້ນສຸດ ! ເພິ່ນຍັງເວົ້າວ່າໃຜໄດ້ໄປເລນິນກຼາດ ຍາມນີ້ ຕ້ອງນັ່ງຊຶມຕາເວັນໃນເວລາທ່ຽງຄືນ. ຂ້ອຍກັບອ້າຍອົກ ຍາດເວລາລົມນ້ອຍກັນຖາມຂ່າວຄາວພິເສດແດ່ ຈຶ່ງຮູ້ວ່າ ອ້າຍອົກ ອົກຫັກ ຕອນປົດປ່ອຍໃໝ່ໆກຸ່ມຈະແຕ່ງດອງແລ້ວ ແຕ່ບາດກັບເມືອຮອດບ້ານເກີດ ຜູ້ສາວພັດເອົາຜົວປະກອນເພາະຄອງຖ້າດົນຫຼາຍ. ອ້າຍຈຶ່ງຕັດສິນໃຈມາຣຽນຕ່າງປະເທດ ແລະຮອດມື້ນີ້ ກໍຍັງບໍ່ທັນຄິດເລື່ອງຈະຊອກນັກໃຜອີກ - ຂໍຣຽນໃຫ້ສຸດກ່ອນ - ລາວວ່າ

- ແຕ່ວ່າບໍ່ຊ້າງເດີ້ ! ນັກຂ່າວຍິງ ນ້ອງຜູ້ນັ້ນ ໜ້າສົນໃຈນໍ ? ອ້າຍບໍ່ພຽງແຕ່ຕິດໃຈສາຍແອວນ້ອຍລາວໄດ້ ຢ່ານວ່າຊິຫລົງນັກແລ້ວບໍ່ຈັກ - ຜູ້ນັ້ນມາ... ຊື່ຫຍັງກໍ້ ?

- ສີວຽງຄຳ, ຂ້ອຍອອກຊື່ນາງລອຍໆ, ສີວຽງຄຳ... ເອົາ ເລີຍອ້າຍອົກ ນ້ອງຮັບປະກັນວ່າອ້າຍຈະບໍ່ຜິດຫວັງ !

ດວງຈຳປາ

ບໍ່ຮູ້ວ່າ ມີຫຍັງຊຸກໃຫ້ ປາກຂ້ອຍເວົ້າອອກແນວນັ້ນ. ເມື່ອເວົ້າ ໄປແລ້ວ ກໍຕອງເລີຍຕາມເລີຍ... ແລະ ກໍເລີຍໆ ມາຈົນຮອດມື້ນີ້ !

× ×

×

ອາດຈະເປັນຍ້ອນ ຂ້ອຍເອງກໍສັດທາ ສີວຽງຄຳ ມາຕະຫຼອດ ເວລາທີ່ຮຽນນຳກັນຢູ່ວຽງສານເດືອນ ແລະ ຕະຫຼອດເວລາຫອງຫຼວງ ທັດສະນະ ສຶກສາຢູ່ສະຫະພາບໂຊວຽດນີ້ຫຼາຍພໍຄວນແລວນັ້ນບໍ ທີ່ເຮັດໃຫ້ຂ້ອຍອອກ ສຽງ ສະໜັບສະໜູນອາຍອິກ ແບບທັນທີທັນໃດ. ສີວຽງຄຳຕັ້ງວ່າມີສິຮັກ ນາງ ບໍ່ແມ່ນຄົນງາມ ພິລຶກພິລາ້ສັງດອກ ແຕ່ໜ້າຮັກ ມີສະເໜ ມັກຍິ້ມຫົວຢູ່ເລື້ອງ ຄາຍດີ ນາງຈະບໍ່ມີຄວາມທຸກໃຈນຳໃຜຈັກເທື່ອ. ດ້ວຍອຳການສີຊື່ນໆເບັຽ- ເວລາເລີກຈາກກັນ ອາຍອິກນັດໝາຍວ່າຈະຮ່ວມເດີນທາງໄປທ່ຽວຊົມວັງລະ ດູຮ້ອນນຳ ຕາມລາຍການທັດສະນະໃນມື້ອື່ນ

- ສວນວັງລະດູຮ້ອນ ງາມຫຼາຍອີຫຼີໄດ໋ ເບິ່ງບໍ່ເບື່ອເປັນ. ແຮງຄັນ ໄດ້ໄປກັບໝູ່ຄົນລາວນຳກັນ ຄືແຮງຊົມ່ວນ" ອາຍອິກຊີ້ແຈງ

ຕອນບັ້ນເອົ້າເຊົ້າ ມື້ຕໍ່ມາ ສີວຽງຄຳຍັງບໍ່ຍອມເຊື່ອຂ້ອຍ ວ່າອ້າຍສົມ ອິກຍັງໂສດ. ນາງວ່າ :

-ບໍ່ເຊື່ອເດັດຂາດ ພວກເຈົ້າຜູ້ຊາຍເປັນໃຈກັນ - ຊອກແຕ່ຕົວະມ່ວນ ໄປໝົດ. ນອງບໍ່ເຊື່ອດອກ ຄົນອາຍຸສີ່ສິບປາຍ ບໍ່ທັນມີເມຍມີລູກ ເປັນໄປ ບໍ່ ໄດ້ !"

- ກັບເມືອຫນ້ອາຍຊິສືບໃຫ້ ເອົາ ເພື່ອຢັ້ງຢືນຄວາມບໍລິສຸດຂອງອ້າຍ ໃຫຍ່ເຮົາ " ຂ້ອຍປະກາດ.

ການທັດສະນະ ນະຄອນເລນິນກຣາດນັ້ນ ບໍ່ແມ່ນຈະໄປໄດ້ທົ່ວເຖິງ ໃນເວລາອັນສັ້ນ ດ້ານສາມວັນ ຫ້າວັນ. ເຈົ້າພາບຮັບຕ້ອນ ພວກເຮົາ ຄື ສະມາຄົມນັກ ນ.ສ.ພ. ເລນິນກຣາດ ໄດ້ເລືອກພາໄປແຕ່ສະຖານທີ່ສຳຄັນ ແລະ ໜ້າສົນໃຈພິເສດອີຫຼີ ເປັນຕົ້ນ ຮອງຮອຍການກະກຽມ ການປະຕິວັດ ຂອງທ່ານເລນິນ ບູຮານສະຖານ ແລະ ສິລະປະ ອັນເກົ່າແກ່ ຯລຯ " ນະຄອນແຫ່ງແມ່ນ້ຳເນວາ " ນີ້ ມີອາຍຸຮອດ ສອງຮ້ອຍຫ້າສິບປີ ເຄີຍຜ່ານ ການຮຸກຮານຂອງຕ່າງດ້າວ ບໍ່ຈັກວ່າທີ່ໃດເທື່ອ ແຕ່ເລນິນກຣາດ ກໍຍັງຄອງ ຄວາມອິດສະລະ ແລະ ມີເອກະລັກອັນອະມະຕະ ຢູ່ຈົນທຸກວັນນີ້.

ລົດບັສໄດ້ນຳພາພວກເຮົາໄປທີ່ວັງລະດູຮ້ອນ - ຫຼືເປໂຕໂວເຣັດ ຊຶ່ງພະເຈົ້າຊາ ປີເອີດ ໄດ້ທົງສ້າງຂຶ້ນ ເພື່ອເປັນສັກຂີພິຍານ ແຫ່ງຄວາມຈະເລີນຮຸ່ງເຮືອງ ທັງດ້ານອຳນາດ ແລະ ຊັບສິນ ຂອງພະອົງ - ອວດຕໍ່ປະເທດໃກ້ຄຽງ. ຂ້ອຍເອງເຄີຍໄດ້ຍິນກິດຕິສັບ ແລະ ເຫັນຮູບພາບ ຂອງອຸທິຍານມະຫັດສະຈັນແຫ່ງນີ້ມາກ່ອນ ແຕ່ເມື່ອມາພົບກັບຕາຕົນເອງ ກໍໄດ້ແຕ່ຕຶກສະເງີ້ແລນອງ. ມັນຕັ້ງແມ່ນແດນມະຫັດສະຈັນອີຫຼີ !

ພໍພຽງແຕ່ເຮົາຍ່າງໃກ້ເຂົ້າໄປ ຍັງບໍ່ຮອດ ປະຕູໂຂງ ກໍຍິນສຽງ ນ້ຳດັງ ສາດ-ສາດ ຄ້າຍຄືທຳນອງເພງ. ເມື່ອຫຼຽວລົງລຸ່ມ ນ້ຳພຸ ເປັນຮ້ອຍບໍ່ພຸ່ງຂຶ້ນ. ດອກພູ່ຢູ່ກາງວັງສະ ພຸ່ງສູງຮອດຊາວແມດ. ນ້ຳພຸ ມີນຳກັນ ທັງໝົດ ໑໔໔ ບໍ່, ຈັດລະດັບຫຼຸດລົ່ນກັນເປັນ ໑໗ ຂັ້ນ. ມີຮູບປັ້ນ ເທບທິດາ

ແລະ ເທວະບູດ ທາສີດຳ ຢູ່ໃນທ່າຕ່າງໆກັນຮອດ **ພັນ** ຕົວ ບາງຕົວເປັນສັນຍາລັກແທນໃຫແກ່ແມ່ນໍ້າຂອງລັດເຊັຽ ຄື ໂວນກັຟ ແລະ ເນວາ, ມີ ຕົວສັດຕໍ່ສູ້ກັບຄົນ ຯລຯ. ເບິ່ງແຕ່ຮູບປັ້ນ ກໍງົດງາມວິຈິດພິສະດານ ພໍແຮງແລ້ວຜັດຍັງມີບໍ່ນໍ້າພຸພຸ່ງຂຶ້ນຈາກຕົວຮູບ ນັ້ນອີກ ເບິ່ງຄືນາງເທວະດາ ພວນຟອນແອະແອນຢູ່ກາງສາຍຝົນອັນນີລັນດອນ.

ອ້າຍອົກ ຊ່ອຍລ່າມ ແປຄົນໂຊວຽດ ອະທິບາຍປະຫວັດອັນໜ້າສົນໃຈກ່ຽວກັບ ເຕັກນິກໃນການກໍ່ສ້າງ ລະບົບນໍ້າພຸທຳມະຊາດ ແຫ່ງນີ້. ສົມລາວອວດອ້າງວ່າ ງາມ - ພິລຶກພິລໍ້າແທ້ໆ ! ພວກເຮົາຢືນຊົມນໍ້າພຸຟ້ອນສະຫຼັບສາຍ ໂອນເອນ ເນື້ອລົມຕອງ. ນໍ້າສາດເຊັນມາຖືກໜ້າຕາ ນັກທັດສະນະພວກເຮົາ ຈົນປຽກເປັ້ຽ. ໃນອຸທິຍານ ມີຫີນທາງນ້ອຍເປັນຮ້ອຍໆເສັ້ນເພື່ອເດີນຊົມເນື້ອທີ່ສວນ ອັນມີຂອບເຂດກວ້າງຂວາງຮອດ ໑໐໘ ເຮັກຕາ. ເມື່ອຊົມບ່ອນສຳຄັນໆແດ່ແລ້ວ ປະກອບທັງຫິວທັດເປັນໜ້າຕື່ນຕາຫຼາຍຂຶ້ນ ແລະຫຼາຍຂຶ້ນ. ພວກເຮົາກໍເລີ່ມແຕກພົງແຕກພວກກັນ ບາງຄົນຢາກລົງໄປທາງຄອງໃຫຍ່ ສູ່ທະເລ ບາງຈຸພັດນັກທາຍຕົວເຂົ້າໄປໃນສວນພຶກສາຊາດ ກາງດົງ ແຕ່ອ້າຍອົກນັ້ນ ແນ່ນອນວ່າ ໄປນຳຈຸສື່ວຽງຄຳ ກໍມີການຊີ້ແຈງ ຊວນຊົມຕ່າງໆ ນານາ. ສ່ວຍໂອກາດຕອນທີ່ມີນາຍພາສາ ມາອະທິບາຍຕື່ມເຕີມໃຫ້ຂ້ອຍເປັນພິເສດ ອ້າຍອົກກໍເລີຍຫັນໄປເປັນພາສາແປປະຈຳຕົວ ຂອງສາວນັກຂ່າວ ໄປສາຈ້ອຍວັບ !

ຂ້ອຍເກືອບຈະບໍ່ມີໂອກາດໄດ້ລົມອ້າຍອີກ ວ່າຈະຄວັກຍາມໃດ ເພິ່ນ ກໍແຊະງໄປ ທາງສິວຽງຄຳພູນແລ້ວ ແຖມຍັງແຍກຕົວ ຍ່າງໄປຊົມນ້ຳພຸ ແລະ ສວນດອກໄມ້ຢູ່ທາງງໝູ່ ສອງຕໍ່ສອງອີກ. ຂ້ອຍສົນໃຈ ບັນທຶກຂໍ້ມູນກ່ຽວກັບອຸທິຍານບໍ່ເລີກບໍ່ແລ້ວ ຈຶ່ງລືມຄິດພໍ່ວ່າ ປະກົດການຂອງສອງຄົນນັ້ນ ກ້າວຮອດຂັ້ນໃດແລ້ວ ພຽງເວລາ ໔໘ ຊົ່ວໂມງ ທີ່ຮູ້ຈັກກັນ ?

× × ×

ມັນຈະຮອດຂັ້ນໃດກໍ່ຕາມຊ່າງ ແຕ່ຕອນບ່າຍນັ້ນອອກຈາກເລນິນກຼາດຈະບິນຕໍ່ໄປເມືອງຄີເອັຟ ອ້າຍສົນອີກ ນຳມາສົ່ງພວກຂ້ອຍຮອດເດີ່ນບິນ. ເຮັດແສງຕາອ້ອຍອິ່ນອາໄລ ອາວອູນ ຈົນໃຜໆກໍ່ສັງເກດເຫັນ. ຊ້ຳບໍ່ໜຳມີກອນ "ສາຍແອວນ້ອຍ" ມາຝາກໃຫ້ລົງ ນ.ສ.ພ. ບາດເນື້ອຮອດວຽງ. ຂ້ອຍອ່ານແລ້ວ ເຫັນວ່າ ເປັນຕາເອົາໃຫ້ເຈົ້າຂອງສາຍແອວຫຼາຍກວ່າ.

– ອ້າຍນະ ຕັ້ງຊອກເລື່ອງ ! ສິວຽງຄຳ ຍັດບົດກອນໃສ່ມືຂ້ອຍຄືນ "ຕ້ອງພິສູດກ່ອນວ່າ ບໍ່ທັນມີເມຍ ນ້ອງຈຶ່ງຈະຮັບຄຳຮ້ອງ" ປະໂຫຍກສຸດທ້າຍບອກແຈ້ງວ່າ ນາງເອງກໍ່ສົນໃຈ ອ້າຍຂ້ອຍຢູ່ແດ່ ຄືກັນ – ເຫັນບໍ່ !

ສອງ ຄົນຂະເຈົ້າ ຕິດຕໍ່ທາງຈົດໝາຍກັນຫລາຍເດືອນ. ອ້າຍອົກຂຽນຫາສິວຽງຄຳ ທຸກອາທິດ. ປັດໂທ ! ຄວາມຮັກຂອງບາວໄວເທື່ອ ຈັ່ງແມ່ນຊາດ ມັນຮ້ອນແຮງພິລຶກ ! ບຸກດ້ວຍຈົດໝາຍຢູ່ຮອດເດືອນທີສິກ ແລ້ວສິວຽງຄຳກໍ່ຕາຕື່ບອກໃຫ້ຂ້ອຍຊ່ແຈງ ກ່ຽວກັບອະດີດຂອງນາງ ໃຫ້ອ້າຍອົກຮູ້ສາ. ນາງບອກວ່າ ນາງເອງບໍ່ສາມາດຈະບອກໄດ້. ແມ່ນໜ້າ

ທີ່ຂ້ອຍພໍ້ຈະຕ້ອງອະທິບາຍ ສະຖານະການອັນນີ້ໃຫ້ອ້າຍອົກ.ມັນ ເຖິງເວລາແລ້ວ ທີ່ຈະຕ້ອງເວົ້າກັນກົງໄປກົງມາ ເວົ້າຄວາມຈິງ ເຖິງແມ່ນວ່າ ຄວາມຈິງອັນນີ້ ມັນຈະເຮັດໃຫ້ເຈັບປວດ ທໍລະມານ ກໍຕາມ "ເຮັດໜ້າທີ່ພີ່ສື່ ໃຫ້ສຸດກົກສຸດປາຍແດ່" - ນາງວ່າ.

ຂ້ອຍຮັບປາກນຳສີວຽງຄຳ ແລ້ວກໍຄຶດຫາຄວາມທີ່ຈະພັນລະນາຊີ້ແຈງ-ໃຫ້ອ້າຍສິນອົກຮູ້ຄວາມຈິງ ກ່ຽວກັບໂຕສີວຽງຄຳທັງໝົດ ໃນຖານະວ່າ ຂ້ອຍກັບອ້າຍສິນອົກຮັກແພງກັນ ປານອ້າຍນ້ອງຄີງ ແລະ ກໍໃນຖານະຫົວອົກຜູ້ຊາຍນຳກັນ.

ແຕ່...ຈົນຮອດມື້ນີ້ ຂ້ອຍກໍຍັງບໍ່ທັນຕັດສິນໃຈບອກອ້າຍສິນອົກໄດ້... ວ່າ...ແທ້ຈິງແລ້ວ ສີວຽງຄຳ ...

ຂ້ອຍຈະອະທິບາຍສູ່ອ້າຍສິນອົກຟັງແນວໃດດີ ລາວຈຶ່ງຈະເຂົ້າໃຈ ສີວຽງຄຳ ຄືທີ່ຂ້ອຍເຂົ້າໃຈ ແລະ ຫຼາຍໆຄົນ ທີ່ຮູ້ຈັກສີວຽງຄຳແລ້ວກໍເຂົ້າໃຈນາງ. ພຽງເວລາ ໔-໕ ປີ ທີ່ປະກອບອາຊີບເປັນນັກຂ່າວ ສີວຽງຄຳກ້າວຂຶ້ນສູ່ຖານະບົດບາດອັນສຳຄັນໃນວົງການ ນ.ສ.ພ. ລາວເຮົາ ແລະ ຖືກຮັບຮູ້ ທາງດ້ານຄວາມສາມາດ ແລະ ຄຸນສົມບັດຂອງຄົນໃໝ່ຢ່າງໜ້າເຊື່ອຖື . ແຕ່ອ້າຍອົກຈະຍອມເຂົ້າໃຈບໍ່ ?

ມື້ອື່ນນີ້ ອ້າຍອົກກໍຈະມາຮອດວຽງແລ້ວ ສີວຽງຄຳຕໍ່ວ່າຂ້ອຍ ຢ່າງໃຫຍ່ ທີ່ຂ້ອຍຍັງບໍ່ທັນສຳເລັດໜ້າທີ່ອັນນັ້ນ. ຂ້ອຍກະວົນກະວາຍຍິ່ງຂຶ້ນເຖິງຂະໜາດກິນບໍ່ແຊບນອນບໍ່ຫຼັບ ມາສອງມື້ ຈົນແມ່ເດັກນ້ອຍສັງເກດເຫັນ.ຂ້ອຍຈຳເປັນຍອມສາລະພາບແບບຄົນບໍ່ມີທາງອອກ ກັບຜູ້ທີ່ຢູ່ໃກ້ຕົວທີ່ສຸດ.

- ເຈົ້າກໍເຄີຍເວົ້າວ່າ ອ້າຍອົກເປັນຄົນດີ ມີຈິດໃຈກວ້າງຂວາງລາວ ວ່າຮັກກະຊິຮູ້ກເຫລະຕິ !" ເມຍຂ້ອຍໃຫ້ຄວາມເຫັນ.

- ປານລາວລັງກຽດນັ້ນຕິ ສີວຽງຄຳ ເຄີຍແຕ່ງດອງມາແລ້ວ ເຈົ້າຮູ້

ບໍ່. ລາວບໍ່ແມ່ນສາວສົດໆ ດອກໄດ໋ !

- ຮ້າງບໍ່ ຫຼື ເປັນໝ້າຍ ?

- ຮ້າງຊັ້ນຕວ່າ ! ເຈົ້າຄິດເບິ່ງ ແມ່ຍິງອາຍຸຊາວປີເປັນແມ່ຮ້າງ ຜູ້ຊາຍຄົນໃດ ເຂົາຊິກ້າ..."

" ຊັ້ນສາເຫດມັນເດ້ ລາວເປັນແມ່ຮ້າງນັ້ນຍ້ອນຫຍັງ ? " ເມຍຂ້ອຍເວົ້າສຽດໆ ຈົງມີແວວງອນ ປານວ່າ ສີວຽງຄໍາ ແມ່ນພີ່ນ້ອງ ເຊື້ອ ສາຍລາຍລ່ອງເພິ່ນ.

ຂ້ອຍອະທິບາຍ "ອະດີດ" ຂອງສີວຽງຄໍາໃຫ້ເມຍຂ້ອຍຟັງ. ຮູ້ສຶກວ່າ ຂ້ອຍເລົ່າໄດ້ລະອຽດດີ ເພາະເຄີຍຊອກແຊກ ຖາມດ່ວຍຄວາມສົນໃຈ - ແລະ ສົມກັບອາຊີບນັກຂ່າວ ວ່າຊັ້ນສາ - ສີວຽງຄໍາ ແຕ່ງດອງຕາມການຈັດຈູຂອງພໍ່ແມ່ ທີ່ນິຍົມເລືອກເອົາສາຍພີ່ສາຍນ້ອງ ມາເປັນດອງກັນ. ນາງ ບໍ່ໄດ້ມັກຮັກກັບຜູ້ຊາຍຄົນນັ້ນ - ເມື່ອຢູ່ນຳກັນໄປ ຜົວຂອງນາງຜັດກາຍ ເປັນຄົນຕິດເຫຼົ້າຕິດກິນ - ບໍ່ເອົາຫົວຊານຳຄອບຄົວ. ນາງທົນບໍ່ໄດ້ທີ່ຕ້ອງຢູ່ນຳຄົນຂາດອະນາຄົດແນວນັ້ນ ເອົາກາຍເປັນຄົນບໍ່ເອົາການເອົາງານ ຖືກສຳຫຼວດ-ເສັຽຫາດຂາດຈູນ ເປັນອິດເລເກມັງໄປ ນາງຈຶ່ງສະເຫນີຂໍຢ່າ ຮ້າງ.

- ແມ່ ລາວກໍເຮັດຖືກແລ້ວເດ ?" ເມຍຂ້ອຍເຫັນດີເຫັນງາມໄປນຳອ້ອຍຕ້ອຍບາດນີ້.

- ແຕ່ ເຈົ້າບໍ່ເຂົ້າໃຈ ! ບໍ່ມີໃຜຕິສີວຽງຄໍານ່າ - ທຸກຄົນຮັບຮູ້ແລ້ວວ່າ ສີວຽງຄໍາເຮັດຖືກ ລາວໄດ້ດີມີຫນ້າຢູ່ທຸກມື້ນີ້ ກໍຍ້ອນລາວຕັດຂາດຈາກບັກວອນ...ນັ້ນໄດ໋ ! ເຈົ້າຍັງບໍ່ຮູ້ ສີວຽງຄໍາກ້າຂືນຄໍາພໍ່ແມ່ - ລາວ ຮັບຜິດຊອບຕໍ່ຕົນເອງ ເຂົ້າເຮັດວຽກຢູ່ຫນັງສືພິມ...ບໍ່ຊານຳຄວາມໃຜຊາ

- ຊັ້ນກໍດີແລ້ວ ອ້າຍອິກຄົງຈະພໍໃຈລະ ຊິຕິຫຍັງລາວອີກ ?"

- ແຕ່ອ້າຍອິກ ຄົນອາຍຸປານນີ້...ລາວຄົງຄິດແບບ ຜູ້ຊາຍລາວທົ່ວໄປ ຄິດ... ແມ່ຍິງ ຄັນເປັນ ແມ່ຮ້າງແລ້ວ...

- ເປັນຫຍັງ ແມ່ຍິງເປັນແມ່ຮ້າງ ມັນເປັນຫຍັງ ? ເບິ່ງເພິ່ນ ຈັ້ນຈີ້ ໃສ່ ຊິເອົາເປັນເອົາຕາຍ.

- ບໍ່ເປັນຫຍັງ...ມັນບໍ່ຄືຜູ້ຊາຍ...ທໍ່ນັ້ນລະ !

- ເຈົ້າເປັນບ້າ ! ອ້າຍອິກລາວຄືຊິບໍ່ບ້າຄືເຈົ້າດອກ ! "

× × ×

ຂ້ອຍເດົາບໍ່ອອກວ່າ ອ້າຍອິກລາວຈະຄຶດແນວໃດແທ້ ຂ້ອຍຮູ້ອ້າຍອິກດີ ລາວເປັນຄົນຈິດໃຈກວ້າງຂວາງມາແຕ່ໃດ ແມ່ນແທ້ - ແຕ່ບັນຫາແນວນີ້ຂ້ອຍ ບໍ່ສາມາດຢັ່ງຮູ້ໃຈລາວ. ລາວກໍອາຍຸແກ່ແລ້ວ ຜູ້ຍິງທີ່ຜ່ານມີ ຊາຍອື່ນ ອາດ ຈະກາຍເປັນສິ່ງຫນ້າລັງກຽດ ! ແລະ ເຖິງວ່າ ລາວບໍ່ລັງກຽດ ພໍ່ແມ່ພີ່ນ້ອງ ລາວເດ - ສັງຄົມເດ ຈະຍອມຮັບນຳບໍ່. ຍອມຈັ່ງຊີ້ລະ ຂ້ອຍຈຶ່ງລັ່ງເລ ບໍ່ ເລີກບໍ່ແລ້ວ ບໍ່ກ້າຂຽນໄປອະທິບາຍສູ່ລາວຟັງ ຕາມທີ່ຮັບປາກສີວຽງຄຳ ຈົນ ເທົ່າມື້ - ມື້ທີ່ລາວຈະມາ.

ຂ້ອຍຢ້ານ...ຢ້ານວ່າ... ອ້າຍອິກຈະປ່ຽນໃຈ - ແລ້ວ ແມ່ຍິງດີໆ ຄືສີວຽງຄຳກໍຈະພາດຈາກຜູ້ຊາຍດີໆ ຄືອ້າຍອິກໄປ. ຂ້ອຍຄົງທົນບໍ່ໄດ້ ທີ່ຈະ ເຫັນສອງຄົນນີ້ພາກຈາກກັນ. ຂ້ອຍຮັກທັງສອງຄົນ. ຂ້ອຍຈິງໃຈ ຢາກໃຫ້ ຂະເຈົ້າໄດ້ກັນ. ແຕ່...ຈະເວົ້າແນວໃດນຳອ້າຍອິກ ມັນຈຶ່ງຈະໄດ້ພົນ ຮັບ ທາງບວກ. ເນຍຂ້ອຍວ່າ ຂ້ອຍບ້າ - ແຕ່...ຂ້ອຍ...ວ່າ...

ຂ້ອຍຜິດເອງ ທີ່ບໍ່ກ້າບອກຄວາມຈິງ...ບໍ່ກ້າ...ຈຶ່ງເຍື້ອນມາເຍື້ອນ ມາ... ຮອດວິນາທີນີ້ !

ຍົບລົງແລ້ວ ! ເດືອນຍິນນັ້ນ ຜູ້ຄົນອັ່ງອໍເປັນພິເສດ. ມັນແມ່ນລະດູທີ່ນັກສຶກສາ ລາວກັບມາບ້ານ. ຂ້ອຍເຫື່ອແຕກໜ້າ ແຕກຫຼັງ ຍ້ອນຄວາມຮ້ອນເອົ້າຂອງອາກາດແດ່ ແຕ່ຄືງຍ້ອນຄວາມຊຸກອົ້ງຫຼາຍກວ່າ.

ຂ້ອຍຈະເວົ້ານຳອ້າຍອຶກວ່າແນວໃດດີ... ກໍຍ້ອນຂ້ອຍບໍ່ກ້າຂຽນໄປອະທິບາຍຕໍ່ອ້າຍອຶກ ສິວຽງຄຳ ຈຶ່ງບໍ່ຍອມມາເດີນນຳ. ນາງປະກາດຕໍ່ຂ້ອຍວ່າ ນາງຍິນດີໃຫ້ເລື່ອງມັນຢຸດຢູ່ສ່ຳນີ້. ເຖິງຈະເສັຽດາຍ ນ້ຳໃຈທີ່ໄດ້ມີຕໍ່ກັນທາງຈິດໝາຍ - ແຕ່ນາງກໍກຽມພ້ອມຜິດຫວັງ ຖ້າຫາກອ້າຍອຶກ ເຫັນວ່າ ອະດີດຂອງນາງເປັນສິ່ງມົວໝອງ. ນາງຮັບຮູ້ວ່າ ຜູ້ຊາຍລາວຍັງບໍ່ໃຈກວ້າງພໍ. ມັນເປັນເລື່ອງທຳມະດາ ໃນເມື່ອວ່າ ແມ່ຍິງລາວກໍຫາໄດ້ຮັບສິດສະເໝີພາບພ້ອມໆກັບທີ່ປະເທດຊາດໄດ້ຮັບການປົດປ່ອຍມານີ້ເອງ...

ນີ້ລະ... ມັນແມ່ນຄວາມຜິດຂອງຂ້ອຍແທ້ໆ ທີ່ປະໃຫ້ເລື່ອງມັນ ລາມມາຮອດພີ້ !

ອ້າຍອຶກມາແລ້ວ...

...ຂ້ອຍຄວນຈະເວົ້ານຳລາວແນວໃດ ? ແຕ່ທີ່ແນ່ນອນກໍແມ່ນ ວ່າຂ້ອຍຕ້ອງບອກ... ສິວຽງຄຳສັ່ງວ່າ ຖ້າຍັງບໍ່ບອກ ກໍຫ້າມເດັດຂາດບໍ່ໃຫ້ພາອ້າຍອຶກໄປພົບນາງ. ຂ້ອຍຕ້ອງສຳເລັດໜ້າທີ່ອັນສ່ຽງໄພນີ້ ! ຂ້ອຍ ຕັດສິນໃຈ...

- ອ້າຍອຶກ... ເປັນຈັ່ງໃດ ?

- ສີວຽງຄຳເດ້ລະ ? ສາຍຕາອ້າຍອິກສອດສ່າຍຫາໃຜຜູ້ໜຶ່ງ.

- ນ້ອງຂໍໂທດ... ອ້າຍອິກ... ເປັນຄວາມຜິດຂອງນ້ອງເອງ ທີ່ ..ໄດ້ປິດບັງອ້າຍມາຕະຫຼອດ...

- ປິດບັງເລື່ອງຫຍັງ ? ອ້າຍອິກເບິ່ງໜ້າຂ້ອຍຕາຊີ້ຕາຈັນ

- ເລື່ອງສີວຽງຄຳ ເຄີຍແຕ່ງດອງມາແລ້ວນັ້ນຫວາ ?

- ຊັ້ນ... ອ້າຍຮູ້ ?

- ຜີບ້າ ! ນ້ອງຄິດວ່າ ອ້າຍເປັນຄົນສະໝອງຕື້ນປານນັ້ນຫວາ ? ລາວເອງເຄີຍຕັ້ງບັນຫານີ້ຂຶ້ນໃຫ້ອ້າຍຄິດ. ແລ້ວອ້າຍກໍຊອກຮູ້ຕື່ມຊັ້ນຕ່ວາ...

- ອ້າຍອິກ !

- ແມ່ຍິງທີ່ກ້າຫານສູ້ຊີວິດ ຕັດສິນໃຈເດັດດ່ຽວ ຄື ສີວຽງຄຳນີ້ລະ ທີ່ອ້າຍຢາກໄດ້. ອ້າຍບູຊານ້ຳໃຈນາງຕ່ວາ.

- ຊັ້ນ... ລາວເປັນຫຍັງວ່າ... ອ້າຍຍັງບໍ່ຮູ້ ?

- ແທ ຂອງອ້າຍບໍ່ເຄີຍເວົ້າອອກມາວ່າ ອ້າຍຮູ້ ! ແລະ ມັນກໍແມ່ນ ຄວາມຜິດຂອງນ້ອງແທ້ຫັ້ນລະ ທີ່ເຮັດໜ້າທີ່ພີ່ສີ ຕາຍໆ ! ເອົາລະ ເຮົາ ເມືອເຮືອນກ່ອນ. ຕອນຄ່ຳ ຈຶ່ງໄປຫາ ສີວຽງຄຳ ນຳກັນ - ໄດ້ຕິ ?





| | | |
|---|---|---|
| ດອກບົວ | ທຳມະຊາດເຊື້ອ | ຜານເກີດກັບຕົມ |
| | ດົມດື່ມກິ່ນດົມເປີ | ແປດຄາວດີຊິເປື້ອນ |
| ຍັງເລົ່າ | ສີສັນຫລາຍ | ລາງຫອມຊຸອຍຊື່ນ |
| ສົມທີ່ | ເກັບຍົກໄວ | ບູຊາໄຫວແທນພະທຳ. |

ປຸ່ນດັ່ງ ນ້ອງອ່ອນນ້ອຍ ລູກຊາວປ່າຂ້າງດອນ ພື້ນ
ແດດຝົນ ທົນງານໜັກ ເຣື່ອໄຄໄຫລຍ້ອຍ
ນີໃຊ່ ເຄີຍຄອງພູ້ ຈັບຫອມປະທິນລູບ
ຜິວກໍ ຍັງຜ່ອງແຜ້ວ ສະເໜີແກ້ວກີບບົວ ແທ້ແລ້ວ



# ຜູ້ເປັນແມ່

ແມ່ຍິງທີ່ຊ່າງຊອກຄິດປະດິດເພງ ຄຳຈາ ຮ້ອຍພັນ ພະຫຍາ
ເພື່ອອື່ນອອຍ ຍົວະເຍົ້າລູກນ້ອຍ ໃຫ້ເຊົາແລ້ວໄຫ້...
ເຖິງແມ່ນວ່າ ຈະພວມຢູ່ໃນອາລົມໝົ່ນເສົ້າ ທຸກໂສກ ພຽງໃດກໍຕາມ
ເມື່ອຮູ້ວ່າ ລູກອ່ອນນ້ອຍ ຕ້ອງການສຳຜັດອັນແນບນວນ

ຮອຍຍິ້ມທີ່ອ່ອນຫວານ
ຫຼື ວາຈາອ່ອນໂຍນ ເລົ້າໂລມ, ຂວັນ
ແມ່ກໍຈະມີໃຫ້ລູກທັນທີ...

ແລະ ເຖິງແມ່ນໄພອັນຕະລາຍຕໍ່ໜ້າ ຈະຮ້າຍກາດ ເຖິງຊີວິດ,
ແຕ່ເພື່ອແລກກັບຄວາມປອດໄພ ຄວາມສຸກສະບາຍ ຂອງລູກນ້ອຍ
ແມ່ພ້ອມທີ່ຈະຮັບສູ້ ໂດຍບໍ່ຕ້ອງຊັ່ງຊາໃຈ
ແມ່ຍິງ ທີ່ສົມບູນແບບ ແນວນີ້ ສົມແລ້ວ ທີ່ເປັນແມ່ !

ເຮົາຈະໂທດໃຜ ? ສັງຄົມໂລເລ ພາລົ້ວ ພາຫລົງນັ້ນເບາະ ?

ຫລືວ່າໂຕເຮົາເອງ ? ທີ່ໄຮ້ສະຕິ ຂາດ ຄວາມເຂົ້າໃຈຕໍ່ຊີວິດ ຕໍ່ການເກີດຂອງຊີວິດຫນຶ່ງ ຫນຶ່ງຕໍ່ລາຄາຂອງຊີວິດເອງ

ມັນເປັນໄປແລ້ວ ແລະ ມັນເກີດຂຶ້ນແລ້ວ !



# ລູກ

໑໙໗໔

ເຂົາ ເປັນຜູ້ຊາຍທີ່ໂຊກດີຕະຫຼອດຊີວິດ ເກີດມາໃນຄອບຄົວທີ່ພໍ່ຢູ່ພໍ່ກິນ ໄດ້ຮັບ ການສຶກສາ ແລະ ມີວິຊາຊີບລ້ຽງໂຕງາມ ມີເພື່ອນມິດມາກຫຼາຍ ຊີວິດຕອນຍັງບ່າວຈຶ່ງເຮຮາບໍ່ແມ່ນຄອຍ...

ເຂົາຮູ້ຈັກກັບນາງ ເມື່ອອາຍຸຢຽບເຂົ້າ ເກຽສາມແລ້ວ ຕອນນັ້ນເຂົາກຳລັງຄຶດຢາກເປັນເຮືອນເປັນຊານ ຄອບຫມາຍຄວາມເປັນໂສດ ເປັນຄົນມາກຫມູ່ ເປັນນົກເຄົ້າຕາແມວ ເປັນ... ສຳນະປີແນວເປັນ ໃນອັນທີ່ຍັງແຕ່ຄວາມມ່ວນຊື່ນ ບໍ່ເປັນແກ່ນສານນັ້ນ !

ຄວາມຈິງ ຜູ້ຍິງງາມ ໆ ກວ່ານາງ ເຂົາກໍ່ເຄີຍພານພົ້ມາຫຼາຍ ແລ້ວ ເຂົາເຄີຍມີຊູ້ເປັນລູກສາວເສດຖີ ເປັນຫຼານທ່ານຜູ້ໃຫຍ່ ແຕ່ສະໄຫມກ່ອນ ກໍ່ມີຜູ້ສາວຈີບ ໆ ມີຄວາມຮູ້ ຄວາມ ຫລັກ ລາງຄົນເຄີຍຫລົງມັກເຂົາ " ຊາງ

ດຽວ " ຈົນເກືອບໂຕນນ້ຳກໍຫຼາຍເທື່ອ ແຕ່ເຂົ້າກໍຂັ້ນເສືອ... ສໍ່າເນັ້ຽ ... ບໍ່ວ່າຊິເອົາງ່າຍໆ ຄວາມໂສດຄືຂອງແຜງ ! ແຕ່ກັບນາງ... ບໍ່ຮູ້ວ່າ ເກີດຖືກເສັ້ນຊຸ້ຕາກັນຢ່າງໃດ ພໍແຕ່ຮູ້ນາງຄັກ ຮູ້ຊື່ສຽງຮຽງນາມ ຮູ້ວ່າເປັນ ລູກຫຼານໃຜ ຢູ່ຄຸ້ມໃດ ຮ່ຳຮຽນມາຮອດໃສ ມີນິໄສໃຈຄໍຢ່າງໃດແລ້ວເຂົາ ກໍບໍ່ ຍອມປ່ຽນໃຈ ເຂົາຕົກລົງໃຈຕັດສິນໃຈ ແລະ ຮຸ່ມຮອນແຕ່ຢາກໄດ້ນາງ ມາ ຮ່ວມຮຽງຄຽງໝອນ ເງິນຄຳກໍຢາກທ້ອນຢາກຫອມໄວ້ ຈົນພຽງພໍສຳລັບເຮັດ ພິທີແຕ່ງດອງພໍສົມນາສົມຄວນ ບໍ່ຄຶກຄື້ນຟູມເຟືອຍເກີນຖານະເກີນສະພາບບ້ານ ເມືອງ ແຕ່ກໍບໍ່ມີດມີ່ຈົນໝູ່ຝູງຈະຕໍ່ວ່າໄດ້ພາຍລູນ.

ແລ້ວເຂົາກໍໄດ້ນາງມາເປັນຄູ່ຊີວິດ.

ຄືນນັ້ນ... ນາງຢູ່ໃນວົງແຂນຂອງເຂົາໃນຫ້ອງວິວາ... ນາງຄື ເນຍຸທີ່ເໝາະສົມທັງກາຍໃຈ ນາງບໍລິສຸດສະອາດ ເຄົາລົບໃນຜົວ ແລະ ກິລິ ຍາອ່ອນຫວານຊວນຮັກ ປົວລະບັດຊຸປະຖາກຜົວຕາມທາງຄວນ.

ເຂົາປະຕິບັດໜ້າທີ່ສາມີທີ່ດີຄືບ້ານຄືເມືອງ ຢູ່ກັບຢາວເຝົ້າກັບເຮືອນບໍ່ ອອກຫລິ້ນອອກທ່ຽວ ເຂົາໃຫ້ກຽດເມັຽສະເໝີ ໄປໃສເອົາໄປນຳ ກິນຫຍັງ ໃຫ້ກິນນຳຍົກຍ້ອງໃນສິ່ງທີ່ນາງທຳໄດ້ ແລະ ຕັກເຕືອນສັ່ງສອນດ້ວຍ ຄວາມດີ ໃນສິ່ງທີ່ນາງຍັງຂາດຕົກບໍ່ຮູ້ເທົ່າທັນ.

ເຂົາໃຫ້ຄວາມອົບອູ່ນອຸ່ນໃຈ ສະໜິດແໜ້ນນາງທະວີຂຶ້ນທຸກວັນ ແລະ ນາງກໍຕື່ມຄວາມຮັກໂຄຣົບໃນເຂົານຳບໍ່ຢຸດຢ່ອນ...

ພົນກໍຄື... ຫຼາຍເດືອນຕໍ່ມານາງໃຫ້ຂ່າວດີ

ເຂົາຕື່ນເຕັ້ນ ດີໃຈ ແລະ ຮູ້ສຶກຄຶກຄັກ ນຳຂ່າວນັ້ນຍິ່ງໜັກ ຮູ້ສຶກວ່າ ຊີວິດຄູ່ມີຄວາມໝາຍຂຶ້ນ ມີຄ່າຄວນແກ່ການຖະໜອມນ້ຳໃຈກັນຍິ່ງຂຶ້ນ...

ເຂົາບັງເກີດຄວາມແພງໃນໂຕນາງເຮັ່ງຂຶ້ນ ບໍ່ມີແນວປຽບ ຄອຍລະ ວັງຮອດບາດນາງລຸກຍ່າງໄປມາ ເຂົາຢ້ານນາງຕົກຂັ້ນໄດ ຢ້ານລົດໂຍກແຮງ ຢ້ານນາງໜື່ນລົ້ມໃນຫ້ອງນ້ຳ... ເຂົາເຫັນນາງເປັນສິ່ງໄສບາງເປັນ ຕາ

ດວງຈຳປາ

ແຕກຄືຈອກແກ້ວ ຫລືເປື່ອກຂຸໄດ້ຄືໄຂ່...

ເຂົາເຫັນຄວາມປາຖະໜາຂອງນາງ ເປັນສິ່ງສຳຄັນສັກສິດ ຊຶ່ງຕ້ອງ ໃຫ້ສົມປະສົງສົມນັກສີ່ຢາກເຫັນອິລິຍາບົດຂອງນາງເປັນສິ່ງຄວນຊົມຄອງເມື່ອ ໃດຢູ່ໃນສາຍຕາເຂົາ ນາງຈະຕ້ອງຢູ່ຢ່າງສະບາຍ ບໍ່ໂຍກຍາຍ ຫລື ຈັບວຽກ ການໃດ ໆ ເຂົາເປັນຝ່າຍຂໍຮັບໃຊ້ນາງໃນສິ່ງເລັກໆ ນ້ອຍໆ ຄວາມກິນ ກໍ່ບໍ່ ໃຫ້ເຮັດ ຕະຫຼາດບໍ່ໃຫ້ໄປ ໜັກບໍ່ໃຫ້ຫິ້ວ ເຮັດຫຍັງກໍ່ຢ້ານແຕ່ຈະສະເທືອນ..

ຝ່າຍນາງ... ກໍນັບມື້ນັບປ່ຽນແປງໄປຄືກັນໃໝ່ໆ ນາງມັກມີ ອາລົມ ຫງຸດຫງິດໃຈ ບໍ່ພໍໃຈນຳຫຍັງ ໃຈນ້ອຍ - ນ້ອຍໃຈຢູ່ເລື້ອຍ ດັ່ງວ່າ ພາໂລ ເຂົາຜູ້ພະຍາຍາມເອົາໃຈນັ້ນ.

ຕໍ່ມານາງມັກອິນວຽນ ກິນບໍ່ໄດ້ໃຈ ຮ້າຍໂມໂຫ ອິດເມື່ອຍ ໃຈບໍ່ເອົາ ນາງເປີດໜ່າຍຂອງກິນທີ່ເຄີຍມັກ ເບື່ອເນົ້າຂອງເຄີຍແຊບ ເຫີງຫຼາຍກໍເລີຍ ຮອດຮາກອົວະ ກິນບໍ່ໄດ້ຈົນອິດອ່ອນໂຮຍແຮງຍ້ອນ.

ເຂົາເປັນຫ່ວງນຳອາການຂອງນາງ ຈົນບ້າປ່ວງ... ດູຊອກດູຫາສິ່ງ ທີ່ຈັກມາປົວແປງນາງໄດ ໃຜວ່າກິນຫຍັງດີກໍໄປຊອກ ໃຜວ່າເຮັດຈັ່ງໃດເຊົາກໍ ເອົາມາສູດປັນຍາ !

ລາງເທື່ອນາງຢາກກິນຂອງຕ່າງໆ ຂອງທີ່ບໍ່ເຄີຍກິນບໍ່ເຄີຍມັກ..... ນາງຢາກກິນກູດຈີ່ຈື່ນາຍ ຊຶ່ງເປັນຂອງຫາຍາກໃນລະດູຝົນ ນາງຍາດ ສູບຢາ ນຳເຂົາ ທັງທີ່ແຕ່ກ່ອນບອກວ່າຊິວຊັງກອກຢາ ຈົນເຄີຍຂໍຮ້ອງໃຫ້ເຂົາ ເຊົາສູບ ຢູ່ເຮືອນ ນາງບໍ່ກິນເຂົ້າກິນໝີ່ກິນເຝີ ແຕ່ກິນຂອງສົ້ມຂອງດອງເຜັດເຄັນເກີນ ປົກກະຕິ... ຍາມນອນນາງເອົາໝາກນວງດອງມາໄວ້ກອງຕ່ຽງ ແລະ ຖ້າ ນອນບໍ່ຫລັບເພາະຮ້ອນ ຫລື ຫງຸດຫງິດໃຈ ກໍຈະລຸກຂຶ້ນມາ " ໃສ່ " ຈັດ ການກັບຂອງໝູ່ນັ້ນຢ່າງແຊບຊ້ອຍ ລາງມື້ລຸກແຕ່ເດິກ ນາງກໍເອົາອອກມາກິນ ອີກກ່ອນລາງໝາ ກິນຢູ່ຈັ່ງຊັ້ນບໍ່ມີເມື່ອມີຍາມ...

ໃຫມ່ໆ ເຂົາກໍເປັນຫ່ວງ ຢ້ານນາງຈະເຈັບທ້ອງເປັນແນວໃຫມ່ໄປທັງ ກໍເຂັດແຂ້ວຕໍ່ສຽງຫຍ້ຳຂອງກິນຫລິ້ນ ອັນກາຍເປັນ " ອາຫານ " ສຳລັບຕະຫລອດວັນນັ້ນ ທັງກໍຜິດຫູຜິດຫູຜິດຕາ ທີ່ມີຂອງກິນຢາດຢາຍໃນຫອງນອນ ບໍ່ເປັນລະບຽບ... ແຕ່ແລວບໍ່ດົນຄວາມຮູ້ສຶກເຫລົ່ານັ້ນກໍປ່ຽນໄປ ກັບຢາກຊິມ ນຳເປັນຫມູ່ ຢາກລອງຂອງທີ່ນາງຊອກຫາມາກິນຕ່າງໆ ແລະ ຜິດເນື້ອ ຜິດຍານ

... ເຫິງຕາມເຫິງຍາມນາງບໍ່ກິນເຂົາກໍກິນ ຍາມນາງບໍ່ໄດ້ຊື້ຫາມາ ເຂົາກໍໄປຊື້ຫາມາ... ເພາະທຸກຄັ້ງທີ່ໄປເຫັນສິ່ງຍົວະນ້ຳລາຍຕ່າງໆ ເຂົາກໍຈະຄິດພໍ້ນາງ ຄິດເຫັນພາບນາງກິນຫຍ້ຳຊົງແຊບຊອຍສົນໃຈ ຈຶ່ງຊິນຊື້ມາຫລວງຫລາຍ ເພື່ອນາງ - ເພື່ອເຂົາ - ເພື່ອເຫລືອ ແລ້ວເຂົາກໍກິນຊອຍນາງ ບໍ່ຫລຸດຍ່ອນປະລິມານເລີຍ...

ເມື່ອໄດ້ ໔ ເດືອນ ນາງເຊົາຕິດ " ຫມາກສົ້ມ " ແລະ ຂອງ ກິນຫລິ້ນ ບັດນີ້ຮູ້ຈັກຢາກກິນເຂົ້າ ກິນຫມີ່ ກິນເຝີ ກິນເຂົ້າປຸ້ນ ແລະ ກໍກິນ ໄດແຊບ ໄດ້ຫລາຍຄືຈັ່ງອົດຢາກຂາດເຂີນມາເປັນປີ ນາງກິນໄດ້ເລື້ອຍ ແລະ ບໍ່ອາຍທີ່ຈະກິນຢູ່ໃສກໍຕາມ ຢູ່ຕະຫລາດ ຢູ່ງານກິນລ້ຽງ ຫລື ແມ່ນແຕ່ຮ້ານ ນ້ອຍຮິມທາງ ນາງກິນໄດຫລາຍ ເພາະນາງກິນສຳລັບສອງຄົນ !

ຮ່າງກາຍຂອງນາງ ກໍປ່ຽນໄປເທື່ອຫນ້ອຍ... ກ່ອນນີ້ນາງຈ່ອຍ ລົງສາມກິໂລ ຫນ້າຕາເນັ້ນຊີ້ງເນື້ອຍຈອນຄໍເຕັ້ນນັບໆ ດັ່ງແລນມາແຕ່ໄກແສນໄກ ບັດນີ້ນາງພີຂຶ້ນຄືເກົ່າ ຫນ້າຕາສົດໃສມີແວວສົມບູນດ້ານຈິດໃຈ ແອວກໍກົມເຂົ້າ ຫນ້າທ້ອງສວດໂນນຈົນເສື້ອຄັບ ໃຜໆກໍຢອກນາງວ່າຫຼຸຍກ່າງແລ້ວຕິ ?

ເຂົາພາກພູມໃຈ ທີ່ສາມາດລ້ຽງນາງໃຫ້ຫຼຸຍກ່າງໄດ້ !

× ×

×

ເຂົາເຝົ້າພຽນເບິ່ງແຍງສິ່ງນັ້ນ ແຕ່ພາຍນອກທັງອາການທີ່ ສະແດງອອກຕໍ່ນາງ ແລະ ໃນຍາມຢູ່ຄົນດຽວ ເຂົາບໍ່ເຄີຍລືມສະພາບຂອງນາງ ບໍ່ວ່າຈະຢູ່ໃສ ຍາມໃດ ເຂົາຮູ້ສຶກມີສ່ວນເປັນເຈົ້າຂອງນຳນາງ ມີສ່ວນຮັບຜິດຊອບຊ່ອຍນາງ ແລະ ມີຄວາມສຸກໃຈທີ່ໄດ້ສ້າງຂື້ນຮ່ວມກັນກັບນາງ.

ນາງພື້ນຫລາຍ ທັງຂາວນວນຫນ້າຕາເຕັມມີຮອຍສຸກສົມໃຈເຕັມອັດຕາ ເຖິງແມ່ນນາງຈະຍັງມັກມີແວວອ່ອນຂື້ໃຈນ້ອຍ ແຕ່ເຂົາກໍບໍ່ເຄີຍເບີດຫນ່າຍແລະຢາກເຊົາເອົາໃຈນາງຂື້ນມາ ເຂົາພ້ອມທີ່ຈະເອົາໃຈ ເຂົ້າໃຈ ແລະ ຖະນຸຖະຫນອມນາງທຸກຂະນະຈິດ.

ທັງເຂົາແລະນາງພາກັນລົມຮອດອະນາຄົດອັນງົດງາມ ເຂົາຫາງຊື່ສຳລັບຜູ້ຊາຍ ແລະ ນາງກໍຫາງຊື່ສຳລັບແມ່ຍິງ ທັງສອງສັນຍາກັນວ່າ ຈະດີ ໃຈສະເຫມີກັນບໍ່ວ່າຈະແມ່ນເພດໃດກໍດີ

ຫົກເດືອນທ້ອງນາງສວດອອກ ຈົນເຫັນໄດ້ຄັກ ເບິ່ງຊົງນາງຈະ ລຳບາກໜ່ອຍໜຶ່ງມາຫ້ອຍໂຕນເຕັ້ນຢູ່ຫນ້າທ້ອງ ຍາມໄປມານັ່ງນອນຊົງອັດຂອງໃນອິລິຍາບົດເຂົາວຽນຖາມວຽນສໍ້ດວຍຄວາມເປັນຫ່ວງ ຢ້ານນາງຈະບໍ່ ເປັນອັນຢູ່ ເຂົາປອບນາງວ່າ " ອໍຜາກໄວ້ຊົ່ວຄາວ ອີກສາມເດືອນກໍເອົາ ອອກດອກ... "

ເຂົາແຍງແລ້ວກໍຮັກ ຮັກແລ້ວກໍແຍງ ແຮ່ງໃຫ່ຍູ່ແຮ່ງຮັກ ແຮ່ງ ໃຫຍ່ແຮງແພງຫວງແຫນສາລະພັດເຝົ້າລຽບລ່ຳຄ່ຳຄອຍບໍ່ໃຫ້ພາດຈາກສາຍຕາເຂົາ ມີສຸກພາກພູມໃຈ ເມື່ອໃດມີຫມູ່ຍູ່ຍາດມິດເຫັນນາງໃນຮູບຊົງແບບນັ້ນ ຕື່ນເຕັ້ນຕໍ່ການໄດ້ຟັງອາການເຫນັງຕີງ ຂອງຕີນມືແຄງຂານອຍໆ ທີ່ຍັງຢູ່ໃນເນື້ອຫນັງຂອງນາງ " ໂອ໋... ຊີວິດທີ່ຍັງບໍ່ສົມບູນແບບ ເຈົ້າກຳລັງວຽນວົນຢູ່ໃນລັກສະນາການໃດກັນແທ້... ໂຕເຮົານີ້ແສນຫວງໃຍໄຄ່ຮູ້ຫນັກຫນາແລ... "

ອາການເຫນັງຕີງແຮງຂື້ນ ຄວາມເຈັບປັ້ນອັດເຄືອງຖີ່ເຂົ້າ ວັນເວລາທີ່ເຂົາຄອງຄອຍມາເກົ້າເດືອນເຕັມ ມາຮອດແລ້ວ...

ເຂົາຖ້າຢູ່ນອກຫ້ອງປະສູດເປັນເວລາເກືອບຊົ່ວໂມງ ກ່ອນໜ້ານັ້ນທ່ານໝໍອະນຸຍາດໃຫ້ເຂົາຢູ່ນຳນາງ ເປັນເພື່ອນຈົນຮອດເວລາຈະອອກ ເຂົາຍັງໄດ້ເຫັນນາງເຈັບປວດຈົນໜ້າຫົ້ວຄົ້ວຍ ຄິງບິດບຽວ ເທື່ອແຕກໜ້າແຕກຫລັງ ເຂົາກັ້ນໃຈນຳພາບນັ້ນຢ່າງສະລົດຫົດຫູ່ ເຂົາຫາຈະຮູ້ໃນບຶດນັ້ນເອງວ່າ ແມ່ຍິງຕ້ອງເຈັບປວດທໍລະມານປານນັ້ນ ເບິ່ງນາງຄືຈະຕ້ອງສ່ຽງຕໍ່ຊີວິດ ຄວາມເປັນຄວາມຕາຍ ເພື່ອແລກກັບຊີວິດໃໝ່ນັ້ນເອົາແທ້ !

ທ່ານໝໍຄົງຈະເຫັນອາການເຂົາບໍ່ຫ້າວພໍ ຫຼື ບໍ່ກໍອາດເພື່ອຄວາມ ສະດວກຂອງເພິ່ນ ຈຶ່ງເຕືອນໃຫ້ເຂົາອອກໄປຖ້າຢູ່ນອກກ່ອນ ເມື່ອຮູ້ວ່າ ນາງໃກ້ຈະຮອດຍາມແລ້ວ.

ນັ້ນລະເຂົາແຮ່ງວຸ່ນວາຍໃຈຕື່ມ ເຂົາແຮ່ງບັງເກີດຄວາມຢ້ານ ຫ່ວງໃຍໃນນາງຕື່ມ ທັງຫ່ວງນາງ ທັງຫ່ວງ " ຂອງ " ທີ່ນາງຈະໃຫ້ນຳ !

໔໔ ນາທີທີ່ກັບເວລາເປັນເດືອນປີ ສຳລັບເຂົາຜູ້ຄອງຄອຍໃນຍາມນັ້ນ ເຂົາຄິດໄປສາລະພັດ ຢ້ານໄປໝົດທຸກແນວ ເຂົາຢ້ານນາງຈະເຈັບ ປວດກວ່າທີ່ເຂົາເຫັນນັ້ນ ຢ້ານນາງເປັນອັນຕະລາຍໄປ... ແລະ ກໍຫ່ວງນຳຊີວິດນັ້ນພ້ອງກັນ ຫາກມີໃຜມາຖາມຄວາມເຫັນໃນເວລານັ້ນວ່າ ລະຫວ່າງ"ແມ່" ກັບ "ລູກ" ຈະເລືອກເອົາຝ່າຍໃດ ເຂົາຄົງຈະຈົກປືນອອກມາຍິງໂຕຕາຍ ດີກວ່າຈະໃຫ້ຄຳຕອບໄດ້ ເຂົາຍ່າງວົນວຽນຢູ່ລະບຽງໂຮງໝໍ ຍ່າງໄປ ຍ່າງມາຢູ່ຈັ່ງຊັ້ນເປັນລະຍະທາງຫຼາຍກິໂລແມັດ !

ແລ້ວໃນທີ່ສຸດ ປະຕູຫ້ອງອອກລູກກໍໄຂ ເຂົາແລ່ນໄປຢ່າງຕື່ນ ຕະລີດ ທ່ານໝໍອະນຸຍາດໃຫ້ເຂົາຈັບແຂນນາງບີບ ຫຼຽວແລກັນແຕ່ບໍ່ມີຄຳໃດ ລອດຣິມ ສົບນາງນອນຢູ່ເທິງຕຽງລໍ້ຜ້າຂາວປົກຄຸມທົ່ວຮ່າງ ທ່ານໝໍ ບອກເຂົາວ່າ - " ນາງຢູ່ດີ " ແລ້ວເຊີນເຂົາໄປໃນຫ້ອງ ໃນຂະນະທີ່ນາງພະຍາບານ ອີກສອງຄົນ ຊຸກຕຽງນາງໄປຍັງຫ້ອງນອນຊົ່ວຈອງເອົາໄວ້.

ດວງຈຳປາ

ໃນຫ້ອງທີ່ກວ້າງເດີ້ຍລະດາດໄປດ້ວຍອຸປະກອນແພດ ນັບແຕ່ ໂຕະ ຕຽງ ຕູ້ຢາ ແລະ ຂອງໃຊ້ໃນການຜ່າຕັດ ແລະ ອື່ນໆ ນະທີ່ໂຕະແຈ ຫ້ອງ ພູນ ເຂົາສັງເກດເຫັນນາງໝໍສອງນາງຢືນເຮັດວຽກຢູ່ ເຂົາຄິດ:..ນັ້ນລະ! ເຂົາຍ່າງລິວໄປຫາດ້ວຍຄວາມຕື່ນໃຈ ພາກພູມ... ເຂົາບໍ່ໄດ້ສົນໃຈ ຢາກ ຖາມຊ້ຳວ່າຍິງ ຫຼື ຊາຍ ຮູ້ວ່າປອດໄພທັງແມ່ທັງລູກແລ້ວກໍ່ເປັນພໍ ເຂົາຮູ້ສຶກ ວ່າບັດນີ້ເຂົາພໍໃຈແລ້ວ ແລະ ຈະບໍ່ຕ້ອງການຫຍັງລື່ນນັ້ນໄປອີກ !

ທ່ານໝໍໃຫຍ່ຊຶ່ງເປັນຜູ້ຊາຍ ເອັ້ນມາໃສ່ວ່າ " ເຊີນທາງພີ້ກ່ອນ " ເພິ່ນຜາຍມືໄປຍັງໂຕະເຮັດການຂອງເພິ່ນ ຢູ່ຄົນຟາກກັບໂຕະເດັກເກີດໃໝ່

ເຂົານັ່ງລົງໂດຍດີ ແຕ່ຈິດໃຈຍັງເລື່ອນລອຍ

" ຂໍເລືອດໄປກວດຈັກໜ້ອຍ " ເວົ້າສຸດທ່ານໝໍກວັກມືເອົານາງພະ ຍາບານອີກຜູ້ໜຶ່ງມາ ຂະນະທີ່ທຳການຈູບເລືອດອອກດ້ວຍເຂັມແບບ ສັກຢາ ທ່ານໝໍກໍ່ສືຖາມເຂົາໄປນຳວ່າ " ນີ້ແມ່ນລູກຜູ້ທຳອິດຂອງພວກເຈົ້າແມ່ນບໍ່?"

" ຈາວ, ແມ່ນແລ້ວ " ເຂົາບໍ່ເຫັນຄຳໃດຖືກຕ້ອງກວ່ານີ້

" ເຈົ້າຄວນຊິຄິດອອກ ມາກວດກ່ອນ... " ທ່ານໝໍໄອກາງ ຄົນ ຈິ່ມຄືບໍ່ຕ້ອງການຄຳຕອບ ເຂົາຟັງຕື່ນໆ ບໍ່ທັນເຂົ້າໃຈຄວາມໝາຍໃນ ປະ ໂຫຍກນັ້ນ ຈຶ່ງຖາມຄືນ " ເປັນຫຍັງເນາະ ທ່ານໝໍ "

ຕໍ່ຄຳຖາມ ທ່ານໝໍ ລຸກຂຶ້ນ ແລະ ໃຊ້ສາຍຕາຊວນເອົາເຂົາ ໄປທີ່ ໂຕະນັ້ນ ເຂົາແນມເຫັນຫໍ່ຜ້າຂາວຊຶ່ງວາງຢູ່ບໍ່ເໜັງບໍ່ຕີງ ແມ່ນແລ້ວ... ! ຄວາມຕື່ນເຕັ້ນທະວີຂຶ້ນຈົນແຂ້ງຂາສັ່ນໄປໝົດ.

ທັນໃດພາບຕໍ່ໜ້າ ກໍ່ສະກົດໃຫ້ເຂົາຈັງງັງຢູ່ກັບທີ່ ເປັນໄປບໍ່ໄດ້!ເຂົາ ຫຼຽວກວາດສາຍຕາໄປທົ່ວ ເພື່ອຊອກຫາຫໍ່ຜ້າຫໍ່ອື່ນ... ແຕ່ກໍ່ບໍ່ມີ... ເປັນ ໄປບໍ່ໄດ້ ! ເປັນໄປບໍ່ໄດ້ເດັດຂາດ ! ເຮົາຢາກຮ້ອງຂຶ້ນ ແຕ່ຮີມສົບ ຕິດກັນ ແໜ້ນໂດຍອັດໂຕໂນມັດ...

" ຂອງພວກເຈົ້າ ທ່ານໝໍເສັງໃຈນຳ ເບິ່ງສາແລ້ວມາຕົກລົງກັນ "

ເຂົາຕາລາຍ ເປັນໄປໄດ້ຢ່າງໃດທີ່ " ລູກ " ຂອງເຂົາ ມີຮູບ ອັບປະລັກພິດເພດຄືນປານນີ້ !

× ×

×

" ນີ້ເຂົາເອີ້ນວ່າພິດຮູບ ໕໐ % " ທ່ານໝໍ ນັ່ງລົງອະທິບາຍ ເຂົາອິດອ່ອນຫວັ່ງເວໃຈຈົນລົ້ມແຜະລົງນັ່ງຕັ່ງອີ້ຕໍ່ໜ້າໂຕະຂຽນໜັງສືຂອງທ່ານໝໍ

" ຕາມຫລັກການແພດ ເດັກນີ້ຕ້ອງຢູ່ໃນອຸປະກາລະຂອງໂຮງໝໍ - ເພາະບໍ່ທາງທີ່ພໍ່ແມ່ຈະນຳໄປລ້ຽງເອງໄດ້ຕະຫຼອດ "

" ເປັນຫຍັງນໍ... " ສຽງຂອງເຂົາຂາດໄປຈົນບໍ່ເປັນຖ້ອຍ ຄວາມໄດ້ ແຕ່ຜູ້ເປັນໝໍຍ່ອມເຂົ້າໃຈດີວ່າເຂົາໝາຍເຖິງຫຍັງ ?...

" ກໍຍ້ອນເຈົ້າເອງທັ້ນແລ້ວ ຈັກໜ້ອຍກວດເລືອດແລ້ວກໍຮູ້ຈັກ ດອກ ແຕ່ກ່ອນເຈົ້າຫລິ້ນຫຼາຍແມ່ນບໍ່ ? ນັ້ນລະມັນຫລືບໃນ ທ່ານໝໍຈົ່ງວ່າ ເຈົ້າຄວນມາກວດ ແລະ ປົວໂຕກ່ອນເອົາລູກເອົາເມັຽ ສະໄໝນີ້ເຂົາຕ້ອງລະວັງ ແລະ ວາງໂຄງການກັນດີໆແບບນີ້ "

" ເມັຽຂ້ອຍ... ຮູ້ແລ້ວຫວະ ?

" ບໍ່ ຄິດວ່າບໍ່ຄວນ... " ທ່ານໝໍໃຫ້ຄວາມເຫັນເດັດຂາດ "ເຈົ້າຮັບຜິດຊອບຜູ້ດຽວກໍໄດ້ ມັນຊິຂ້າຈິດໃຈນາງເກີນໄປ ເຈົ້າເອງພໍຈະຕັດສິນໃຈໄດ້ບໍ່ ? ຢ່າເອົາໄປເທາະ ມັນຊິເປັນບັນຫາລາງໆ ເດັກນີ້ຕ້ອງໄດ້ອາໄສ - ເຄື່ອງອຸປະກອນວິທະຍາສາດ ຈັ່ງຊິກິນຂີ້ ຍ່ຽວ ໄດ້ ເພາະຂາດອະໄວຍະວະສຳຄັນໄປຫຼາຍແນວຄືຈັ່ງເຫັນທັ້ນລະ ເຊື່ອທ່ານໝໍເທາະ ເມັຽເຈົ້າເປັນ ຄົນບໍ່ມີກຳລັງໃຈຫຼາຍແຕ່ເກົ່າຮູ້ບໍ່ ໂລກຫົວໃຈກໍສະແດງອາການແດ່ແລ້ວ ຢ່າໃຫ້ລາວຕ້ອງສະເທືອນໃຈຍ້ອນ ປະເດັກໃຫ້ໂຮງໝໍຍັງຊິມີປະໂຍດ ຖ້າເດັກບໍ່ລອດກໍເປັນທືນທາງໃຫ້ເອົາໄວ້ສຶກສາໄດ້ ".

ເຂົາພານາງອອກໂຮງໝໍເມື່ອຢູ່ເຮືອນ ດ້ວຍລູກແດງທີ່ເອົາມາຈາກໂຮງລ້ຽງເດັກອະນາຖາ ເດັກເກີດກ່ອນລູກຄີງຂອງເຂົາຕັ້ງອາທິດ

ແຕ່ນາງບໍ່ມີໂອກາດຮູ້ເລີຍ...

ທ່ານໝໍກໍເກັ່ງແທ້ ຫາໄດ້ເດັກນ້ອຍຜູ້ຊາຍໜ້າຕາເປັນຕາຮັກ ຜິວພັນພໍດີພໍຫລ້າງ ຊຶ່ງພາດພິດໄປທາງເຂົານຳ ນາງຈຶ່ງເຊື່ອສະໜິດໃຈ ວ່າເດັກນັ້ນແມ່ນເລືອດເນື້ອເຊື້ອໄຂ.

ຊີວິດບັ້ນຕົ້ນຂອງເຂົາ ທໍລະມານສຸດແສນ ເພາະຕ້ອງອົດ ອົມຄວາມລັບຕໍ່ເມັຽທັງຍາກລຳບາກ ຊ້ຳບໍ່ໜຳເຂົາກໍຕ້ອງສະແດງວ່າຮັກແພງລູກ ບໍ່ໃຫ້ຕ່າງທຳມະດານຳອີກ ໃໝ່ໆ ທ່ານໝໍເອີ້ນເຂົາໄປຫາເລື້ອຍໆ ເພື່ອເຕືອນໃຫ້ເຂົາໃຈໃສ່ຕໍ່ເດັກທີ່ນຳໄປລ້ຽງ ແລະ ຫ້າມເວົ້າສິ່ງທີ່ຈັກສ້າງ ຄວາມຜິດຫວັງ ຜິດຄາດແກ່ນາງ ນອກຈາກນັ້ນເຂົາກໍມີໂອກາດ ໄດ້ເຫັນຮູບອັປປະລັກ ນັ້ນມີຊີວິດຢືນຍາວຕໍ່ມາອີກສອງສາມເດືອນ ເມື່ອໝົດຫົນທາງຊ່ວຍໄດ້ແລ້ວ ຮ່າງນັ້ນກໍເຊົາຫັນໃຈ ແລະ ຍ້າຍທີ່ເຂົ້າໄປຢູ່ໃນຂວດໂຫລ ແຊ່ນ້ຳຢາດອງໄວ້ເປັນຕົວຢ່າງສິ່ງຜິດຮູບ ເພື່ອການສຶກສາທາງແພດຕໍ່ໄປ.

ອະນິດຈາ ຊີວິດ !



# ຄວາມງາມ ຂອງແມ່

ແມ່ຈະ ຍິ່ງໃຫຍ່ດ້ວຍ ກ່ອງກຽດຕິຍົດ
ມີວິຊາສູງ ວ່າການນຳໜ້າ
ນຳພາບ້ານ ການເມືອງລະດັບຊາດ
ເປັນຊ່າງ ນັກກໍ່ສ້າງ ຄົນຊອງຊ່າລື ກໍ່ດີ

ແຕ່ວ່າ ແມ່ຍ່ອມບໍ່ລະເວັ້ນ ໜ້າທີ່ມານດາ
ງານແມ່ ງານໃນສົ້ມ ວ່າດູແລນ້ອຍ
ງານແມ່ ງານແຂ່ນອ້ອນ "ຫອ້ມ" ເອົາບຸດກ່ອນ
ງານແມ່ ປະເສີດຍ້ອນ ຈູນລ້ຽງລ່ຳແຍງ ລູກນາ



ຄວາມຫວັງຂອງພວກເຮົາກໍ່ຄືຢາກເຫັນຊາວໜຸ່ມນັກສຶກສາ ຮຸ່ນຄົນ ຜູ້ສືບທອດຈັກເປັນຜູ້ຮູ້ຄິດຮິ່ນຕອງ ແລະ ແນນເຫັນສ່ວນໂຮມຫຼາຍກວ່າຕົນເອງ ຄືໃຜຜູ້ໜຶ່ງທີ່ຂ້ອຍໄດ້ພົບມາ.



# ບາງຄົນນັ້ນ

໑໙໘໔

ຊອງຈົດໝາຍນັ້ນ ເກົ່າຍ້ອນຮອຍເກີບຢຽບ ເກືອກຝຸ່ນມາບໍ່ຈັກທີ່ໃດນີ້ ແຕ່ເມື່ອ ຈົກອອກ ເຈຍທາງໃນຍັງໃໝ່ ເປັນແຜ່ນບາງສີຟ້າອ່ອນ ຂຽນດ້ວຍ ນ້ຳໝຶກດຳ ລາຍມືເປັນລະບຽບ ຂຶ້ນຕົ້ນວ່າ :

......

ເອື້ອຍທີ່ຮັກ ແລະ ຄິດເຖິງ,

ເປັນເວລາຫຼາຍເດືອນ ທີ່ນ້ອງບໍ່ໄດ້ຕອບຈົດໝາຍເອື້ອຍ ນັ້ນກໍຍ້ອນວ່າ ນ້ອງເອງພວມຊຸ່ນຂຽວ ປະກອບເອກະສານເຂົ້າຮຽນ.

......

ຈົດໝາຍ ຂຽນສົ່ງຂ່າວຄາວທາງຄອບຄົວແບບທຳມະດາ ສະແດງໃຫ້ຮູ້ວ່າ ຜູ້ຈະຮັບແມ່ນຢູ່ຕ່າງປະເທດ ກວງໄກ.

ນ້ອງມີຂ່າວດີໃຈຈະບອກ. ນ້ອງສຸດແສນພາກພູມໃຈ ທີ່ມີຊື່ເຂົ້າຮຽນມະຫາວິທະຍາໄລແພດສາດປີນີ້ ສົມກັບທີ່ນ້ອງໄຝ່ຝັນຄອງຄອຍມາດົນ. ເອື້ອຍຄົງຈື່ວ່າໃນຄອບຄົວເຮົາ ນັບແຕ່ເອື້ອຍແກ້ວ ເອື້ອຍກອງ ແລະ ເອື້ອຍເອງຕ່າງກໍເຄີຍປາຖະໜາຢາກຮຽນແພດຄືກັນ ແຕ່ເປັນເລື່ອງທີ່ຍາກຊາຕະຫຼອດ ມາ. ນ້ອງຈື່ວ່າ ເມື່ອເອື້ອຍແກ້ວໄດ້ທຶນໄປຮຽນຢູ່ຕ່າງປະເທດໃນປີກຽມນັ້ນລາວຜິດຮຽນວິຊາເຄມີ ແລະ ຊີວະອ່ອນຫຼາຍ. ເພິ່ນວ່າ ຢູ່ພຸ້ນ ຜູ້ຈະເຂົ້າຮຽນແພດສາດໄດ້ຕ້ອງແມ່ນນັກຮຽນເກັ່ງອີຫຼີ - ຈຳເປັນເອື້ອຍແກ້ວຈຶ່ງຮຽນວິຊາອື່ນ ຕໍ່ມາເອື້ອຍກອງ ເສັງຊຸດົມໄດ້ຄະແນນດີ ມີຊື່ເຂົ້າຮຽນແພດສາດຢູ່ວຽງຈັນຊຸດທີ ໕ ແຕ່ຜິດລົ້ມເຈັບລົງພໍດີ ກ່ອນນີ້ຈະເຂົ້າຮຽນ ແລະ ກໍປ່ວຍຢູ່ດົນ ຈົນຕ້ອງສະຫຼະສິດປະການຮຽນໄປເຂົ້າເຮັດການຂະແໜງອື່ນ ຮອດເທົ້າທຸກວັນນີ້. ນ້ອງຈື່ວ່າ ເອື້ອຍເອງກໍປາຖະໜາຢາກຮຽນແພດມາແຕ່ນ້ອຍໆ. ພໍ່ແມ່ເອື້ອຍ - ນ້ອງກໍສຸດທີ່ສະໜັບສະໜູນ ແລະ ຝາກຄວາມຫວັງໄວ້ນຳເອື້ອຍ. ແຕ່ແລ້ວເອື້ອຍກໍຈາກພວກເຮົາມາ. ເອື້ອຍຍັງຂຽນຈົດໝາຍໄປບອກວ່າ ໜີຈາກບ້ານມາຢູ່ຕ່າງແດນ ກໍຍອມຢາກຮໍຮຽນວິຊານີ້. ແຕ່ຈົນປານນີ້... ຫຼາຍປີແລ້ວ ເອື້ອຍກໍຍັງຈົ່ມແຕ່ວ່າ " ຫາເງິນຄ່າຮຽນບໍ່ທັນພໍ... ຢ້ານເສັງ ເຂົ້າບໍ່ໄດ້... " ດັ່ງນີ້ເອງ ນ້ອງຈຶ່ງສົມຫວັງ ເມື່ອຕົນເອງມີໂອກາດໄດ້ຮັບ ນະໂຍບາຍເຂົ້າຮຽນ. ເອື້ອຍເອີຍ ອີກ ໖-໗ ປີທາງໜ້ານີ້ ຄອບຄົວພໍ່ແມ່ - ເຮົາ ຈະມີທ່ານໝໍຢູ່ໝໍ່ໃກ້ລະ !

ນ້ອງເຊື່ອໝັ້ນແທ້ ວ່ານ້ອງຕ້ອງຮຽນສຳເລັດ. ນ້ອງໃຈຈົດຈໍ່ ຢູ່ກັບວິຊາການຂະແໜງນີ້ - ອາຊີບທີ່ສູງສົ່ງນີ້ມາແຕ່ຕອນນ້ອງຮຽນຢູ່ມັດທະຍົມຕອນນັ້ນ ເອື້ອຍຈາກໄປແລ້ວ ຄອບຄົວພວກເຮົາຫ່ວງໄຍເອື້ອຍຫຼາຍ ເອື້ອຍ ເຊື່ອໝູ່ ແລະ ບ້ານນຳໝູ່ ໂດຍບໍ່ບອກກ່າວເອື້ອຍນ້ອງພໍ່ແມ່ ເວລານັ້ນ ຖ້ານ້ອງຮູ້ລ່ວງໜ້າ ນ້ອງຈະບໍ່ຍອມໃຫ້ເອື້ອຍມາເດັດຂາດ. ນ້ອງແນ່ໃຈວ່າຈະສາມາດເວົ້າປຸກລະດົມ ຊີ້ແຈງ ໃຫ້ເອື້ອຍເຂົ້າໃຈ ຈົນໄດ້. ແຕ່... ມັນກໍຊາເກີນໄປເສັຽແລ້ວ. ຢ່າລະນາເວົ້າເລື່ອງການຮຽນຂອງນ້ອງເນາະ ?

* ດວງຈຳປາ

ນ້ອງຈື່ວ່າ ຕອນອາຍຸໄດ້ ໑໑ ປີ ນ້າບ່າວເພັດເຄີຍຖາມນ້ອງວ່າ ຢາກຣຽນຫຍັງ-ເມື່ອໃຫຍ່ມາຈະເຮັດອາຊີບຫຍັງ ? ນ້ອງໄດ້ຖາມລາວຄືນທັນທີວ່າ " ອາຊີບຫຍັງລະ ທີ່ມັນເປັນປະໂຫຍດແກ່ຄົນທັງຫຼາຍ ? " ນ້າບ່າວຫົວຢ່າງພໍໃຈ ແລ້ວຕອບວ່າ: " ຫຼານເອີ້ຍ ອາຊີບຫຍັງກໍເປັນປະໂຫຍດຖະແນນ ມັນເປັນອາຊີບທີ່ສຸດຈະລິດ, ບໍ່ກົດຂີ່ຂູດຣີດເອົາປຽບຄົນອື່ນໆ. ແຕ່ນ້ອງຍັງບໍ່ ພໍໃຈ ນ້ອງໄດ້ຖາມບ່າວເພັດຕື່ມວ່າ " ແຕ່ມັນກໍຕ້ອງມີອາຊີບໃດໜຶ່ງ ທີ່ ເປັນປະໂຫຍດຫຼາຍກວ່າໝູ່ຕ່ວາ ! ! ! " ນ້າບ່າວຊຸມນ້ອງຂຶ້ນດ້ວຍຄວາມ ຊົມເຊີຍ ແລະ ວ່າ:

" ແມ່ນແລ້ວຫຼານສາວຜູ້ໃຈບຸນຂອງບ່າວເພັດເອີ້ຍ ! ເອົາຈັ່ງຊີ້ສາຕາມບ່າວເພັດວ່າເນີ້... ເປັນໝໍກໍດີໄດ໋ ຊ່ອຍຊີວິດຄົນອາດຈະແມ່ນອາຊີບທີ່ເປັນປະໂຫຍດຫຼາຍຄືຫຼານຢາກໝາຍເຖິງນັ້ນກໍໄດ້ - ເປັນໝໍສາ - ເປັນໝໍກໍດີຄືກັນ "

ນ້ອງເກືອບລືມ ລາຍລະອຽດຂອງການສົນທະນາຄັ້ງນັ້ນໄປແລ້ວ ຖ້າບ່າວເພັດບໍ່ມາທ່າວຄືນໃຫ້ຟັງຫວ່າງນີ້ກ່ອນທັ້ນ ເມື່ອລາວໄດ້ຍິນຂ່າວດີຂອງນ້ອງ . ລາວເລົ່າວ່າ ນ້ອງຍັງບໍ່ພໍໃຈກັບຄຳຕອບຂອງລາວ ເວລານັ້ນຍັງຖາມຕໍ່ ໄປວ່າ:

" ໃນການເປັນໝໍ ຄວນຈະເປັນໝໍຝ່າຍໃດ ຈື່ງສຳຄັນທີ່ສຸດ ແນວຣຽນຍາກໆເຮັດຍາກໆ ທັ້ນນ່າ ນ້າບ່າວ ? "

ນາບ່າວເພັດຄິດຢູ່ຄາວໜຶ່ງຈຶ່ງຕອບວ່າ:

- ໝໍຜ່າຕັດ ຕີ້ ! ຣຽນຍາກເຮັດກໍຍາກແຕ່ມັນແກ້ໄຂຊີວິດເປັນ ຕາຍຂອງຄົນເຈັບໃນບາງກໍລະນີ ! ອັນນີ້ເວົ້າຕາມຄວາມເຫັນຂອງນ້າບ່າວ ເພັດນີ້ ບໍ່ແມ່ນຫລັກການດອກໄດ໋. ບໍ່ມີຫລັກການປິ່ງໄວ້ດອກວ່າຂະແໜງໃດສຳຄັນກວ່າກັນ. ທຸກຂະແໜງການຂອງແພດສາດກໍລ້ວນແລ້ວແຕ່ສຳຄັນໝົດ! "

- ເອີ - ຫຼານຊິຣຽນໝໍຜ່າຕັດ ! " ນ້ອງໄດ້ລັ່ນວາຈາອອກໄປ ຕາມພາສາເດັກ. ມາຮອດ ນາທີນີ້ ຂະນະທີ່ຂຽນຈົດໝາຍເຖິງເອື້ອຍຢູ່ດຽວນີ້ ນ້ອງຍັງຕື່ນເຕັ້ນ ແລະ ຮູ້ສຶກສຳພັດຢູ່ກັບຄວາມຄິດເກົ່າໆ ຄວາມຕັ້ງໃຈເກົ່າໆ

ຍັງບໍ່ຮູ້ວ່າມັນຈະສຳເລັດພົນເຖິງຂັ້ນນັ້ນຫຼືບໍ່. ແຕ່ຢ່າລະເອື້ອຍ, ເອົາຄ່າວ່າ ຖ້າໄດເປັນທານໜໍ່ກໍດີພໍແຮງແລວລະນໍ້ ?

ມື້ທີ່ນ້ອງໄປພົວພັນ ປະກອບເອກະສານເຂົ້າຮຽນ, ເອື້ອຍພະນັກງານ ຢູ່ຫ້ອງການເວົ້າຢ່ອກແບບສຸຣຸດສີ ພວກນ້ອງເປັນໜ້າຄຶດແທ້ໄດ, ລາວເວົ້າວ່າ

- ເວລານີ້, ກໍມີແຕ່ຜູ້ຢາກຮຽນທັ້ນລະ. ແຕ່ບາດເສັ່ງອອກແລວ ບາງຄົນຮອດບໍ່ຢາກສະໝັກໄປຢູ່ຕ່າງແຂວງ... ໃຜກໍຢາກຢູ່ແຕ່ສູນກາງ ! ແທ້ແລ້ວ ໄປຢູ່ແຂວງ ຫຼື ທ້ອງຖິ່ນຫ່າງໄກນັ້ນລະແຮງມີປະສົບການຫຼາຍໄດເຫັນຫຼາຍພະຍາດ. ໄດ້ປິ່ນປົວຫຼາຍ, ຮັບຜິດຊອບສູງກໍຊຳນານໄວ. ພາກັນຄາງຢູ່ແຕ່ສູນກາງນີ້... ແພດຊັ້ນສູງບາງຄົນໝົດມື້ບໍ່ໄດ້ບົ່ງມະຕິພະຍາດຄົນ ເຈັບຈັກຄົນເລີຍ ກໍຍັງມີ ! "

......

ຈົດໝາຍຂຽນມາຮອດໜ້າ ໔ ກໍເລົ່າລົ້ນຄືນເຖິງເຫດການທີ່ກະຕຸ້ນໃຫ້ຜູ້ຂຽນ (ຈົດໝາຍ) ເອງຄິດຢາກຮຽນໝໍແທ້ຢ່າງມີສະຕິເປັນເຈົ້າຕົວ ເອງບໍ່ແມ່ນເວົ້າໄປຕາມພາສາເດັກ. ນັ້ນແມ່ນຕອນທີ່ລາວເອງນອນເຈັບປາດໄສຕິ່ງອັກເສບຊະນິດຮ້າຍແຮງ ຄືໄສ້ຕິ່ງໄດ້ຂາດອອກ ນ້ຳໜອງແຜ່ເຊື້ອ ແພດໝໍຕ້ອງໃຊ້ເວລາປາດຕັ້ງ ໔ ຊົ່ວໂມງປາຍ. ຕະຫຼອດເວລານອນຢູ່ຫ້ອງພັກຟື້ນ ໔-໔ ວັນ ແພດໝໍໄດ້ເອົາໃຈໃສ່ເບິ່ງແຍງນາງທຸກຢ່າງ ບໍ່ໃຫ້ພໍ່ແມ່ - ເອື້ອຍນ້ອງຕ້ອງຫຍຸ້ງຍາກ ທັງເພື່ອໃຫ້ຖືກລະບຽບການຂອງໂຮງໝໍ. ຜູ້ຂຽນເວົ້າວ່າຄິດເຫັນບຸນຄຸນແພດໝໍຢ່າງວັດແທກບໍ່ໄດ ຕົນເອງຈຶ່ງຢາກປະກອບ - ສ່ວນເຮັດວຽກທີ່ມີປະໂຫຍດແກ່ສັງຄົມນີ້ ຄືກັນ - ວ່າຊັ້ນ.

......

ນ້ອງຄິດວ່າ ນ້ອງຈະບໍ່ເຮັດຄືຜູ້ອື່ນໆ ທີ່ເອື້ອຍພະນັກງານຄົນນັ້ນເວົ້າໃຫ້. ນ້ອງຕັ້ງໃຈວ່າ ເມື່ອຮຽນສຸດແລວ ນ້ອງຈະອາສາສະໝັກລົງທ້ອງຖິ່ນຫ່າງໄກ ນ້ອງຈະໄປທຸກແຫ່ງທີ່ມີຄົນເຈັບຕ້ອງການແພດ... ເອື້ອຍຈຶ່ງເຊື່ອເຖີດ !

* ດວງຈຳປາ

ນ້ອງຈະບໍ່ເນລະຄຸນປະເທດຊາດ, ພັກ-ລັດທີ່ໃຫ້ທຶນຮອນອັນປະເສີດຄັ້ງນີ້ຢ່າງເດັດຂາດ !

ເອື້ອຍທີ່ຮັກ ! ເຖິງແມ່ນວ່າ ເອື້ອຍຜິດຫວັງໃນຊີວິດ, ບໍ່ໄດ້ຮ່ຳຮຽນ ຄືນ້ອງຕາມທີ່ເອື້ອຍເລົ່າໄປ: ຊີວິດຊາວອົບພະຍົບຢູ່ປະເທດເຂົາພີ້ ເອື້ອຍຕ້ອງດີ້ນຮົນຕໍ່ສູ້ຫາກິນໃຫ້ອີ່ມປາກ ອີ່ມທ້ອງເອງ-ເອື້ອຍກໍຈົ່ງເປັນຕາອີດຕົນເອົາ - ເພາະເອື້ອຍໄດ້ເລືອກທາງເດີນຂອງເອື້ອຍເອງ. ນ້ອງຢູ່ບ້ານເຮົາຈະຮຽນ ເພື່ອ ແລະ ຈະປະກອບສ່ວນໃຫ້ຊາດບ້ານເມືອງເພື່ອ. ນ້ອງຮູ້ວ່າປະຊາຊົນລາວ ບັນດາເຜົ່າ ທີ່ຢູ່ເຂດຫ່າງໄກກັນດານຍັງຕ້ອງການແພດຫມໍທີ່ດີມີຄຸນ ສົມບັດ ເປັນແພດປະຕິວັດ. ນ້ອງຈະພະຍາຍາມສຸດຄວາມສາມາດເຮັດທຸກຢ່າງ ເພື່ອເອື້ອຍຜູ້ທີ່ບໍ່ມີໂອກາດ - ໃນເມື່ອເວລານີ້ເອື້ອຍເວົ້າວ່າ ເອື້ອຍບໍ່ມີ ປະເທດຊາດອີກແລ້ວ !

......

ເອົາລະ ເທື່ອນີ້ ນ້ອງຈະຂໍລາລົງກ່ອນ ເຊົ້ານີ້ນ້ອງມີຮຽນ ໔ ຊົ່ວ ໂມງຕັ້ນ ຈະຕ້ອງເບິ່ງບົດຮຽນ ໃຫ້ໄດ້ລຽນໄຫຼ. ອາດຈະມີກວດກາວິຊາ ສິລະສາດຮາງກາຍ.

ຂໍເອື້ອຍຈົ່ງໂຊກດີ.

ຈາກນ້ອງ

(ລາຍເຊັນອ່ານບໍ່ອອກ)

**ເສຍ** ດາຍແທ້ ທີ່ລາຍເຊັນຂອງນາງ ອ່ານບໍ່ອອກ. ຂ້ອຍຢາກຮູ້ຈັກ ເຈົ້າຂອງຈົດຫມາຍການນີ້. ນາງແມ່ນໃຜ ? ນາງຄົງຮຽນຢູ່ປີທີ I ນີ້ລະ ເພາະຈົດຫມາຍຍັງໃຫມ່ໆ. ຂ້ອຍໄດ້ມັນ ຢູ່ແຄມທາງເຂົ້າໂຮງການໄປສະນີ. ນາງຄົງເຮັດມັນເຮ່ຍ ໂດຍບໍ່ຮູ້ເມື່ອ .

ໜ້າເສັຽດາຍ ທີ່ຈົດໝາຍການນີ້ ບໍ່ອາດໄປເຖິງມືຜູ້ເປັນເອື້ອຍໄດ້ ເພາະ ຊື່ທີ່ຢູ່ຂອງຜູ້ຮັບ ກໍຍັງບໍ່ທັນຂຽນ.

× ×

×

ນ້ອງນັກສຶກສາເບິ່ງແມ້ !

ຊາຍໄວຂອນຄົນຜູ້ນັ້ນ ມາຢືນຢູ່ໜ້າປະຕູມະຫາວິທະຍາໄລແພດສາດຂອງ ພວກນ້ອງເກືອບທຸກມື້ ຍາມເລີກຕອນທ່ຽງ-ຍາມພວກນ້ອງພວມຈູງລົດຖີບ ລົດ ຈັກຊອນລອນໜ້າອອກປະຕູມາ. ດວງໜ້າຂອງເພິ່ນອາບອີ່ມດ້ວຍຄວາມ ພໍ ໃຈອາດໜຶ່ງ. ສາຍຕາເພິ່ນສັກແນມຄືພວມຊອກຫາ... ຄົງຊອກຫານາງ. ... ນາງຄົນນັ້ນ ! ເພິ່ນຄົງຢາກພົບ... ຢາກຮູ້ຈັກ... ເຈົ້າຂອງ ຈົດ ໝາຍ. ຢູ່ໃນໝູ່ພວກນ້ອງນີ້ລະ...

" ນາງຄົນນັ້ນ ນ້ອງຢູ່ໃສ ? "

ກະລຸນາ ຢ່າເຮັດໃຫ້ເພິ່ນຜິດຫວັງ !



* ດວງຈຳປາ

# ອ້າຍ ແລະ ເຂົາ

ຄິດເມື່ອ ຄາວກ່ອນກີ້ ນ້ອງຢູ່ນຳ " ເຂົາ "
ຫລົງເພີດ ເພີນນຳຍົດ ຫຼອກລວງເລີຍຍ້ອງ
ບໍ່ຫອນ ເຄີຍຄ້ອຍເອື້ອ ຊາວປະຊານ້ອງພີ່
ໃຜຈະ ທຸກຍາກຂອນ ເຂັນໄຮ້ກໍ່ຊາງຕານ

ຊີວິດ ຢູ່ແຕ່ລະມື້ ເມົາມ່ວນມົວສະຫນຸກ
ສຸກຢູ່ ບົນຄວາມທຸກ ລາສະດອນ ຄາງຮ່ອງ
" ເຂົາ " ອ້ອຍ ເອົາເງິນຈ້າງ ໃຫ້ນາງເລ້ງລົ້ວທ່ຽວ
ບໍ່ຮ່ຳ ຮອນຢາກສ້າງ ເຫືອງບານໃຫ້ຮຸ່ງສີ

ນ້ອງບໍ່ ໄດ້ຊວາດຮູ້ ວ່າປວງຊາດພວມຈົມ
ດິນລາວ ເປັນດິນແດນ ບ່ອນເຂົາສູ້ສະແຫວງໃຊ້
ຮູ້ຜພັງນາງ ທຳລາຍລ້າງຜ່າ
ບ້ານແຕກ ສາຍແຫຼກຮ້າງ ຮານໄດ້ຢູ່ດີ

ບັດນີ້ ຕາຮຸ່ງແຈ້ງ
"ອ້າຍ"ຫາກູ ມາພາພົບ
ຊາວປະຊາພອນ ພ່ຳພາກັນສ້າງ
"ອ້າຍ"ຈູງ ນາງລ່ຳຢຽມ

ຍາມເມື່ອ ຄະນຶງຄິດ
ບ່ອນສະຫວັນວຽງຟາ
ສັງຄົມລາວໃໝ່
ເຕັມຮູ່ຮອມໄປ

ບັດນີ້ ນ້ອງຈື່ງຮູ້
ຢາກກໍ່ ແປງສັງຄົມ
ຮູ້ຮັກ ແຮງງານສ້າງ
ຮັກ ແນວທາງທີ່ຖືກຕອງ

ຄຸນຄ່າຊີວິດ
ຮວມຈິນທັ້ງຄາຍ
ສະແຫວງຄວາມດີຊອບ
ນຳສ້າງມິ່ງເມືອງ

ນ້ອງບໍ່ ນັ່ງຢູ່ລ້າ
ມືກຳ ພວງມາໄລລົດ
ເບິ່ງແມ້ ສະຫະກອນຊຸມນ້ອງ
ເຂົ້າດົກໜາ ນາອື່ມນ້ຳ

ຄືເກົ່າເມືອຫລັງ
ເບີກດິນດົງກວາງ
ຂຽວງາມສຸດຊົ່ວ-ຕາພູມ
ພະອອນນ້ອງກໍ່ອີ່ມໃຈ

ເພາະເພື່ອ "ອ້າຍ"ຊຸບຍ້ອມ
ນ້ອງຈຶ່ງມີຄວາມໝາຍ
ເປັນຄົນມີວິຊາກາວ
"ອ້າຍ"ຊ່າງຄອຍໂອບເອື້ອ

ຊີວິດໃໝ່ ເຮືອງໃສ
ຕໍ່ປະຊາຊາວເຊື້ອ
ສະເໝີຊາຍກ້ຳເກິ່ງ
ເອີ້ນນ້ອງເຂົ້າສູ່ທາງ ຊອບແລ້ວ



ຖ້າຫາກວ່າ ເທື່ອນີ້ ເຮົາກ້າລັກ ດິນຊາຍ

ຊ້ວານໜຶ່ງຕໍ່ໄປ ເຮົາກໍຈະລັກເປັນຄັນລົດ...

ແລະ ຕໍ່ໆໄປ ມັນກໍ່ອາດຈະບໍ່ແມ່ນດິນຊາຍ ...

ມັນອາດຈະແມ່ນ...

ຄຸນຄ່າຂອງ ລາຍເຊັນ ຈະແລກກັບ ປ່ອງ

ເບຽ ລາຄາດ້ວຍ ມີ-໔໐໐ ກີບນີ້ຫລືໃດ ?



# ຄ່າ ກັບ ລາຄາ

໑໙໘໔

ເຝີ ຖ້ວຍໜຶ່ງ – ເສັ້ນນ້ອຍ " ເຂົາບອກດ້ວຍສຽງທີ່ບັງຄັບໃຫ້ປົກກະຕິທີ່ສຸດ ທ່າທີໂຍບລົງນັ່ງຕັ່ງນົ່ມ ກໍ່ຄຽມຄອງ ຄືຄົນເຄີຍຮ້ານ. ເຂົາເທົ່ານັ້ນ ທີ່ຮູ້ດີວ່າ ທ່າທີດັ່ງກ່າວເປັນພຽງການສະແດງຕົບຕາຄົນ, ຮ້ານເຝີ ບໍ່ແມ່ນບ່ອນທີ່ເຂົາຈະແວໄດ້ທຸກເມື່ອ ທຸກວັນ, ໂດຍ ສະເພາະໃນເມື່ອລາຄາຂອງມັນ ຖ້ວຍເຝີ ດີບຂຶ້ນມາເປັນສອງຮ້ອຍກີບແລ້ວ ຄືແນວນີ້ !

ເຂົາຮູ້ດີວ່າ ເຝີເປັນຂອງກິນຊະນິດຟຸ່ມເຟືອຍເກີນໄປ ສຳລັບ ສັງຄົມທີ່ພວມກໍ່ຮ່າງສ້າງຕົວຂອງພວກເຮົາໃນປັດຈຸບັນ. ອີກປະການໜຶ່ງ ຫຼາຍຄົນກໍ່ຍອມຮັບວ່າ ກິນເຝີ ບໍ່ແລວຄາບເຂົ້າ. ມັນບໍ່ຄືຕົບເຂົ້າໜຽວນ້ອຍກັບໝົກອົ່ວດອກແຄ ຫຼື ແມ່ນແຕ່ປີ້ງຂະນາບປານ້ອຍໃສ່ທ້ອສິ່ງໄດ້ນັ້ນຊ້ຳ ;

ແຕ່ເຝີ ເປັນຂອງກິນແຄມທາງ ທີ່ຍົວະໃຈບໍ່ແມ່ນຄ່ອຍ. ຮ້ານເຝີນັບມື້ນັບບານອອກດ້ຽລະດາດ ໃນທຸກເສັ້ນຖະຫນົນເມືອງວຽງຈັນ. ການ ສະເຫນີຂາຍກໍໂຄສະນາຊວນເຊື່ອ ດີແທ້ ! ມີການປຸງແຕ່ງຢູ່ຫນ້າຮ້ານ ເຮັດນ້ຳຕົ້ມອອກອາຍຖອນໆ ຊວນນ້ຳລາຍໄຫຼ! ເຮັດໃຫ້ຄວາມຢາກຂອງຄົນ ບໍ່ມີເມືອງພໍ... ການກິນ ຫຼື ກໍໄດ້ນັ່ງຕັ່ງອີ້ສະບາຍ ໆ ຢາກເອົາຂາໄຂວ່ ຫາງກິນກໍຍັງໄດ້ ! ນັ້ນຕີ ! ເຂົາເອງກໍຜູ້ຫນຶ່ງ ທີ່ຖືກຍົວະເຍົ້າໃຫ້ກາວຂາ ເຂົ້າມາໃນສະຖານທີ່ ຊຶ່ງບໍ່ຄວນສາງຄວາມແກວນເຄີຍ ຈົນເກີນຄວນ.

" ຊ່າງເຢີ !, ເຂົາຄຶດເຂົ້າຂ້າງຕົວເອງໄວ້ກ່ອນ, ນານທີປີ ຫົນດອກ ຈຶ່ງແວ່ມາຢ່າງເກົ່ງ ກໍຈະແຖມດ້ວຍຈອກຊາເຢັນ. ເງິນໃນຖົງ ຄົງບໍ່ເຖິງຂັ້ນກຽງເອີດເຕີດ.

ບໍລິການຮ້ານເຝີ ເຂົາກໍດາວ່າ ມີວິທີເຮັດດຶງດູດລູກຄ້າ ຄົນກິນ ເອົາແທ້ເອົາວ່າ. ພໍນັ່ງປັບ ກໍມີຜູ້ຍໍຈານຜັກແກ້ມ ຝານຫມາກນາວ ຫມາກ ເຜັດນ້ອຍຊອຍແລບ ມາວາງຕໍ່ຫນ້າ ເອີ້ນວ່າ ເອົາມາອອຍໃຈໃຫ້ລູກຄ້າ ຊຸມອຽນຄອຍ...ວ່າຊັ້ນສາ !

ຫຼຽວເບິ່ງຖ້ວຍເຝີ ທີ່ອອກອາຍຮ້ອນ ຫອມຊວນກິນ, ເສັ້ນກ້ອນດຽວທີ່ກຳປັ້ນເດັກນ້ອຍ ມີຊີ້ນ ໔-໕ ຝານ ວາງຢ່າຍອອກ ເຮັດຄືວ່າຫຼາຍ, ເອັນເປື່ອຍ ຊອຍແລບໆ ແອ້ນຂ້າງດ້ວຍລູກຊີ້ນຜ່າສີ່ເກືອບບໍ່ເປັນຄຳ...ທໍ່ນີ້ຫວາ-ສອງຮ້ອຍ ? ເຂົາຊວາດຄຶດຫາອີ່ວດອກແຄ ຂອງກິນປະຈຳ...ຖ້າຈິ່ງເງິນຈຳນວນນີ້ໄວ້ ຊື້ອີ່ວເນື້ອສູ່ລູກ (ກັບແມ່ເຂົາ) ຈັ່ງ ຈະໄດ້ຮອດ ສີ-໕ ຄາບແຖມດ້ວຍຫມາກກ້ວຍສຸກໆ ອີກຫວີຫນຶ່ງ ກໍຍັງໄດ້ !

ຢ່າລະ ! ຕອນນີ້ຂໍກິນເຝີຄັກໆກ່ອນ - ປັດໂທ ! ມັນຮອດຫ້າເດືອນແລ້ວຕ່ວາ ທີ່ບໍ່ໄດ້ພໍ້ຂອງຊະນິດນີ້ ! ນ້ຳມັນຫອມຂຶ້ນດັງຊີ້ງແຊບບໍ່ປອກ - ກິນເອົາຄຸນນະພາບມັນ ບໍ່ແມ່ນເອົາປະລິມານ .

ຄຳທຳອິດຜ່ານເຂົ້າຫ້ອງໄປແລ້ວ ກໍຫາກສົນຄວນ - ສົນຄຳ - ສົນເງິນ ! ພໍດີສຽງດັງໂຈເຈ ຂອງຄົນຫຼາຍຄົນ ເຂົ້າມາໃນຮ້ານ. ສຽງພວກແມ່ຍິງ.

ເຂົາກິນເຝີຂອງເຂົາຕໍ່ໄປຢ່າງສະຫງົບ.

" ຕາຍ ! ອ້າຍມາຄົນດຽວຫວະ ? " ສຽງຄ່ອຍ ສຽງຫວານ ແຕ່ແຈດປະທະເຂົ້າຫູ ພ້ອມກັບຮ່າງອ້ອນພີ້ຂອງແມ່ຍິງຄົນໜຶ່ງ ກໍເຄື່ອນມາ ນັ່ງໂຍບລົງຕໍ່ໜ້າເຂົາ. ນິ້ວມືແຫວນແກ້ວແຫວນຄຳເຫຼື້ອມມາບນຸ່ມນິ່ມຂອງລາວວາງລົງເທິງໂຕະ ຄ້າຍຄືວ່າ ຢາກໂຊລັດສະໝີຂອງຜູ້ໃສ່ບໍ່ແມ່ນຄ່ອຍ.

ວິນາທີທຳອິດ ແມ່ນເຂົາງົງງວງຫັບ !

ສາວນີ້ແມ່ນໃຜ ? ຈຶ່ງມາທັກທວງກັນ ຈັງໜ້າປານນີ້ ?

ແຕ່ເຂົາກໍຄັບຄ້າຍຄັບຄາວ່າ "ເຄີຍເຫັນ"

ເຂົາບໍ່ຕ້ອງຄຶດຢູ່ດົນ ນາງຄົນຕຸ້ຍໄດ້ສະເຫລີຍບັນຫາຂອງໃຈຂອງເຂົາຢ່າງບໍ່ລໍຊ້າ.

"ເກືອບນ້ອງເລີຍໄປຫາອ້າຍໂລດລະແມ່ນບໍ່ພີ່ນັ້ - ຮູ້ວ່າຊິມາກິນເຝີກໍໄປຊວນເອົາລະບໍ !"

ເຂົາຄຶດອອກລະ ! ຈຳພວກທີ່ໄປຢື່ນໜັງສືຂໍລາຍເຊັນ ຢູ່ທຸກມື້ທຸກວັນນັ້ນເອງ - ມື້ໜຶ່ງ ມີຮອດຫຼາຍສິບຄົນ ເຮັດແນວໃດ ເຂົາຈະໄປຈື່ພວກເພິ່ນໄດ້ ໄຄວໜ້າໄຄວຕາ. ເວົ້າປານ...

ເຂົາຄ່ອຍໆຄີບເສັ້ນເຝີເຂົ້າປາກເອົາທ່າທີ. .ແຕ່ຄວາມແຊບຄວາມນົວຫຼຸດຖອຍລົງຫຼາຍສ່ວນຮ້ອຍແລ້ວ ຍ້ອນຖືກກວນສະມາທິ !

"ອ້າຍເອົານ້ຳຫຍັງ ?... ກາເຟນົມເຢັນບໍ ຫຼືວ່າ ເບຍ - ເອົາເບຍນີ້ - ເບຍປ່ອງໜຶ່ງ !

ສາວຫຼ້ຍອ່າຍໜ້າໄປສົ່ງສຽງດັງຟັງແຈ້ງ ຄືແມ່ຄ້າຮັ່ງມີ

ເຂົາຟາວປະຕິເສດ

ບໍ່ - ບໍ່ຕ້ອງ. ນິນ້ຳຊາເຢັນແລ້ວ.

"ແລ້ວໜີ້ - ອ້າຍຊິກັບເມືອໂຮງການຕິ ?"

ເຂົາງຶກຫົວຕອບ ແລ້ວກິນເຝີຕໍ່ໄປ

ເວົ້າແທ້ ເຂົາກໍ່ຄິດບໍ່ອອກວ່າ ຈະລືມຫຍັງແດ່...ແນວຄືນບໍ່ຮູ້ກັບຈັກ ດີ້ !

"ຊັ້ນນ້ອງຊິນຳເມືອເຂົານີ້ ເຊັ່ນໃຫ້ແທ້ໄດ໋" ລາວວ່າ ທັງສັກ ແສງຕາຍ້າດຍອຍໃສ່ກົງໆໜ້າເຂົາ. ໃກ້ກັນຄ່າສອກ...

" ຊິມາລາຍໃດເດ້ ?" ເຂົາຄິດວົ້ ແຕ່ບໍ່ເຖິງກັບງຽວ. ເລື່ອງຄົນມາຂໍລາຍເຊັ່ນນີ້ ເຄີຍພົ້ນມານັບບໍ່ຖ້ວນແລ້ວ ຖາຖືກຕອງເຂົາກໍ່ຈຶ່ງເຊັ່ນໃຫ້-ບໍ່ມີບັນຫາ ເພາະເຂົາເຮັດຕາມໜ້າທີ່

ກະປ໋ອງເບຍ ຖືກວາງປັ້ກລົງ

ຄວາມກະຫາຍນ້ຳ ທີ່ເກີດຈາກການກິນເຝີຮ້ອນໆ ເຮັດໃຫ້ເຂົາ ຖືກມື ດຸ່ໄປຈັບເອົາປ໋ອງເບຍ... ກໍ່ພໍດີສຽງທີ່ດັງຟັງແຈ້ງ ຮອງໃສ່ຄົນເດີນ ໂຕະວ່າ :

" ເກັບເງິນໂຕະຂ້ອຍພີ້ເດີ້ " ເວົ້າທັງລຸກຂຶ້ນສົ່ງລາ ຍ່າງຄືນໄປນັ່ງນຳໝູ່ຢູ່ໂຕະບ້າກັ້ນ

ເຂົາຮ້ອນກົກຫູ່ວື່ງ ! ແມ່ນຮ້ອນເຝີບໍ ? ຫຼື ຮ້ອນຍ້ອນອາຍ ?

ແມ່ຍິງຄົນນີ້ຕ້ອງການຫຍັງ - ຢູ່ດີໆ ມາສະເໜີຈ່າຍຄ່າເຝີໃຫ້ ພ້ອມກັບເບັຍປ໋ອງລາຄາແພງ ຊຶ່ງສຳລັບເຂົາແລ້ວ ບໍ່ເຄີຍຄິດວ່າ ຈະຈົກເງິນຊື້ກິນເອງໄດ !

ເຂົາສະດຸ້ງ ເຢັນສັນຫຼັງວາບ...! ສາວນັ້ນ ຕ້ອງການ...ຕ້ອງ - ການ...

ນີ້ເຂົາຢູ່ດ້ຽງກັບທີ່. ຖ້າເຂົາກິນເບັຽປ່ອງນັ້ນ ເງິນອີກ ໒໐໐ ຫມື່ນຢູ່ ກໍຈະບໍ່ພໍຈ່າຍ ເພາະເບັ້ຽປ່ອງຄົງລາຄາກາຍຫລາຍກວ່ານັ້ນເປັນແນ່.

ຫນ້າທີ່ວຽກງານຂອງເຂົາ ແມ່ນເຊັນເອກະສານທີ່ປະກອບມາຢ່າງຖືກຕ້ອງ - ແມ່ນແທ້ ! ແຕ່ຖ້າບໍ່ຖືກຕ້ອງເດ້ ! ຄຸນຄ່າຂອງລາຍເຊັນ ຈະມາແລກກັບຖ້ວຍເຝີ ແລະ ເບັຽນີ້ຫຼື ?

"ຄ່າເຝີທີ່ໃດ - ສອງຮ້ອຍບໍ ? ເບັຽເອົາໄປໂຕະພຸ້ນໄປ໊ !"

ເຂົາດູ້ເງິນໃຫ້ເດັກເດີນໂຕະ ແລ້ວກໍຍ່າງອອກຈາກຮ້ານ - ບໍ່ລືມແນມຫນ້າສາວຕຸ້ຍປາກດັງ ເຂົາແນມດ້ວຍສາຍຕາຂອງຄົນທີ່ມີກຽດ, ທະນົງຕົວໄດ້ວ່າ ເປັນພະນັກງານຜູ້ປະຕິບັດຫນ້າທີ່ຢ່າງຊື່ສັດສຸດຈະລິດ ແລະບໍ່ຈຳເປັນຕ້ອງກິນເບັ້ຽຂອງຜູ້ໃດ ເພື່ອແລກກັບລາຍເຊັນ.

ເຂົາຍີ້ ຄໍຂຶ້ນຍ່າງສະຫງ່າຜ່າເຜີຍ ກວ່າເກົ່າ, ພາກພູມໃຈໃນ ແນວຄິດຂອງຕົນ.



# ເຂົ້າ

ງານເດ ນາທົ່ງກວ້າງ ເຂົ້າແກ່ເຫລືອງຕູ້ອງ
ຄຶດຄໍາສຸກ ເຮື່ອເຮືອງແດນດ້າວ
ຍາມເມື່ອ ຮວງໄກວຕູ້ອງ ແສງສູນສອດກ່າຍ
ງານກ່ຽວກ້ຽວ ກໍາເຂົ້າແກ່ນມື

ເມັດອ່ອນອ້ວນ ຜົນແຜ່ສົມບູນ
ບູຮານສ່ອນ ໃຫ້ຮັກບຸນຄຸນເຂົ້າ
ຍາມເມື່ອ ເຮົາກິນແລ້ວ ຈົ່ງຍິ້ມກອຍກ່າວ ສາທຸ !
ສາທຸ ! ຂອບໃຈຄຸນເມັດເຂົ້າ ບໍາລຸງລ້ຽງໃຫຍ່ສູງ



ມີຫຼາຍຄັ້ງຫຼາຍຄາວໃນຊີວິດ ທີ່ຄົນເຮົາຕ້ອງໃຊ້ຄວາມເດັດດ່ຽວຕັດສິນໃຈເຮັດອັນໃດອັນໜຶ່ງລົງໄປ. ມີຫຼາຍຄົນເວົ້າເປັນລັກສະນະຕັກເຕືອນວ່າຄິດໃຫ້ຄັກກ່ອນຈຶ່ງຕັດສິນໃຈ, ສຳລັບເກສອນແລ້ວ...ມັນບໍ່ແມ່ນການຄິດຄັກໆ...ແຕ່ກາລະເວລາອັນຍາວນານໄດ້ຊ່ອຍໃຫ້ນາງ ກ້າຫານເຮັດ.



# ຕັດສິນໃຈ

໑໙໘໘

ເກສອນກ້າວຂຶ້ນນັ່ງເທິງລົດຈິບສີຟ້າ ຂອງບໍລິສັດ ດ້ວຍຈິດໃຈປັ່ນປ່ວນບອກບໍ່ຖືກ. ທ້ອງຟ້າມື້ນີ້ກໍ່ຫາກແຈ່ມໃສດີ ແຕ່ຄວາມຄິດ ສັບສົນວຸ່ນວາຍ. ແມ່ນແຕ່ລຸງບຸນທຽງເອງ ກໍ່ຜິດສັງເກດໃນຫຼານສາວ.

- ໄປເທື່ອນີ້ ຈິໄປສົ່ງຂ່າວດີຕົ້ນອຍ ? ລຸງກະວ່າຢາກກິນ ເຫຼົ້ານຳແລ້ວໄດ໋ "

ລຸງກໍ່ຄົງຍັງສົງໄສໃຈຫຼານສາວຜູ້ນີ້ຢູ່ນັ້ນລະ. ເພິ່ນເຮັດວຽກງານຈັດຕັ້ງມາດົນ ເພິ່ນວ່າ ເຄີຍເຫັນມາຫຼາຍແລ້ວ ແຕ່ງອາຍຸແກ່, ກໍ່ແຮງຕັດສິນໃຈຍາກ - ເລື່ອງນີ້ !

ຄິດເບິ່ງແລ້ວ ກໍ່ແປກປະຫຼາດ. ເກສອນບໍ່ຄາດຝັນມາກ່ອນວ່າເລື່ອງມັນຈິມາລົງທ້າຍແບບນີ້. ນີ້ແມ່ນນາງພວມຈິເຮັດຫຍັງລົງໄປ ? ມັນຖືກຕ້ອງແລ້ວບໍ ? ສົມແລ້ວບໍ ກັບບົດບາດຂອງແມ່ຍິງ ຜູ້ເອີ້ນຊື່ຕົວເອງວ່າເປັນ "ແມ່ຍິງໃໝ່ " ?

## ຕັດສິນໃຈ

ອາຍຸ ໔໘ ປີແລ້ວ ສອນຕ້ອງບໍ່ເຮັດຫຍັງຄືເດັກນ້ອຍເດັດຂາດ ! ຕັດສິນໃຈແລ້ວຈຶ່ງຂຶ້ນຮັບແຜນການນຳກະຊວງ... ກໍຕ້ອງປະຕິບັດໃຫ້ມັນສຳເລັດໃຫ້ໄດ້ ! ກະຊວງມີແຜນການອອກແລ້ວ ວ່າຈະຍົກລະດັບໂຮງຫມໍນ້ອຍ ຢູ່ແຕ່ລະເມືອງ ໃຫ້ມີແພດຊັ້ນສູງປະຈຳການ.

ວານນີ້ ພໍ່ກໍພໍດີເລົ່າວ່າ :

- ຄັນຄິດວ່າຊິພໍ່ເອົາກັນໄດ້ແລ້ວກໍເອົາສາລູກເອີຍ ! ພວກເຈົ້າ ກໍເບິ່ງກັນມາດົນແລ້ວ ຊິຖ້າຮອດໃສອີກ. ເຫັນໆກັນມາແຕ່ກ່ອນປົດປ່ອຍພຸ້ນກະບໍ່... ? ມັນຊິເຂົ້າແປດປີແລ້ວເດ້ !

ແລ້ວລຸງກໍພໍດີມາຊວນວ່າ ປ້າຊິເມືອເມືອງໃຫມ່ ຫຼານຢາກໄປນຳກໍໄປເປັນຫມູ່ກັນມັນຈຶ່ງມ່ວນ. " ທາງພຸ້ນເອົາກໍຄອງເຫັນຫນ້າແທ້ໄດ້ ! "

ເວົ້າລວມແລ້ວ ກໍບໍ່ແມ່ນວ່າສອນເປັນແມ່ຍິງໃຈຫນໍ່. ຢູ່ດີໆ ຫາກດັ້ນໄປຫາເອົາຮອດກວາງໄກ-ນັ້ ? ສະພາບວຽກງານຈຳໃຫ້ເອົາຕ້ອງຢູ່ປ່າ ສອງສາມເດືອນ ຈຶ່ງໄດ້ຂຶ້ນວຽງຈັນ. ໂດຍສະເພາະ ຍາມນີ້ກໍແມ່ນລະດູຜະລິດ. ຫົວຫນ້າກອງຊຸດຄົ້ນປ່າໄມ້ຈະປະອາຍນ້ອງຫມົດກອງໄວ້ເທິງພູແນວໃດໄດ້, - ໂດຍສະເພາະ ຄົນເອົາການເອົາງານຄືເພິ່ນ ! ຈັ່ງຊັ້ນ ສອນເປັນຜູ້ ພໍມີເວລາແດ່ - ໄປມາຢາມໄດ້ - ກໍອົດສາໄປ.

ພໍຂ້າມທ່າເຮືອຟູ່ຢູ່ບ້ານໄຮ່ແລ້ວ ເກສອນກໍຄອງນັບຈຳນວນຂົວນຳທາງມາເທື່ອກ່ອນມີຄົນບອກວ່າ ຕ້ອງຂ້າມຂົວຮອດ ສິບຂົວ ຈຶ່ງຈະຮອດ ປາກຊັນບ່ອນທາງແວ່ເຂົ້າສູ່ເມືອງໃຫມ່. ເດີນທາງຄັ້ງທີສອງ ບໍ່ຕື່ນເຕັ້ນຫຼາຍ ແຕ່ມັນພາໃຫ້ຫວນຄິດເຖິງການມາຄັ້ງທີຫນຶ່ງ.

ເທື່ອນັ້ນ ຫຼາຍເດືອນມາແລ້ວ... ສອນມາເມືອງໃຫມ່ເປັນຄັ້ງທຳອິດໃນຊີວິດ ມາຊ່ອຍດອງລູກສາວກົກຂອງລຸງແລວ ກໍ່ຢູ່ຫຼິ້ນຫຼາຍວັນ. ສອນບໍ່ນຶກບໍ່ຝັນ ວ່າຈະຕ້ອງພົບພໍ້ກັບເຫດການ... ພາຍ ຄົນແລ່ນແຕກຕື່ນໄປໃສ່ລົດໄມ້, ສຽງເອີ້ນ, ສຽງຮ້ອງ ລະດົມຫາມຄົນເຈັບໄປທີ່ຫ້ອງແພດສຸກເສີນ. ຄວາມຮູ້ສຶກຮັບຜິດຊອບ ເຮັດໃຫ້ນາງຢືນເສີຍ ບໍ່ໄດ້. ບາດຕີນໄດ້ນຳພາເອົານາງກ້າວເຂົ້າສູ່ຫ້ອງປາດບອຍ ຢ່າງອັດຕະໂນມັດ.

" ເລືອດອອກຫຼາຍ " ແພດປະຈຳການວ່າ ທັງແກວ່ງຫົວ ອ່ອນໃຈ. ເຂົາເປັນແພດຊັ້ນຕົ້ນ ພຽງແຕ່ຮູ້ຊອຍຮຳບາດແຜ ອະນາໄມ ແລະ ສັກຢາ . ຖ້າຫາກຄົນເຈັບ ມີອາການບາດແຜສາຫັດ ຕ້ອງນຳສົ່ງໂຮງຫມໍເມືອງ.

" ຫຼານພໍ່ຊ່ອຍໄດ້ຢູ່ຕີ້ ? " ລຸງບຸນຫຽງ ໃນນາມຄະນະອຳນວຍການກ່າວສະເຫນີຂຶ້ນເມື່ອເຫັນສອນສົນໃຈເບິ່ງ ແຕ່ຍັງຢືນລັງເລ. ແນ່ນອນນາງເປັນນາຍແພດຜູ້ໄດ້ຜ່ານວຽກງານກວດ ແລະ ວາງຢາຢູ່ຫ້ອງປາດມາຮອດ ໓ - ໔ ປີແລ້ວ ແຕ່ນາງບໍ່ໄດ້ປະຈຳການຢູ່ທີ່ນີ້... ສອນກ້າວຂາເຂົ້າໄປ ເມື່ອຖືກຮຽກຮ້ອງເກືອບເປັນທາງການ. ນາງກໍ່ມາພັກເຊົາຢູ່ທີ່ນີ້ ນຳລຸງຊຶ່ງເປັນຄະນະ, ຫຼານສາວຈະປະຕິເສດບໍ່ຊ່ອຍ ບໍ່ຫ້ອນເປັນ - ໂດຍສະເພາະ.... ເມື່ອເຫັນຄົນເຈັບຮ້ອງຄາງຂຶ້ນ... ຢ່າງເຈັບປວດ...

ວິນາທີນັ້ນເອງ ຄວາມປະຫຼາດໃຈອັນໃຫຍ່ຫຼວງກໍ່ແລ່ນມາຕຳພົບ ໃສ່ສາຍຕາ ແລະ ຈິດໃຈຂອງສອນ ຈົນເກືອບເຊລົ້ມ ! ນີ້ແມ່ນຫຍັງກັນ ? ຄົນທີ່ສອນຢາກພໍ້ມາ ໖ - ໗ ປີ... ມາຢູ່ທີ່ນີ້ເອງຫວະ ? ແມ່ນເຂົາແທ້ໆ... " ພູແກ້ວ ! " ສຽງລຸງບຸນຫຽງເອີ້ນຊື່ເຂົາຄ່ອຍໆ ເພື່ອປຸກເຂົາຈາກ ອາການເຫນື່ອຍ - ເພີ້ຫຼັບ ຍອມພິດບາດແຜ.

" ໄມ້ທັບແຕ່ເຊົ້ານີ້ ~ແຕ່ເອົາມາບໍ່ໄດ້ ຝົນຕົກຫນັກ, ທາງຂາດ,ຕ້ອງໃຫ້ຄົນມານຳເອົາລົດຈາກເມືອງໃຫມ່ໄປຮັບ... " ນັ້ນແມ່ນຄຳໃຫ້ການຫຍໍ້ໆກ່ຽວກັບຄົນເຈັບມາຈາກສະຫນາມຕັດໄມ້

× ×

×

ປະຫຼາດ ! ປະຫຼາດອີຫຼີ ! ຫົກເຈັດປີກ່ອນ ເຄີຍຮູ້ຈັກກັນ. ຕອນນັ້ນສອນຍັງເປັນນັກຮຽນແພດສາດ ຫາກໍ່ເປັນສາວ ສ່ວນເຂົາ ເປັນອ້າຍບ່າວໃຫຍ່ແລ້ວ. ເຫດການໃນສັງຄົມ ຕອນນັ້ນ ສອນເອງກໍ່ຍັງນ້ອຍ ຄິດຫ່ວງແຕ່ການຮຽນຫຼາຍກວ່າ ຄວາມສະຫນິດສະຫນົມຈຶ່ງບໍ່ຍືນຍົງຢູ່ດົນ ເຂົາຫາຍຫນ້າຫາຍຕາຈາກວຽງຈັນໄປ - ຍິນວ່າໄປຮຽນຕ່າງປະເທດ ຄິດວ່າ... ເຂົາຈະບໍ່ກັບມາອີກແລ້ວ... ແຕ່ເຂົາກັບມາຢູ່ຫນີ້ເອງ ! ເກສອນສຸດທີ່ດີໃຈ-ອຸ່ນໃຈ ທີ່ຮູ້ວ່າເຂົາກໍ່ຮັກປະເທດຊາດບ້ານເກີດເມືອງນອນ ແລະ ເຊື່ອຫມັ້ນ ໃນການນຳຂອງພັກຂອງລັດເຮົາ ຈຶ່ງກັບມາປະກອບສ່ວນກໍ່ສ້າງປະເທດຊາດ ດັ່ງເຊັ່ນ ນັກຮຽນຮູ້ ທັງຫຼາຍ ທີ່ພ້ອມກັນຄືນມາຢ່າງເປັນຂະບວນ ໃນປີ ໗໗-໗໘ ນັ້ນເອງ.

ຄິວທີ ໔...

ຄິວທີ ໓...

ສອງຂ້າງທາງຂຽວພືບດ້ວຍຕົ້ນໄມ້ລຳສູງ. ຢາກຮູ້ເລື່ອງຕົ້ນໄມ້ ກໍ່ຕ້ອງຖາມເຂົາພຸ້ນແລ້ວ ອາຍພູແກວ ນັກຊຸດຄົ້ນຜູ້ຊ່ຽວຊານ. ເຂົາຈະ ພາຍ່າງເລາະປ່າ ອະທິບາຍຊີວິດ ແລະ ປະໂຫຍດ ຂອງໄມ້ແຕ່ລະຕົ້ນ ຫມົດມື້ຫມົດເວັນກໍ່ໄດ້ - ເຂົາຮັກປ່າ ແລະ ອຸທິດຊີວິດໃຫ້ແກ່ປ່າ. ຮຽນຈົບກັບມາຢູ່ເມືອງລາວໄດ້ ໓ ປີ ບໍ່ມີໃຜເຄີຍເຫັນພູແກວ ເຂົ້າມາແອ່ນຢູ່ວຽງຈັນ ພໍດົນ. ເຂົາບໍ່ຍອມອອກຈາກປ່າໄມ້ ຈົນມີຄົນໃຫ້ສົມຍານາມເຂົາວ່າ " ເຈົ້າປ່າ " ແລະ ນີ້ ຄືບັນຫາທີ່ເກສອນຈະຕ້ອງຕັດສິນໃຈ.

ຄວາມຜູກພັນອັນກໍ່ຕົວມາແຕ່ດົນ ຄວາມຮັກຄັ້ງທຳອິດ ໃນໄວໜຸ່ມ ເມື່ອ ກັບຄືນມາຂະຫຍາຍຕົວອີກຄັ້ງໃໝ່ ກໍ່ກັບກາຍເປັນຄວາມຮັກແພງຫ່ວງໃຍແບບຈິງຈັງ - ຢາກຮ່ວມຊີວິດກັນ. ນີ້ລະ ເປັນປັນຫາ ເກສອນກໍເປັນຄົນມີວຽກງານສຳຄັນຄືກັນ ເມື່ອໃຜກໍຄາແຕ່ວຽກ ຈະເອົາເວລາໃດເປັນຂອງຊີວິດຄູ່ ?
ແຕ່ ອາຍຸຊາວແປດປີ ກໍຮອດເວລາແລ້ວທີ່ຈະຕັດສິນໃຈຄືພໍ່ວ່າ !

- ລະວັງ ! ມີໄມ້ຂວາງທາງ ! ຈູງບຸນທຽວຮ້ອງບອກຄົນຂັບ. ລົດຖືກຫ້າມແຮງຈົນຄົນນັ່ງທາງໜ້າຫົວປັກໄປ. ເມື່ອສອນເງີຍຂຶ້ນ ກໍພົບວ່າເທິງໂນນໄກອອກໄປຈັກຊາວແມັດ ມີຄົນໜຸ່ງເຄື່ອງຂຽວຢືນຈໍ້ງ ແນປືນມາໃສ່ຢ່າງເອົາເປັນເອົາຕາຍ. ສອນແຂງໄປໝົດຄີງ.

- ໝູບລົງໄວ ! ແນວຽງ ພາເອົາລົງ-ເຂົ້າປ່າພຸ້ນ ! ສຽງຈູງສັ່ງໄວ ແບບຄົນມີສະຕິລະວັງຕົວຫຸນທຽວ

ພຽງສອງນາທີຜ່ານໄປ ເກສອນກໍພົບຕົວເອງໝັ້ນເຂົ້າປ່າຫຍ້າ ຊື່ຢ່າງຕັບສັ່ນຂວັນໜີ. ປ້າມີລູກຊາຍຫລ້າ ອາຍຸ ໓ ຂວບມານຳ ແຕ່ລູງ ໄດ້ຍາດເອົາຊຸນກອດໃສ່ອົກ ລັດເລາະປ່າແຄມທາງໄວໆ ຄືນຫລັງໄປແລ້ວ. - ເຫຼືອແຕ່ແນ ຍິງນຳກັນ ເນຽກຳມະກອນສອງຄົນ ແລະ ຊາຍໜຸ່ມ ໓ ແມນໂຊເຟ ແລະ ນັກຮຽນຈົບ ອ.ມ ສອງຄົນ ທາກໍ່ບັນຈຸໃໝ່ ຈະລົງມາເຂົ້າວຽກຢູ່ສະໜາມ.

ຈາກໂນນທີ່ຜູ້ຮ້າຍຢືນຢູ່ ມັນບໍ່ສາມາດຈະຍ່າງກົງມາຫາລົດ ຂອງພວກນາງໄດ້ຢ່າງງ່າຍໆ. ຕອນມັນເສຽເວລາປີນລົງມານັ້ນເອງ, ຈູງບຸນທຽວໄດ້ເຜັ້ນໜີໄປໄກພໍແຮງແລ້ວ ແລະ ພວກ " ລີ້ໄພ " ກໍຮຽກຂວັນ ຄືນມາຄີງ.

ເກສອນເລີ້ມຕັ້ງສະຕິ ເຂົ້າໃຈສະພາບການວ່າ ລຸງ-ໃນນາມຄະນະບໍລິສັດ ກ່ອນອື່ນຕ້ອງຫນີຈາກວົງລ້ອມຂອງສັດຕູ ເພື່ອບໍ່ເສັຽທາ

ພວກມັນສອງຄົນ ຍ່າງລົງມາຮອດລົດ ໄຂປະຕູປົງປັງ ບອກກັນວ່າ

" ຄົ້ນເບິ່ງເງິນແມ ! "

" ມີເງິນແມ່ນບໍ່ - ເງິນຂອງບໍລິສັດຢູ່ໃສ ? " ບັກຫນຶ່ງຮ້ອງຖາມ ສອນຢືນບັງພຸ່ມໄມ້ ແນມເຫັນແຕ່ຫົວມັນ ຕາມຫວ່າງປ່ອງຢ້ຽມລົດ

" ບໍ່ຮູ້ນຳເພິ່ນແລ້ວ " ຕັດສິນໃຈຕອບອອກໄປແບບໂງໆ

ມັນບໍ່ໄດ້ຫາ ຂູ່ຕູ່ :

" ບັກໂຊເຟີເດໄປໃສ ? "

" ຈັກແລ້ວ - ແລ່ນໄປໃສບຸ " ສອນຄິດອອກຕົວະໄປ ທັງທີ່ ໂຊເຟີ ຫມູບຢູ່ຂ້າງກັນ

" ມີໃຜແດ່ຢູ່ຫັ້ນ " ພວກມັນກໍ່ບໍ່ກ້າບຸລົງມາລຸງຄົນຫຼາຍຄົນ. ພວກມັນມີແຕ່ ໔ ຄົນນຳກັນ ຫນ້າຕາຍັງຫນຸ່ມ ແລະ ອ່ອນປະສົບການປຸ້ນ ເຮັດໃຫ້ສອນມີກຳລັງໃຈຂຶ້ນມາ

" ມີໃຜແດ່ຫັ້ນ ? " ສຽງມັນຂູ່ຊ້ຳ

" ໂອຍ... ພວກເຮົາໄທບ້ານຢູ່ໃກ້ເມືອງໃຫມ່... ຂໍມາ ນຳເພິ່ນເອົາລູກໄປນອນໂຮງຫມໍຫາກໍ່ອອກ... " ປ້າ ເນຽລຸງບຸ່ນຫຼຽງ ຄິດພໍ່ຂ້ອງເອົາຕົວລອດ ເພາະພໍ່ຄີມີແມ່ຍິງຄົນຫນຶ່ງ ຫາກໍ່ອອກໂຮງຫມໍມາຜ່າ ແຕ່ກໍ່ແມ່ນເນຽພະນັກງານຄືກັນ

ໄດ້ຜົນ ! ພວກມັນເຊື່ອ ຄຳໃຫ້ການທຳມະດາ ໆນັ້ນ

ມັນເລາະ ໄຂປະຕູນັ້ນ ທຳປະຕູນີ້ ຢູ່ອີກຫຼາຍບາດ - ບໍ່ເຫັນຫຍັງຈະເປັນຕາເອົາໄປໄດ້. ໃນລົດມີແຕ່ຂອງຫນັກໆ ເຊັ່ນ ທີບນ້ຳຕານ, ນ້ຳມັນ, ແຟັບ ເພື່ອຈະໄປເບີກອັດຕາພະນັກງານໃນຕົ້ນເດືອນ ກອງບ່ອນນັ່ງ ມີກະເປົາເງິນເຊື່ອງຢູ່. ແຕ່ພວກມັນຟ້າວຟັ່ງໂພດ ຄົງບໍ່ກ້າກວດຢູ່ດົນ

" ຜິດແຜນແລ້ວ - ລາຍງານວ່າມີເງິນມາຫຼາຍ " ມັນສັນນິຖານ - ແບບງ່າຍດາຍ

" ໄດ້ລະ ພາກັນໄປສາ ! ຊິຈູດລົດໄດ້ ! " ມັນບອກທັງໂບກມື ບໍ່ໃຫ້ໝູບຢູ່ຫັ້ນ.

ປ້າເປັນຜູ້ນຳໜ້າພາທາງ ແຕ່ສອນກໍສັ່ນ ເພາະບໍ່ມີປະສົບການ ແບບນີ້ມາກ່ອນ. ຕອນຈະກາຍລົດໄປຕົກໃຈວາບ ຢ່ານພວກມັນເຫັນກະເປົາ ທີ່ນາງຖື ເພາະມັນແມ່ນໜັງດີສົມຄວນເລີຍຟ້າວເອົາມາກອດບັງໄວ້ໜ້າເອິກ ຢ່ານພວກໂຈນຈະເຫັນວ່າ " ບໍ່ແມ່ນປະຊາຊົນ " ຄືດັ່ງໃຫ້ການທຳອິດ

" ພວກນີ້ແມ່ນໃຜ ມີແຕ່ຊາວໜຸ່ມນີ້ ? " ມັນຊູຖາມນຳຫລັງ

" ເປັນນັກຮຽນຢູ່ - ຂໍມາຢ່າມບ້ານ... " ທາວໂຊເຟີແທຕອບທັງຍ່າງພິກໄປ

ເມື່ອໜົດທັງ ກ ຄົນຍ່າງມາໄດ້ປະມານ ໑໔ ນາທີ ກໍພົບລຸງບຸນທ່ຽງ ລີ້ຢູ່ພຸ່ມໄມ້ແຄມທາງກຳປືນຈໍ້ ທາກຽມພ້ອມ ແລວລົດຄັນອື່ນໆ ທີ່ຕິດຕາມມາ ກໍມາຕອນເອົາ

ພວກໂຈນບໍ່ທັນໄດ້ຈູດລົດສົມມັນຊູ່ ເພາະລູກກອດກາ ຂອງກອງ ທະຫານເຮົາຜ່ານມາທັນ. ມີການຕິດຕາມໄລ່ກວດລ້າງພວກປຸ້ນເຂົ້າໄປ ໃນປ່າເລິກ ຈັບສັດຕູໄດ້ ໔ ຄົນ. ເປັນອັນວ່າຝັນຮ້າຍຕອນກາງເວັນໄດ້ຜ່ານ ພົ້ນໄປ

" ເລື່ອງມັນ ບໍ່ແມ່ນຊິມີແນວນີ້ເລື້ອຍດອກ " ລຸງບຸນທ່ຽງ ຕົບບ່າເກສອນຢ່າງອອຍໃຈ. ເຫດການສັ່ນຂວັນ ກິນເວລາບໍ່ຮອດເຄິ່ງຊົ່ວໂມງ ແຕ່ລຸງຮູ້ວ່າ ມັນອາດເຮັດໃຫ້ຫຼານສາວປ່ຽນໃຈກໍເປັນໄດ້. ຄືນແຮງບໍ່ເຄີຍຜ່ານສິ່ງຄານ ! " ພວກມັນກາອອກມາປະກົດຕົວ ແຕ່ສະເພາະເວລາລົດ ເຮົາຫາງກັນຫຼາຍໆ ແຕ່ປານນັ້ນ ມັນຍັງບໍ່ທັນ ! ມັນຂີ້ຢ້ານຊິຕາຍດອກ ! "

" ລຸງຄືບໍ່ຫວັ່ນໄຫວເລີຍ ! " ເກສອນຫວງ ໃຈຍັງສັ່ນຢູ່ ແຕ່ແນວຄິດເລີ່ມໝູນທຽງຄືນ ຍ້ອນເຫັນລຸງເປັນແບບຢ່າງ ນັກຕໍ່ສູ້. ແນ່ນອນ - ແລ້ວ ລຸງເຄີຍເປັນທະຫານ ສະໄໝຕໍ່ຕ້ານຝະລັ່ງ ລຸງກໍເຄື່ອນໄຫວແຕ່ຢູ່ ໃນປ່າ - ຮູ້ວິທີ ແລະ ກາລະເວລາຄວນຫຼົບຫຼີກ ຫຼື ປະຈັນບານກັບສັດຕູ. ລຸງຜ່ານການຕໍ່ສູ້ມາຕັ້ງດົນນານ

ຢູ່ ບ່ອນລົດຮອດເມືອງໃໝ່ ຕອນ ບ່າຍສອງໂມງພໍດີ. ພໍ່ບ້ານຮູ້ວ່າ ສອນຈະມາ " ເຈົ້າປ່າພູແກວ " ພໍດີເຂົ້າມາລາຍງານສະພາບວຽກງານປະຈຳອາທິດ. ຫົວໜ້າຊຸດລັບ "ພະລີສີ" ຕາມພວກກຳມະກອນຕັ້ງຊື່ໃຫ້ (ເພາະກອນໜ້ານີ້ ເຂົາມັກຈິ່ງໝວດເຄົາ) ຕື່ຕ່າງເອົາຝ່າຍມາຂໍຜູກແຂນເອົານາງໜໍ່ ຜູ້ເຄີຍຊ່ອຍຊີວິດເມື່ອຫຼາຍເດືອນ - ກອນ

- ມາເຢີ້ ຂວັນເອີຍ ! ໜີຈາກໂຈນປຸ້ນ ມາຢູ່ເມືອງໃໝ່ພີ້ສາ.. ... ຫຼື ຊິເຂົ້າປ່າໄປຮອດຫວຍນ້ຳເຜີ້ງນຳອາຍກໍໄປ... " ເອົາ ຜູກແຂນໃຫ້ສອນ ແລວຜັດບໍ່ຍອມວາງມື ເຣັດແສງຕາອອນວອນໃສ່ນາງ ຄືເອົາ - ເຄີຍເຣັດມາຫຼາຍຕໍ່ຫຼາຍເທື່ອ ຈົນນາງພວມໃຈອອນ

- ວ່າຈັ່ງໃດ ຕັດສິນໃຈລະ ? ຂໍຖາມເປັນເທື່ອທີ່ຮອຍ ແລະ ຊິຖາມຊື້ໄປເລື້ອຍໆ ຕະຫຼອດຊີວິດ ຄັນຍັງບໍ່ຍອມຕອບ ລອງເບິ່ງວ່າຄືນ ຊິດູຟັງປານໃດ ? ເອົາຊູຕາຍິ້ມຢ່າງມີຄວາມໝາຍ

ເອົາເປັນຫຍັງບໍ່ຖາມສອນຈັກຄວາມວ່າ " ຢ້ານບໍ່ ມື້ນີ້ ? " ຫຼືວ່າ " ຈະມາຢູ່ນຳອາຍຢູ່ປ່າໄດ້ບໍ່ ? " ຫຼື ອື່ນໆທີ່ມັນຈະແຈ້ງກວ່ານີ້ ?

ທັງສອງຍ່າງຫຼົ້ມ ຂ້າມຂົວຫ້ວຍໄປຈົນຮອດໂນນ ທີ່ຕັ້ງໂຮງໝໍນ້ອຍ . ຫລັງເຮືອນສີຂາວ ສະອາດຕາ ປຸກແບບກະທັດຮັດ ໃນທັ້ນ ສອນເຄີຍ ໄດ້ຈັບບ້າຍອຸປະກອນການແພດອັນທັນສະໄໝ ເຮືອນນອນຄົນເຈັບ ປຸກເປັນເຮືອນໄມ້ປອດໂປ່ງເປັນຕາສະບາຍ ຢູ່ຫ່າງອອກໄປ. ພຽງແຕ່ມີແພດຊັ້ນສູງ ມາປະຈຳການ ຊາວເມືອງໃໝ່ ກໍຈະສາມາດຍົກລະດັບການປິ່ນປົວຂຶ້ນອີກໄດ້ທົ່ວເຖິງ ຢ່າງໜ້ອຍ ເມຽກຳມະກອນ ກໍຈະໄດ້ມາອອກລູກຢູ່ຫນີ້ ບໍ່ຕ້ອງຫອບກັນໄປເມືອງ... ຫຼືເມືອຢູ່ວຽງຈັນເປັນຫຼາຍໆເດືອນ ຄືຜ່ານມາ. ຈຸດເລັງຂອງກະຊວງສາທາ ໆລໆ ປີນີ້ ກໍແມ່ນການປາບພະຍາດໄຂ້ຍຸງໃນເຂດ ນີ້ ແລະ...

ເກສອນຍ່າງຂຶ້ນໄປຢືນຢູ່ປະຕູເຂົ້າໂຮງໝໍນ້ອຍຢ່າງສະຫງ່າຜ່າເຜີຍ.

" ປະຈຳການ ຕາມມະຕິຄຳສັ່ງຂອງກະຊວງສາທາ ໆລໆ " ສອນເວົ້າອອກມາຄືຄົນພວມຝັນລະເມີ ເຈົ້າຂອງເອງກໍບໍ່ຮູ້ຊ້ຳວ່າ ນັ້ນແມ່ນການປະກາດຄວາມຕັດສິນໃຈຄັ້ງໃຫຍ່ໃນຊີວິດ. ແລະ ຕັດສິນໃຈສອງຊ້ອນ ! - ນອກຈາກຈະຍອມມາຢູ່ເມືອງໃໝ່ນຳ " ພະລິສີເຈົ້າປ່າ " ແລ້ວສອນຍັງຈະຍ້າຍມາເປັນນາຍແພດຢູ່ຫນີ້ອີກ

ພູແກ້ວແລ່ນມາຮອດຕົວນາງຢ່າງລືມຄີງ ເອົາຈັບມືນາງສັ່ນແບບ ມິດສະຫາຍ ດີໃຈນຳກັນ

- ຂອບໃຈສອນ ອ້າຍຂອບໃຈແທ້ໆ ຊີວິດອ້າຍແຮ່ງຊິມີຄວາມໝາຍ ການຕັດສິນໃຈຂອງນ້ອງໃນວັນນີ້ ມັນສະແດງອອກຈະແຈ້ງທີ່ສຸດວ່າ ນ້ອງແມ່ນເພື່ອນຮ່ວມຮົບຂອງອ້າຍແທ້ ! ແລະ ນ້ອງມາຢູ່ ບໍ່ແມ່ນເພື່ອອ້າຍຄົນ ດຽວຫາກແຕ່ເພື່ອຊາວເມືອງໃໝ່ທຸກຄົນນຳອີກ ", ສຽງຂອງພູແກ້ວ ສັ່ນ ສະທ້ານດ້ວຍອາລົມປີຕິຍິນດີອັນລົ້ນພົ້ນ

ບ່າວສາວຈູງມືກັນໄປຢຸດຢືນຢູ່ໃນສວນດອກໄມ້ທາງໜ້າໂຮງໜໍ ແລ ຈົມນ້ຳຈັນທີ່ໃສ່ຂຽວ ສ່ອງເຫັນເງົາໄມ້ຢືນຊ້ອນລອນເໜັງຕິງພໍນອຍນາດ. ອາກາດເຢັນຄ່ອຍຄືບຄານເຂົ້າປົກຄຸມ ທົ່ວທັງປ່ານິດສະຫງັດ... ສອງຊີວິດຢືນຮຽງກັນ ສູດອາກາດບໍລິສຸດ. ສອງຊີວິດທີ່ໄດ້ຕັດສິນໃຈ ຮ່ວມເປັນ ຊີວິດດຽວ ຮ່ວມວຽກງານ ເພື່ອອຸດົມການອັນດຽວກັນ

× ×

×



# ສະບິງບາ

ສາຍຝົນ ລິນລົ່ງຍ້ອນ ພົ້ນແຜ່ນພະສຸທາ ທີ່ພູນ
ກົບຂຽດ ຫອຍປູປາ ອົ່ງນອງຫນອງນາ
ຍາມເດືອນເກົ້າ ໃນນາເຂົ້າອ່ອນ
ໃຈພໍ່ ຄຶດຮຸ່ງອ້າຍ ນິມ້ອນອດນະໂນ ແທ້ແລ້ວ

ລາຕີ ກອນກາດຟ້າ ດາວພ່າງພໍແສງ
ຈັນທະ ຈອນຈຸ່ອນດັບ ມິດສີແສງເສົ້າ
ສາຍລົມຕອງ ກາຍາຫນາວສັ່ນ
ຈິດກະສົນ ຫມ່ອນຮູ້ ຍາມຮ້າງຫ່າງໄກ ນີ້ນໍ

ແມ້ງເມື່ອ ວັນຮຸ່ງເຊົ້າ ອະລຸນອ່ອນວຽນເຖິງ ກໍດີ
ນະພາຜັນ ອາບແສງສູນກາ
ຍ່າມແລ້ງຄອຍ ແຄນຂອງເຂີນທາດ
ນ້ອງນັ່ງ ຄອຍພີ່ອ້າຍ ໃຈສະລັ້ງວັ່ງເວ

ແມ່ນວ່າ ຍາມຍ່າງຍ້າຍ ແປປ່ຽນລະດູການ
ວັນຄືນຄາຍ ຜ່ຽນຜັນນິເວັ້ນ
ຈັນຄານຄ້ອຍ ພະທັດເສົາແຖມຖ່າຍ ກໍດີ
ນ້ອງຍັງ ຄິດພໍ່ອ້າຍ ຜູ່ຮານຮ້າງຫ່າງສະເໜ

ຍາມມ່ອນ ຍິນຊື່ນຟ້ອນ ຮ້ອງອ່ອຍລຳຂັບ
ຄາວນັ້ນ ການງານພັກ ຊວາຊຸມສະຫລອງລ້ຽງ
ອ້າຍພີ່ ພາເຮິງຫລິ້ນ ທັດສະນາພູມປະເທດ
ຊົມວັດຖຸເກົ່າເບື້ອງ ໂບຮານໃຫເບີກເບີຍ

ທຳມະຊາດພ້ອມ ສວນອາດຊຸດທິຍານ
ຂອນຊອນ ມາລີບານ ເບັ່ງຈູມຈຳຄົ້ວ
ອ້າຍພີ່ ຍັງເຄີຍຊວ້ານ ດວງງ່າມເວນນອບ
ນ້ອງຫ່ອນ ລືມລ່າຍໄດ້ ຄາວນອນຮັບສະໜອງ ພີ່ນັ້ນ

ບໍ່ວ່າ ຝົນແລະແລ້ງ ຮ້ອນເຮັ່ງໜາວເຢັນ
ລະດູການຫອນຈັກ ປ່ຽນແປງໃຈນ້ອງ
ຍັງພະວົງຫາເຈົ້າ ຈອມຂວັນຍອດຂະໜ່ອມ
ອ້າຍພີ່ ເຊີນເຊື້ອໝັ້ນ ໃນນ້ອງເຮັ່ງທະວີ ນັ້ນເຖີ້ນ

ບັນຫາໜຶ່ງ ທີ່ຜູ່ໃດກໍ່ປະຕິເສດບໍ່ໄດ້ກໍ່ຄືການຢາກມີສະມາຊິກໃນຄອບຄົວທີ່ເປັນປົກກະຕິສົມບູນທັງກາຍ ແລະ ໃຈ... ບຸກຄົນໃດທີ່ແກ້ປົມຂອດສ້າງຄວາມໝັ້ນໃຈອຸ່ນອຽນໃຈໃຫ້ແກ່ຜູ້ຄອງຄອຍເຂົາຜູ້ນັ້ນສົມຄວນໄດ້ຮັບຄຳຍ້ອງຍໍຈາລຶກຊື່ ຢູ່ໃນຄວາມຊົງຈຳຂອງພວກເຮົາຕະຫຼອດໄປ



# ເພື່ອຜູ້ເກີດໃໝ່

໑໙໘໑

**ຂ້ອຍ** ສຸດທີ່ພາກພູມໃຈ ແລະ ມີຄວາມສຸກທີ່ຕົ້ນປີນີ້ ຂ້ອຍໄດລູກສາວເກີດມາ ມີສຸຂະພາບ ສົມບູນດີ. ພວກເຮົາຈັດບູນ ສູ່ຂວັນອອກກ່າວຂ່າວພິເສດແດ່ ເພາະການເກີດລູກຂອງຂ້ອຍຜູ້ນີ້ ນັບວ່າ ເປັນຂ່າວໃຫຍ່ ເປັນໄຊຊະນະຂອງຂ້ອຍ ແລະ ຂອງບັນດາແພດໝໍຜູ້ທີ່ຊ່ອຍເຫລືອມາແຕ່ຕົ້ນ. ບໍ່ແມ່ນຂອງທຳມະດາ ກວ່າຈະໄດອີນາງນ້ອຍຜູ້ໜ້າຮັກ ອອກມາຊົມໂລກ

ຂ້ອຍຈື່ວ່າ ລະຫວ່າງນອນພັກຜ່ອນຢູ່ໂຮງໝໍຫລາຍໆວັນນັ້ນ ຂ້ອຍມີເລື່ອງຕື່ນເຕັ້ນ ເລົ່າສູ່ເພື່ອນຍິງທີ່ນອນຫ້ອງດຽວກັນຟັງ ບໍ່ອິດບໍ່ຢາກ ກ່ຽວກັບປະສົບ ການໃນການມີລູກ ແລະ ອອກລູກຂອງຂ້ອຍ ຊຶ່ງເປັນເລື່ອງ ທີ່ໂດ່ງດັງຊ່າລືທົ່ວໂຮງໝໍມາແລ້ວ ຂ້ອຍຍັງພໍໃຈເລົ່າຄືນ ບໍ່ອາຍາມໃດ ແລະ ຢ່າງບໍ່ມີວັນເປີດໜ່າຍເປັນ.

× ×

×

- ນ້ອງອາຍຸທໍ່ໃດ ແລ້ວນໍ້ ? "

- ຊາວແປດປີ "

- ແຕ່ງດອງມາດົນປານໃດແລ້ວ ? "

- ສິບປີ "

- ສິບປີ ! ແຕ່ຫາກໍ່ມີລູກຜູ້ທຳອິດ ? ຕາມໃບນຳສົ່ງຂອງຝ່າຍ ພະຍາດແມ່ຍິງ ເພິ່ນວ່ານ້ອງໄດ້ຮັບການປິ່ນປົວຊ່ອຍໃຫ້ມີລູກໄດ້ສຳເລັດຜົນ ສົມຄາດໝາຍແລ້ວນໍ້ ນີ້ ຂໍສະແດງຄວາມດີໃຈນຳເນີ້ "

- ເຈົ້າ " ຂ້ອຍຕອບສຽງເຄືອ ສັ່ນດ້ວຍຄວາມພາກພູມໃຈ ຈົນສະທ້ານ

ທ່ານໝໍຍິງ ແນມເບິ່ງໜ້າຂ້ອຍ ພໍແຕ່ແນບດຽວ ແລ້ວເພິ່ນ ກໍກົ້ມລົງອ່ານເອກະສານໃນນັ້ນອີກ ຄືວ່າສົນໃຈນຳປະຫວັດຄວາມເປັນມາຂອງພະຍາດຂ້ອຍ ເອົາແທ້ເອົາວ່າ

ຂ້ອຍເວົ້າວ່າພະຍາດ ແຕ່ຄວາມຈິງຂ້ອຍບໍ່ຊົງຄືເປັນຄົນເຈັບຈັກໜ້ອຍດອກ ຂ້ອຍມີໜ້າຕາສົດໃສກຽງໜ່ອນຄືຄົນດີງ ມີແຕ່ຮ່າງຄິງເທົ່ານັ້ນທີ່ປາກອ່າວໜາແດບໍ່ສົມຄົນຫາກໍ່ມີລູກຜູ້ທຳອິດ

ໄດ້ສາມເດືອນມາແລ້ວ ທີ່ຂ້ອຍມາພົວພັນສະເໜີທຳການປິ່ນປົວ ຢູ່ພະແນກກວດພະຍາດແມ່ຍິງແຫ່ງນີ້. ການຕິດຕາມຂອງແພດຊ່ຽວຊານດ້ານ ພະຍາດຂ້ອຍ ຫລື ເວົ້າໃຫ້ຖືກແທ້ ກໍແມ່ນພຽງຄວາມບົກພ່ອງຂອງມົດລູກ ກໍຄືອະໄວຍະວະ ກຽວກັບການພະລິດລູກຂອງຂ້ອຍນັ້ນ ບໍ່ແມ່ນເລື່ອງຫຍຸ້ງ ຍາກຍາວນານແຕ່ຢ່າງໃດ ເພິ່ນໄດ້ອະທິບາຍສູ່ຂ້ອຍຟັງວ່າ ມັນເປັນບັນຫາ ທີ່ມັກພົບເຫັນເລື້ອຍໆ ໃນບັນດາແມ່ຍິງທີ່ບໍ່ມີລູກ ຫລື ແນໜັນທົ່ວໆໄປ ຢູ່ບ້ານເຮົາແມ່ຍິງດັ່ງກ່າວ ບໍ່ຄ່ອຍສົນໃຈມາໃຫ້ແພດກວດ ແລະ ຫາທາງ ຊ່ອຍໂດຍອ້າງເຫດຜົນອັນງົມງາຍແຕ່ວ່າ: ຕົນເກີດມາ ບໍ່ມີບຸນວາດສະໜາ ເອົາ

ແຕ່ບຸນກຳນຳແຕ່ງເທາະ ! ຫລື ບາງຄົນກໍວ່າອາຍ ນັ້ນໆ ນີ້ໆ ເປັນ ແນວນັ້ນໄປ ແລວກໍພາກັນຫູກລະທົມຂົມຂື່ນ ໃນການທີ່ບໍ່ອາດສາມາດມີລູກ ໄດ້ຄືບ້ານຄືເມືອງເພິ່ນ ຂອຍເອງກໍຢູ່ໃນຈຳພວກທີ່ວ່ານີ້ ເປັນເວລາຮອດສິບປີ. ຂອຍເປັນຊ່າງຫຍິບຈັກນຳກ້າງບ້ານ ຄວາມຮູ້ຈົບມັດທະຍົມ ແຕ່ກໍບໍ່ເຄີຍສົນໃຈເລື່ອງວິທະຍາສາດກ້າວຫນາ ບັດນີ້ຈາກການແນະນຳຂອງເພື່ອນເຮືອນໃກ້ຄົນຫນຶ່ງ ຊຶ່ງເປັນນາງແພດ ຢູ່ໂຮງຫມໍແຫ່ງນີ້ ຂ້ອຍຈຶ່ງຕັດສິນໃຈ ເດັດດ່ຽວຢາກໃຫ້ມັນຮູ້ແຈ້ງຂາວວ່າ ຈຸດອ່ອນຂອງຕົນມີຄືແນວໃດແທ້. ແລະ ບັດນີ້ຂອຍກໍບັນລຸເຖິງຈຸດປະສົງຄວາມມຸ່ງມາດ ປາຖະຫນາ ອັນເຄີຍເປັນ ພຽງລາງຝັນນັ້ນແລວ

- ຄວາມແນະນຳຂອງເອື້ອຍ ກໍບໍ່ມີຫຍັງຫລວງຫລາຍດອກ " ທ່ານຫມໍອະທິບາຍແກ່ຂອຍ ພາຍຫລັງທຳການວັດແທກກວດກາຄົບຖ້ວນຕາມວິທີ ການກວດແນ່ນານ. " ພຽງແຕ ນອງຕອງເອົາໃຈໃສ່ພິເສດຕໍ່ຕົວເອງ, ຫມັ່ນມາກວດຕາມກຳຫນົດ ທີ່ເຮົາບົ່ງໄວ້ນີ້ ແລະ ຖ້າມີອາການອັນໃດ ຜິດປົກກະຕິຕອງຟ້າວມາຫາພວກເຮົາ ເນີ້ ! ທໍ່ນັ້ນລະ ບໍ່ໃຫ້ມີຫຍັງຊຸກອັ່ງໃຈໃດເນີ້ມີແຕ່ໃຫ້ຮູ້ວ່າ ນີ້ເປັນຂ່າວດີ ເປັນເລື່ອງທີ່ຫນ້າຊົມເຊີຍທີ່ສຸດໃນວົງການ ແພດລາວເຮົາ ທີ່ໄດ້ມີໂອກາດ ຊ່ອຍໃຫ້ນອງໄດ້ເປັນແມ່. ຕໍ່ຈາກນີ້ ທັງນອງທັງຝ່າຍແພດເຮົາ ມີຫນ້າທີ່ຮ່ວມມືກັນ ເຮັດແນວໃດ ໃຫ້ລູກຂອງນອງໄດ້ອອກມາແລະ ໃຫຍ່ກາຫນ້າບານຄືຫມູ່ "

ວາຈາຂອງເອື້ອຍຫມໍຄົນນັ້ນ ດຣ.ສີສະຫວາດ ຜູ້ທີ່ຂ້ອຍພາຕົວເອງພາທອງລູກຜູ້ທຳອິດ ໄປຝາກຊີວິດອິນຊີນຳ ເປັນດັ່ງນ້ຳທິບ ອາບ ລູບໂລມຫົວໃຈຂອຍ ທີ່ເຄີຍຫວາດລະແວງ ຫວັ່ນໄຫວນັ້ນ ໃຫ້ກັບກາຍເປັນຊຸ່ມຊື່ນແລະ ເຊື່ອຫມັ້ນ. ສິບປີໃນຊີວິດ ສົມລົດ ທີ່ບໍ່ເຄີຍມີລູກ ແຕ່ບັດນີ້ ຂ້ອຍກໍມີຄື

ບ້ານເມືອງເພິ່ນແລ້ວ ຂ້ອຍຈື່ຈຳ ຮອຍຍິ້ມເທິງໃບໜ້າ ທີ່ນີ້ມນວນ ນັ້ນຕິດຕາ ທ່ານໝໍ ສີສະຫວາດ ຕັ້ງເປັນຄົນມີສີຣັກ ຕອບຮັບ ກັບຄຳເວົ້າອັນລະຄົມໃຈຢ່າງເລິກເຊິ່ງ ຂອງເພິ່ນອີກຕື່ມ ຂ້ອຍແຮ່ງຕິດໃຈເພິ່ນແຕ່ນັ້ນມາ

ທຸກຄັ້ງ ທີ່ຂ້ອຍມາໃຫ້ ດຣ.ສີສະຫວາດ ກວດສຸຂະພາບລູກ ໃນທ້ອງ ແລະ ກວດສຸຂະພາບຂ້ອຍເອງນຳ ຂ້ອຍກໍແຮ່ງພົບວ່າ ຄວາມເອົາໃຈໃສ່ຂອງເພິ່ນຕໍ່ຄົນເຈັບ ແມ່ມານອື່ນໆ ກໍຄືຂ້ອຍ ແລະຂ້ອຍເປັນພິເສດໃນຄວາມຮູ້ສຶກຂອງຂ້ອຍ ຄວາມເອົາໃຈໃສ່ຂອງເພິ່ນເປັນສິ່ງຢືນຢັນຈະແຈ້ງ ວ່າເພິ່ນເປັນໝໍ ທີ່ຮັກວຽກຮັກງານ ເອົາຈິງ ເອົາຈັງແທ້ໆ

ໃນ ມື້ນັດກວດທ້ອງ ພວກເຮົາແມ່ມານທັງຫຼາຍມັກມາແຕ່ເຊົ້າໆ ກ່ອນໂມງເຂົ້າການ. ຫຼາຍຄົນຮອດຫອບລູກຈູງເຕົ້າມາຍອນຄວາມຈຳເປັນ ພາກັນມາຄອງຖ້າຢ່າງອັ້ງອໍ ຖ້າໃຫ້ເພິ່ນກວດ ນັບວ່າເປັນຈຳນວນທີ່ໜ້າຢ້ານຢູ່ ຄືຢ້ານວ່າ ພວກເພິ່ນຈະກວດບໍ່ແລ້ວໝົດ ເພາະແຕ່ລະມື້ ຈຳນວນແມ່ມານຄືຈັ່ງວ່າ ເພິ່ນທະວີຂຶ້ນເລື້ອຍໆ ດຣ.ສີສະຫວາດ ມັກຈະມາ ຮອດກ່ອນໝູ່ແພດໝໍອື່ນໆສະເໝີ ແລ້ວພໍມາຮອດປັບ, ເພິ່ນກໍບໍ່ຖ້າໃຫ້ຮອດເຖິງໂມງຍາມຕາມປະກາດເປັນທາງການໄວ້ ເພິ່ນມັກຈັດການລຳດັບຄົນ ເຂົ້າກວດໂລດ ເຮັດໄວແຕ່ລະອຽດ ຖີ່ຖ້ວນ. ຂ້ອຍສັງເກດເຫັນວ່າ ຕໍ່ແມ່ມານທີ່ມີປະຫວັດການຖືພາ ຫລື ຜູ້ທີ່ມີອາການຜິດທຳມະດາເຊັ່ນຂ້ອຍ ຜູ້ທີ່ເພິ່ນສົງໄສຈະມີລູກຝາແຝດ ຫລື ຍິງແກ່ແດ່ແລ້ວນັ້ນ ເພິ່ນມັກໃຊ້ເວລາ ສໍ່ຖາມ ແລະ ຄິດເຄື່ອງຢູ່ດົນກ່ອນຈະປ່ອຍໃຫ້ອອກໄປ ກັບຂ້ອຍເພິ່ນຈະ ຈູ້ຈີ້ເປັນພິເສດ ໃນດ້ານອາຫານການກິນ ການເຮັດວຽກຫຍິບຈັກ ກໍໃຫ້ຫລຸດຜ່ອນລົງແດ່ ລະມັດລະວັງທຸກບາດກ້າວ ເພື່ອກັນບໍ່ໃຫ້ເກີດເຫດກະທົບ ກະເທືອນ ເພາະຢ້ານມົດລູກບໍ່ຢູ່ໃນສະພາບດີຮອດຮ້ອຍເປີເຊັນ ພໍທີ່ຈະຮັກສາລູກເອົາໄວ້ໄດ້ ຈົນຮອດກຳໜົດອອກ. ດັ່ງນີ້ ຮອດຕອນເລີກການ ມື້ໃດເອື້ອຍ

ໝໍ ສີສະຫວາດ ກໍຈຶ່ງມັກໄດ້ພາເອົາຮ່າງກາຍທີ່ອິດອ່ອນຫລ່ອຍລາອອກມາ ຈາກຫອງກວດ ເວລານອກຈາກນັ້ນ ເພິ່ນຍັງວິນຢູ່ນຳຫອງອອກລູກອີກ ບໍ່ນັບເວັນນັບຄືນ ຫຼາຍຄົນເວົ້າໃຫ້ຂ້ອຍຟັງວ່າ ເພິ່ນເອງກໍມີພະຍາດ ປະຈຳຕົວທີ່ເປັນອຸປະສັກໃຫ້ແກ່ການເຄື່ອນໄຫວໄປມາ ລຳບາກສົມຄວນ ເພິ່ນມີເຫດຜົນພຽງພໍທີ່ຈະຖອນຕົວອອກຈາກການຢູ່ຍາມກາງຄືນ ທີ່ພະແນກ ປະສູດລູກນີ້ກໍໄດ້ຢູ່ ແຕ່ເພິ່ນຜັດບໍ່ຖອນ ອຸດສາປະຕິບັດເວນຍາມ ເຄັ່ງຄັດຄືໝູ່ ທຸກຄືນ. ເຫດນີ້ພວກແມ່ອອກລູກໃໝ່ ໂດຍສະເພາະຜູ້ທີ່ມີໂອກາດ " ວາດສະໜາ " ໄດ້ອອກນຳເພິ່ນຈຶ່ງສະໜິດສະໜົມກັບເພິ່ນດີທຸກທົ່ວໜ້າ ເອົາເວົ້າກັນວ່າ ລະຫວ່າງ ແມ່ຍິງທີ່ອອກລູກ ກັບນາງໝໍຜູ້ເອົາອອກ ( ນາງຜະດຸງຄັນ ) ນັ້ນມີຄວາມສຳພັນພິເສດອັນໜຶ່ງຜູກຮັດໃຫ້ມີນ້ຳໃຈຕໍ່ກັນ ວ່າຊັ້ນອັນນີ້ຂ້ອຍກໍເຫັນດີ ເພາະໄດ້ປະສົບມາກັບຕົນເອງ

ວັນໜຶ່ງ ຂະນະທີ່ຂ້ອຍກັບມາແຕ່ ຕະຫລາດ ນ້ອຍນຳບ້ານ ຕົວກະຕ່າຄວາມກິນ ທີ່ອາວໜັກ ຈົນແຂນລາ ລົດສອງ ແຮງ ມ້ານ້ອຍກໍຈອດກີກລ້ຽງຂ້າງຊ້າຍ ຈົນຂ້ອຍຕື່ນຢຸບ ຂ້ອຍປະຫລາດໃຈທີ່ ຍິນສຽງເອີ້ນວ່າ " ສົມພອນ " ດັງມາຈາກຜູ້ຂັບ. ເມື່ອສອງເບິ່ງຄັກໆ ກໍຈຶ່ງເຫັນວ່າແມ່ນ ດຣ.ສີສະຫວາດນັ້ນເອງ

- ສຳບາຍ ເອື້ອຍ " ຂ້ອຍຟ້າວຍໍມືນົບເພິ່ນ ນັບແຕ່ທຽວໄປກວດນຳເພິ່ນເປັນປະຈຳຕະຫຼອດ ໓-໔ ເດືອນມານີ້ ຂ້ອຍຮູ້ສຶກລ້ຽງແກວ່ນກັບ ເພິ່ນປານຄົນເຮືອນໃກ້ກັນ ທັງນີ້ບໍ່ແມ່ນວ່າ ຂ້ອຍນີ້ຕັ້ງຢາກສະແດງຕົວຕິດພັນ ເພິ່ນ

ດອກ  ເບິ່ງແຕ່ເທື່ອນີ້ ເພິ່ນທາກາຈອດລົດ ລົມຂ້ອຍ ຖາມຂ່າວຂ້ອຍ  ຢ່າງເປັນກັນເອງກ່ອນ  ເພິ່ນເກີນວ່າທຳຕົວເປັນເອື້ອຍເປັນນ້ອງກັບຂ້ອຍ  ຈົນວ່າຂ້ອຍອົດທີ່ຈະສະຫນິດສະຫນົມກັບເພິ່ນບໍ່ໄດ້

- ນ້ອງຫົວຫນັກໂພດຕີ້ສົມພອນ " ປະໂຫຍກເວົ້າຂອງເພິ່ນຕຳນິຂ້ອຍ ແຕ່ຫນ້າຕາເພິ່ນຜັດຍິ້ມລະໄມ  ແນວນີ້ແລວ ອັນຂ້ອຍຍອມເພິ່ນ.  ຟາວປິງກະຕາລົງດິນ ເກາະຂອບປະຕູລົດເພິ່ນ ລົມຕໍ່ ຈົນຫມູ່ໄທບ້ານຜູ້ຫນຶ່ງ ກາຍມາເຫັນກໍຫລຽວເບິ່ງຕາເຫລືອກນານ  ຄົງງຶດວ່າ ນ້ຳຫນ້າສາວ ສົມພອນຊາວຫຍິບຈັກກາງບ້ານ ກໍຄືມີເອື້ອຍຄືນງານຜູ້ຂັບລົດເຕົ່ານ້ອຍ ຈຶ່ງເປັນຜູ້ດີມີຄວາມຮູ້ ມາຢຸດລົມນຳປານນີ້ !

ຂໍ້ຕຳ ນິຕໍ່ໄປຂອງເພິ່ນແມ່ນວ່າ: ຄືວ່ານ້ອງຂາດ ບໍ່ໄປກວດ ຕາມກຳຫນົດໄວ້ແມ່ນບໍ ເດືອນແລວນີ້ ?

ຂ້ອຍຈຳເປັນຕ້ອງຮັບສາລະພາບນຳເພິ່ນອີກທັ້ນລະວ່າລືມ  ຍ້ອນ ຄາວຽກ ໆລໆ (ແກ້ຕົວໄປຕາມເລື້ອງ).

ຂໍ້ສາມຂອງເພິ່ນ: ແລວເບິ່ງຫນ້າຕານ້ອງຄືມາເປັນໄຄ່ງ ເບິ່ງມືດູ ! ເດ້ ບວມໃດນີ້ ! ແລວເພິ່ນກໍລົງລົດມາ ສັງເກດເບິ່ງທົ່ວຮ່າງຂ້ອຍ ຢູ່ກະໂຕທົນທາງທັ້ນເອງ !

ແລງນັ້ນ ເພິ່ນນຳມາສົ່ງຂ້ອຍຮອດເຮືອນ  ທຳຄວາມຮູ້ຈັກກັບຜົວຂ້ອຍແລະ ພໍ່ແມ່ທີ່ຢູ່ນຳກັນຄອບຄົວໃຫຍ່  ທຸກຄົນດີໃຈ ທີ່ໄດ້ເຫັນ ດຣ.ສີສະຫວາດ ຜູ້ທີ່ຂ້ອຍເວົ້າຮອດມາຫຼາຍເດືອນ  ກ່ອນຈາກໄປ ເພິ່ນສະຫລຸບວ່າ: " ນ້ອງຕ້ອງໄປກວດຍ່ຽວ ກວດສຸຂະພາບຄືນໃຫມ່ຫມົດ  ໄປມື້ອື່ນເຊົ້ານີ້ໂລດເນີ້ "

ຂ້ອຍຖຽງເພິ່ນວ່າ ມື້ອື່ນບໍ່ແມ່ນມື້ກວດແມ່ມານ ແຕ່ເພິ່ນບອກວ່າ: "ບໍ່ແມ່ນກະຕາມ ໄປຫາ ເອື້ອຍ ຢູ່ພະແນກອອກລູກທັນໂລດ ຈະຕ້ອງເບິ່ງເປັນພິເສດ ແລະ ດ່ວນນອນໃຈບໍ່ໄດ້ ອາການນ້ອງ ຜິດປົກກະຕິ ໜ້ອຍໜຶ່ງແລ້ວ ບໍ່ຄວນປະໄວ້ ກັນດີກວ່າແກ້ " ເພິ່ນວ່າ ແລ້ວກໍຈາກໄປ

× ×

×

ຈັ່ງຊັ້ນແລ້ວ ! ຄວາມເພີລີນຂອງຂ້ອຍຄິດວ່າໜ້ອຍດຽວ ບໍ່ໄປ ກວດ ຕາມກຳໜົດນັດໝາຍ ກໍເລີຍກາຍເປັນວ່າ ຂ້ອຍເປັນພະຍາດບວມ ໝາກໄຂ່ຫລັງບໍ່ຮູ້ຕົວຮູກປົກກະຕິ ຕ້ອງເຂົ້າຮັບການປິ່ນປົວເປັນຄົນເຈັບ " ທີ່ໜ້າເປັນຫ່ວງ " ຕາມຄວາມທ່ານໝໍສີສະຫວາດວ່າ ໃນເດືອນທີ່ລູກ ໃນທ້ອງຂ້ອຍໄດ້ຫົກເດືອນເຄິ່ງທໍ່ນັ້ນ ການປິ່ນປົວຕິດຕາມຂອງແພດ ແມ່ນເອົາໃຈໃສ່ແຂ້ງຂັນທີ່ສຸດ ແຕ່ຂ້ອຍຜັດເປັນຄົນ ຄະລຳຄວາມກິນຢາກອີກ ( ຈຸດອ່ອນອັນຮ້າຍແຮງຂອງຂ້ອຍຕື້ນ... ) ອາການບວມຫລຸດລົງຊ້າເຕັມທີ ດຣ. ສີສະຫວາດ ຜູ້ທີ່ໄດ້ຕິດຕາມອາການເຈັບຂອງຂ້ອຍຕະຫລອດມາ ບໍ່ພໍໃຈເລີຍ ເພິ່ນຫຽວເຂົ້າຫຽວອອກ ຫຽວມາຈ່ອບຊ່ອນວ່າ ຂ້ອຍຈະປະຕິບັດຕາມ ຄຳສັ່ງ " ກິນບໍ່ໃສ່ເກືອ " ຂອງເພິ່ນນັ້ນໄດ້ຢ່າງເຄັ່ງຄັດບໍ່

ແລ້ວ ທັງທີ່ ແຂນ ຂາ ຕີນ ມື ຍັງບໍ່ຍຸບລົງ ອາການເຈັບທ້ອງກໍເກີດຂຶ້ນ ໃນແລງວັນຖວນສາມ ທີ່ມານອນໂຮງໝໍ ແມ່ວທີ່ໃຜໆກໍບົ່ງວ່າ ມັນແມ່ນເຈັບທ້ອງຈະອອກລູກ ໝາຍວ່າ ລູກຂ້ອຍຈະອອກກ່ອນກຳໜົດ ! ຂ້ອຍເອງ ເວລານັ້ນ ທັງບໍ່ຮູ້ທິບ ທັງຕົກໃຈກະວົ່ງກະວວ ຢ້ານກົວຈົນເກືອບທົວໃຈວາຍ ທ່ານໝໍສີສະຫວາດເອງກໍຫ່ວງໃຍຂ້ອຍຈົນບໍ່ເປັນອັນຢູ່ ບໍ່ຍອມເລີກຮອດການ ຮອດພຽນອອກຍາມ ເພິ່ນກໍບໍ່ອອກ ຂໍຢູ່ຕໍ່ ເພື່ອກຳກັບນຳ

ຂ້ອຍ ຮ່ວມກັບແພດໝໍອື່ນໆທີ່ກຽມປະຕິບັດການຢູ່ພ້ອມແລ້ວ ໃນຄວາມຮູ້ສຶກຂອງຂ້ອຍ ຄືຈັ່ງວ່າ ຂ້ອຍເປັນຄົນຈັບພິເສດ ເປັນຜູ້ທີ່ຄວນແກ່ການ ເອົາໃຈໃສ່ສະເພາະກວ່າໝູ່ ໃນຈຳນວນແມ່ມານທີ່ນອນຫ້ອງດຽວກັນ ນັບແຕ່ມື້ຂ້ອຍເຂົ້ານອນໂຮງໝໍຈົນຮອດມື້ອອກ ຂ້ອຍເຫັນ ດຣ.ສີສະຫວາດເກືອບທຸກເວລາ ຕອນເຊົ້າ ນອກຈາກມາຢ້ຽມຕາມໜ້າທີ່ແລ້ວ ພາຍຫລັງທີ່ເພິ່ນປະຕິບັດໜ້າທີ່ຢ້ຽມຄົນເຈັບປະຈຳວັນຂອງເພິ່ນ ຫລື ຫວ່າງຈາກການກວດ ທ້ອງແມ່ມານແລ້ວ ເພິ່ນມັກແວ່ມາຫາຂ້ອຍ ຕອນເລີກເມືອ ໑໔ ໂມງ ເພິ່ນກໍແວ່ມາອີກ ແລວບາດຕອນ ມາການສອງໂມງ ເພິ່ນກໍຍັງແວ່ມາຈອບ ອີກກ່ອນ ນັບເບິ່ງເວລາຂອງເພິ່ນໄປມາ ແລະ ກິນເຂົ້າແລ້ວ ເພິ່ນຄືງເກືອບບໍ່ໄດ້ນອນຫລັງພັກຜ່ອນ ເອົາສາເລີຍ !

ບັນດາຄະນະແພດ ທີ່ຮັບຜິດຊອບຫ້ອງຂ້ອຍນອນກໍໄດ້ເອົາໃຈໃສ່ ຂ້ອຍເປັນກໍລະນີພິເສດຄືກັນ ດຣ.ສີສະຫວາດ ໄດ້ເຊີນເອົາຄະນະອຳນວຍການ ແລະ ຜູ້ຊ່ຽວຊານມາໃຫ້ຄຳປຶກສາ ແລະ ຊີ້ນຳຕື່ມ ມະຕິຂອງຄະນະບົ່ງວ່າຕ້ອງພະຍາຍາມ ລ້ອມລູກ ຊ່ອຍເອົາລູກໄວ້ບໍ່ໃຫ້ອອກກ່ອນກຳໜົດ ເພາະອີງຕາມການກວດ ລະຍະນີ້ປະກົດການນາມີ້ເດັກຍັງບໍ່ທັນແຂງແຮງພໍ ດຣ. ສີສະຫວາດນັ້ນ ຍາມໃດກໍ່ອວນໜ້າແພດໝໍ ໃນການປະຕິບັດການຕໍ່ສະພາບອັນຜິດປົກກະຕິຂອງຂ້ອຍ ຈົນຫຼາຍເທື່ອ ເຮັດໃຫ້ຂ້ອຍນ້ຳຕາຊຶມເບົ້າ ປີຕິຍິນດີທີ່ເພິ່ນຫ່ວງໃຍນຳຂ້ອຍນຳລູກໃນທ້ອງຂອງຂ້ອຍໂດຍສະເພາະ !

ເຫັນແຈ້ງໃນຄວາມເອົາໃຈໃສ່ຫ່ວງໃຍຂອງບັນດາແພດໝໍແນວນີ້,ປະກອບກັບຄວາມເວົ້າຂອງພວກເພິ່ນທຸກຄົນ ກໍລ້ວນລະດົມໃຈໄດ້ດີ ຂ້ອຍ ຈຶ່ງເລີ່ມມີສະພາບຈິດເຂັ້ມແຂງ ແລະ ເຊື່ອໝັ້ນຫຼາຍຂຶ້ນ ຈົນໃນທີ່ສຸດ ກາຫານເຖິງກັບ ປະກາດຕົວກຽມພ້ອມບໍ່ວ່າ ຕໍ່ໜ້າສະພາບການໃດໆ ທັງໝົດ: ລູກຈະອອກກ່ອນກຳໜົດ ຫລື ວ່າ ຈຳເປັນຈະຕ້ອງທຳການປາດອອກ ກໍຕາມ!

ຄວາມເຈັບປວດຂອງຂ້ອຍຄືວ່າ ຊີຣອນ ແຮງກວ່າໝູໝີດ ຢູ່ໃນຫ້ອງພະແນກ ອອກລູກຂອງໂຮງໝໍແຫ່ງນີ້ ຊຶ່ງມີເດັກເກີດ ໃນສະຖິຕິ ບໍ່ຕ່ຳກວ່າວັນລະສິບຄົນ. ຂ້ອຍຈື່ວ່າຕົວເອງເປັ່ງສຽງຈົນໂຮງໝໍ ຊິແຕກ ບໍ່ຈັກວ່າ ພໍ່-ແມ່ ຜົວ ແລະ ແພດອີກຕັ້ງທໍ່ໃດຄົນກໍບໍ່ອາດເວົ້າຂ້ອຍ ຫລື ຊ່ອຍລະງັບຄວາມເຈັບປວດອັນເຖິງຂີດສຸດ ໃນຊີວິດຂອງຂ້ອຍ ໄດ້ ຂ້ອຍເຈັບຢູ່ ມື້ໜຶ່ງກັບຄືນໜຶ່ງ ແລ້ວລູກກໍອອກ ໂດຍທີ່ພວກແພດກໍຄາດຄະເນບໍ່ຖືກເລີຍ ເປັນຜູ້ຊາຍໜ້າຕາຄົມ ເຄົ້າດຽວກັບຜູ້ເປັນພໍ່ ຄືແຕ່ວ່າ ນ້ຳໜັກລູກມີແຕ່ ໑,໗໕໐ ກິໂລກຼາມ ເນື້ອໜັງຍັງບໍ່ທັນເຕັມຕຶງຈັກດີ

ເມື່ອຊຳລະບາດແຜໃນການຄອດແລ້ວ ແລະ ຂ້ອຍໄດ້ກັບຄືນມານອນຢູ່ຕຽງໃນຫ້ອງພັກ ເອື້ອຍໝໍສີສະຫວາດ ກໍຟ້າວນຳມາອື່ນອອຍໃຫ້ກຳລັງໃຈ. ສີໜ້າຂອງເພິ່ນຍັງຫລ່າເຫລືອງດ້ວຍຄວາມອິດກັງວົນ ແຕ່ແລ້ວ ເພິ່ນແຂງໃຈຍິ້ມນຳຂ້ອຍ ທຳທ່າເປັນຜູ້ " ຊູກຍູ້ " ຕາມເຄີຍ

\- ບໍ່ເປັນຫຍັງດອກ ສົມພອນ ລູກນ້ອງສຸຂະພາບດີສົມຄວນ ພວກເຮົາລ້ຽງໃນເຕົາອົບໄວ້ຈັກລະຍະໜຶ່ງ ກໍປອດໄພລະ ນ້ອງຈົ່ງນອນພັກຜ່ອນ ເຮັດໃຈໃຫ້ສະບາຍ ຕໍ່ໄປນີ້ເປັນພາລະໜ້າທີ່ຂອງພວກແພດ ເຮົາເອງ "

ເບິ່ງເອົາເທາະ ລູກຂ້ອຍຜູ້ນີ້ຕັ້ງໂຊກດີມະຫາສານ ຈະເກີດຂຶ້ນມາໃນຫ້ອງໄດ້ຄືໝູ່ ກໍຍ້ອນຄວາມຊ່ອຍເຫລືອຂອງໝໍ " ຄັນອອກມາແລ້ວ ກໍຍັງແມ່ນໄດ້ເປັນ " ກໍລະນີພິເສດ, ເຂົ້າເຕົາອົບ " ອີກຢູ່

ມື້ໃຫມ່ມາ ເມື່ອຂ້ອຍສະບາຍໃຈຂຶ້ນແດ່ພ້ອມທີ່ຈະຮັບຟັງຂ່າວຄາວກ່ຽວ

ກັບສຸຂະພາບ " ທີ່ບໍ່ດີ " ປານໃດ ຂອງລູກ ແລະ ພາຍຫລັງເພິ່ນໄດ້ລຸລ່ວງ
ຄອບຄົວຂອຍຫຼາຍບັນຫາ ດຣ.ສີສະຫວາດ ໂດຍປະສານງານກັບ ທ່ານໝໍ
ຊ່ຽວຊານທາງເດັກອີກທ່ານໜຶ່ງກໍໄດ້ໃຫ້ຄຳແນະນຳແກ່ຂອຍຫຼາຍວິທີການ -
ເນື່ອງຈາກລູກຊາຍຂ້ອຍ ນ້ຳໜັກຫລຸດມາຕະຖານຕ່ຳສຸດຂອງທາລົກ ທີ່ຄວນ
ມີຊີວິດໄດ້ ເພິ່ນໄດ້ອະທິບາຍສູ່ຟັງວ່າ ຄືຕາມປົກກະຕິເດັກເກີດໃໝ່ (ຄົນ
ອາຊີ) ຕ່ຳສຸດຄວນມີນ້ຳໜັກ ໔ ກິໂລກຼາມ ຈຶ່ງຈະລ້ຽງໄດ້ ສະເພາະລູກ
ຊາຍຂ້ອຍນີ້ ເຖິງວ່ານ້ຳໜັກໜ້ອຍປານນັ້ນແຕ່ຮ່າງຄີງແຂນຂາຍາວລຸ້ນໜູ ຜູ້
ທີ່ນ້ຳໜັກໄດ້ມາຕະຖານອີກຊ້ຳ ອັນສະແດງວ່າ ມັນກໍຈະເປັນຄົນໃຫຍ່ສູງ ຄືພໍ່
ເພິ່ນນັ້ນລະ !

ຂ້ອຍຮູ້ພາຍລຸນວ່າ ຄະນະແພດລົງຄວາມເຫັນວ່າ ເດັກບໍ່ສົມບູນພໍທີ່ຈະ
ລ້ຽງໄດ້ ແຕ່ຢ່າງໃດກໍດີ ເດັກມັນກໍເກີດມາແລ້ວ ແລະ ມັນກໍຢາກມີຊີວິດ ສຸດ
ຄວາມສາມາດຂອງມັນ ມັນໄຫ້ສຽງດັງພໍສົມຄວນ ບາດຫັນໃຈກໍປົກກະຕິ.
ອີງໃສ່ຂ້ອຍຜູ້ເປັນແມ່ກໍອ່າວມີລູກຍາກແນວນີ້ ຄະນະແພດຕັດສິນໃຈປະຕິບັດທຸກ
ມາຕະການເພື່ອຈະຮັກສາຊີວິດເດັກໄວ້ໃຫ້ໄດ້

ແລ້ວກໍຮອດຂັ້ນ ຈະລ້ຽງທາຣົກດ້ວຍນ້ຳນົມ ຕາມທຳມະດາ ໑໔
ຊົ່ວໂມງ ຫລັງຈາກເດັກເກີດ ຕ້ອງໃຫ້ກິນນົມ ແລະ ກໍແມ່ນນົມແມ່ຈຶ່ງຈະດີ
ທີ່ສຸດ ແຕ່ຍອນແອນ້ອຍຍັງບໍ່ສົມບູນ ຄວາມສາມາດໃນການດູດນົມຂອງ ມັນ
ຈຶ່ງຮອດບໍ່ມີພໍ ໔໐ % ແລະ ຢ່າວ່າແຕ່ນົມແມ່ເລີຍ ຮອດນົມກອງ ມັນກໍຍັງ
ດູດບໍ່ທັນໄດ້ ! ບັນຫາເປັນ ຕາຍອີກຂອດໃໝ່ !

ແພດໝໍ ໄດ້ຈຸ້ມຫົວໃສ່ກັນ ຢ່າງເອົາການເອົາງານ ເພື່ອຈະປ້ອນນົມ
ແກ່ທາຣົກຜູ້ອ່ອນແອ ໂດຍໃຫ້ນາງແພດມາບີບເອົານ້ຳນົມຂ້ອຍ ອອກໃສ່ ກ້ອງ
ສະອາດ ເພື່ອເອົາໄປໃສ່ໃນເຂັມສີດຢາ ຄ່ອຍໆສີດຢອດລົງໃຫ້ເດັກໃນ ເຕົາ
ອົບນັ້ນກິນ

ໄຮ້ຜົນອີກ ! ເດັກບໍ່ສາມາດກິນຢົດນ້ຳນົມ !

ແນ່ນອນແລ້ວ ຂ່າວນີ້ແມ່ນບໍ່ໄດ້ໃຫ້ຮອດຫູຂ້ອຍພໍດີ ໃນຕອນນັ້ນ ດຣ. ສີສະຫວາດ ດາວ່າໃຊ້ຈິດຕະສາດສູງ

ຈາກນັ້ນ ນະຕິແພດບິ່ງອອກມາໃຫນ່ວ່າແຍ່ສາຍຢາງໃສ່ດັງ ເພື່ອ ສົ່ງ ນົມລົງໂດຍກົງເພາະເດັກບໍ່ມີແຮງດູດເທື່ອ

ຊ້ຳຜັດຮອນຮອດສາຍຢາງທີ່ມີໃນໂຮງຫມໍ ມີແຕ່ຂະຫນາດທຳມະດາ ມັນໃຫຍ່ກວ່າຂະຫນາດທີ່ຕ້ອງການ ສຳລັບກໍລະນີນີ້

ໂອ້ຍ ! ລູກຂ້ອຍເກີນວ່າຜູ້ນ້ອຍ ! ນ້ອຍຈົນວ່າວິທີການອັນໃດ ອຸປະກອນ ທັນສະໄຫມອັນໃດ ກໍຍັງຈະບໍ່ຮັບໃຊ້ໃນການລ້ຽງດູລູກໄດ້ !

ແຕ່ຄວາມພະຍາຍາມຂອງທ່ານຫມໍຜູ້ຮັບຜິດຊອບຫ້ອງເດັກເກີດ ໃຫມ່ ແລະ ດຣ.ສີສະຫວາດ ບໍ່ແມ່ນຈະຢຸດຢັ້ງຢູ່ທັ້ນ ! ພວກເພິ່ນໄດ້ໄປຄົ້ນຄວ້າຫາ ຢູ່ທຸກພະແນກ ໂດຍສະເພາະ ຫ້ອງສາງຢາ ແລະ ອຸປະກອນ ໄດ້ກວດ ຄົ້ນ ຫາສາຍຢາງສົ່ງອາຫານ ຂະຫນາດນ້ອຍທີ່ອາດຕົກຫລົ່ນຢູ່ບ່ອນຈອກແຈໃດ ຫນຶ່ງ ດົນນານມາແລວ

ຊຶ່ງກໍຫາກເປັນຜົນສຳເລັດແທ້ ! ບັງເອີນສາຍຢາງເສັ້ນນ້ອຍໆນັ້ນ ກໍ ລີ້ຊ່ອນຢູ່ແຈ ຫນຶ່ງ ເພາະບໍ່ເຄີຍມີໃຜຕ້ອງການມັນແລ້ວມັນກໍໄດ້ມາຮັບໃຊ້ ສົ່ງ ນົມລົງໃນກະເພາະເດັກຊາຍນ້ອຍໆ ຜູ້ໂຊກດີຄົນນັ້ນ !

ແອນ້ອຍຂ້ອຍຈຶ່ງໄດ້ກິນນົມ ໂດຍທີ່ລູກຮອດບໍ່ທັນຮູ້ດູດກິນ !

ແລະ ກໍຍັງອີກ...

ຍັງບັນຫານ້ຳນົມທີ່ຈະເອົາລ້ຽງ ເພິ່ນຜູ້ກ່ຽວ ກໍຕ້ອງແມ່ນນ້ຳນົມ ຂອງ ຂ້ອຍເອງເປັນຕົ້ນຕໍ ຮອດໂມງສົ່ງນົມຄື ໖ ໂມງ ໙ ໂມງ ໑໔ ໂມງ ໘ ໂມງ ແລະ ໖ ໂມງ ແລ້ວ ດຣ.ສີສະຫວາດ ຫລື ແພດຍາມຫ້ອງເດັກ ເກີດ ໃຫມ່ ກໍມາຮ້ອງເອົາຂ້ອຍ ແລະ ນຳພາໄປທີ່ຫ້ອງເດັກຢູ່ຕູ້ອົບ ນາງແພດ ໄດ້ບີບເອົານ້ຳນົມຂ້ອຍໃສ່ເຕົ້ານົມອົບຂ້າເຊື້ອໄວ້ຮຽບຮ້ອຍແລ້ວ ຕາມຈິດ ໃຈຂອງແພດເພິ່ນກໍຢາກໄດ້ນົມແມ່ລ້ຽງຢ່າງດຽວ ແຕ່ນ້ຳນົມຂ້ອຍຊ້ຳບໍ່ມາຫລາຍ

ຈໍາເປັນຕ້ອງໄດ້ເອົານົມຝຸ່ນຊະນິດພິເສດ ທີ່ໂຮງຫມໍມີຢູ່ນັ້ນປະສົມກັນ ເພື່ອໃຫ້ໄດ້ປະລິມານພຽງພໍ ຕາມທີ່ແອນ້ອຍຕ້ອງການ ບັນດານາງແພດໃນຫ້ອງຮັກສາເດັກໃນເຕົ້າອົບ ຕ້ອງກໍາກັບນໍາການສົ່ງນົມ ອັດຕານົມທີ່ໃຫ້ຢ່າງເຂັ້ມງວດ ແລະ ທ່ຽງກົງ ລະມັດລະວັງເປັນພິເສດສະເຫມີ

ແລ້ວທຸກຄວາມເປັນໄປທີ່ " ກ້າວຫນ້າດີຂຶ້ນ " ຂອງເດັກ ກໍ່ຖືກຖ່າຍທອດມາສູ່ຂອຍ ແລະ ຄອບຄົວໂດຍຕົວຂອງ ດຣ. ສີສະຫວາດເອງ ວັນລະຫຼາຍໆເທື່ອ ເພິ່ນລະວັງເປັນພິເສດອີກ ບໍ່ໃຫ້ຂອຍຮັບຟັງຄວາມເວົ້າເລົ່າລື ແລະ ຍຸແຍ່ຈາກເພື່ອນຄົນເຈັບນໍາກັນບໍ ຫລື ບຸກຄົນອື່ນໆ ທີ່ອາດສ້າງຄວາມບໍ່ສະຫງົບໃຈແກ່ຂອຍ ໃນລະຍະອັນວິກິດນີ້

ຢ່າງເຂົ້າອາທິດທີສອງ ຕາມທໍາມະດາ ພາຍຫລັງທີ່ເກີດມາແລ້ວນໍ້າຫນັກເດັກຫລຸດລົງ ແລະ ຈະກັບຂຶ້ນຄືນລື່ນເກົ່າ ນັບແຕ່ວັນທີແປດ ເປັນຕົ້ນໄປ ແຕ່ກໍ່ລະນີແອນ້ອຍຂອຍ ຜັດຍັງເຫລືອແຕ່ ໑,໓໔໐ ກິໂລກຼາມ ອັນເປັນ ສະພາບທີ່ຫນ້າວິຕົກກັງວົນອີກຍົກໃຫມ່ ຜາກົດຈະແຈ້ງໃນຕອນນີ້ເອງ ວ່າການໃຫ້ນົມທາງສາຍຢາງນ້ອຍ ທີ່ບໍ່ຖືກຂະຫນາດສັກກັບທໍ່ອາຫານຂອງເດັກຕົວນ້ອຍນ້ອຍນັ້ນ ເປັນພາກປະຕິບັດທີ່ບັນລຸຜົນຕາມຄາດຫມາຍໄດ້ຍາກເຕັມທີ ສາຍຢາງມີເທື່ອກໍ່ຫລຸດຈາກທີ່ ຕ້ອງ " ແຍ່ " ໃຫມ່ ຊຶ່ງການແຍ່ນີ້ ກໍ່ ຕ້ອງແມ່ນທ່ານຫມໍຜູ້ຮັບຜິດຊອບແຍ່ເອງ ແລ້ວມັນກໍ່ເປັນໄປບໍ່ໄດ້ອີກ ທີ່ວ່າ ຫມໍຜູ້ນັ້ນຈະນັ່ງເຝົ້າເດັກ ກໍລະນີພິເສດຜູ້ນີ້ຢູ່ ຕະຫຼອດຊາວສີ່ຊົ່ວໂມງ ແລະ ທຸກໆວັນເວລາເກີດອູ່ປະຕິເຫດຢ່າງ " ຫລຸດ " ມີເທື່ອເພິ່ນກໍ່ບໍ່ຢູ່ຫັ້ນ ນອກຈາກນີ້ ຮອດໂມງໃຫ້ນົມ ບາງຄັ້ງເດັກກໍ່ເກີດມີອາການຜິດປົກກະຕິ ສະເອີ ຮັບນົມບໍ່ໄດ້ເລີຍ ໆລໆ ສະຫລຸບແລ້ວ ເຖິງຈະພຽນຖະຫນູຖະຫນອມເປັນ ພິເສດ ດັ່ງເວົ້າມາແລ້ວນັ້ນ ເດັກກໍ່ຍັງບໍ່ສາມາດ ກິນນົມໄດ ຫລື ບໍ່ໄດ້ກິນ ນົມເຕັມອັດຕາ ຕາມທີ່ທ່ານຫມໍສັ່ງແຕ່ລະນື້

ມື້ທີ່ແອນ້ອຍ ມີອາຍຸໄດ້ຄົບສິບວັນ ມັນເກີດມີອາການຜິດແປກໄປເຮັດໃຫ້ລະບົບຫັນໃຈ ແລະ ອະໄວຍະວະທຸກພາກສ່ວນ ບໍ່ເດີນຕາມປົກກະຕິ ເຊັ່ນ ມີອາການແຫລ ຢຸດຫັນໃຈເປັນບາງເທື່ອ ບາງຄັ້ງມັນເອັ້ຽະອອກ ແລວ ພາຍໃນສີ່ຊົ່ວໂມງກໍເຂົ້າຂັ້ນໂຄມາ

ເວລານັ້ນ ຂ້ອຍພວມນັ່ງໃຫ້ແພດຊ່ອຍບີບນ້ຳນົມຈະປ້ອນຢູ່ພໍດີ ແລະບັນດາແພດຫມໍທົ່ວໄປ ກໍພວມຈະເລີກການຕອນທ່ຽງ ພວກນາງແພດເອີ້ນ ໃສ່ກັນ ແລະ ແລ່ນເປັນສິ້ນໆຂຶ້ນ ເພື່ອຊອກຫາທ່ານຫມໍຮັບຜິດຊອບຫ້ອງເດັກເກີດໃຫມ່ ມາຊ່ວຍນຳການແກ້ໄຂ ຂ້ອຍສະຫງົບໃຈໄດ້ຢ່າງຍາກລຳບາກ ເພື່ອອົດທົນເບິ່ງພາບອັນບາດຕານັ້ນຕໍ່ໄປ ພາບແຫ່ງຄວາມເຄັ່ງຕຶງສຸດຂີດ ! ຂ້ອຍເຫັນພວກເພິ່ນຈັດຕັ້ງເຄື່ອງຊະນິດຫນຶ່ງ ມາງວມໃສ່ດັງລູກນ້ອຍໆ ແຫລ່ງ ທີ່ເພິ່ນໂຈມອອກມາຮັບການປິ່ນປົວສຸກເສີນຢູ່ນອກຕູ້ກົບ ພວກເພິ່ນຫຸ້ມອ້ອມໂຕະນັ້ນຢູ່ເຫີງເຕີບ ແລ້ວພໍ ດຣ.ສີສະຫວາດ ຂວາຍຫນ້າອອກຈາກຫມູ່ ແຍງມາທາງຂ້ອຍ ຂ້ອຍກໍອ່ອນໄປຫມົດຄິງ ເຂົ້າໃຈສີຫນ້າ ແລະ ແສງຕາຂອງເພິ່ນດີ ຂອງວ່າແອນ້ອຍສຸຂະພາບບໍ່ສົມບູນ ບໍ່ແຂງແຮງພໍຈະເປັນຄົນມາແຕ່ເກີດພຸ້ນ ພະຍາດພຽງແຕ່ກໍ່ຕົວ ມັນກໍຕານທານບໍ່ໄດ້ເສັຽແລ້ວ !

ອ້ອຍ ໄຫ້ແຕ່ພໍ່ຊຶມໆ ຕັ້ງສະຕິໄດ້ວ່າລູກຕາຍນີ້ ແມ່ນເຫດສຸດວິໄສ ເພື່ອນນອນຫ້ອງດຽວກັນ ເອົາຍັງອອກປາກວ່າ:

- ບຸນຫະແມ້ ມັນຍັງຫັນໃຈໄດ້ມາຮອດ ໑໐ ມື້ ! ເກີດມາບໍ່ ເຄີຍເຫັນ ຄົນຫຼອດຊິຍືນຢູ່ໄດ້ ກະດັດກະດໍ້ ! ຈັ່ງແມ່ນພວກເພິ່ນເກັ່ງນໍ ທ່ານຫມໍສະໄຫມນີ້ ! ຄົນເປັນຕາຕາຍແຕ່ເກີດ ເພິ່ນກໍຍັງແກ້ເອົາໄວ້ໄດ້ປານນີ້ !

ແມ່ນແທ້ ແມ່ນຄວາມເພື່ອນຜູ້ນັ້ນແທ້ ນັ້ນລະ ! ຂ້ອຍເອງ ເປັນຜູ້ໄດ້ເຫັນມາແລ້ວ ກັບຕາ ໄດ້ຕິດຕາມວຽກງານຂອງແພດໜຸ່ມ ໃນພະແນກ ນີ້ຮອດສິບວັນ ສິບວັນທີ່ແພດໝໍຜູ້ຮັບຜິດຊອບ ບໍ່ເຄີຍມີຍາມໄດ້ພັກຜ່ອນ ສະບາຍໃຈ ສິບວັນທີ່ທຸກຄົນໄດ້ສູນທຸກຄວາມສາມາດ ໃຊ້ຢາ ແລະ ເຄື່ອງມືທີ່ທັນສະໄໝທີ່ສຸດທີ່ພໍມີ ແລະ ສິບວັນ ທີ່ແອນ້ອຍເອ່ງກໍໄດ້ຕໍ່ສູ້ດີ້ນຮົນ ຢາກມີຊີວິດນຳໝູ່ສຸດກຳລັງແຮງຂອງມັນ !

ເອື້ອຍໝໍຜູ້ປະເສີດ ຈັບມືຂ້ອຍບີບແຮງນ້ຳຕາຂອງເພິ່ນໄຫລອອກນຳຮ່ອງແກ້ມ ທັງສອງ ເພິ່ນເສຍດາຍຊ່ອຍຂ້ອຍເຖິງພຽງນີ້ພຸ້ນນະ ? ເຫັນແນວນີ້ ຂ້ອຍເຮັດໃດຈະອົດສະອື້ນໄວ້ໄດ້ ? ແຕ່ເອື້ອຍເຫາະ ! ຂ້ອຍໄຫ້ ສະອື້ນ ບໍ່ແມ່ນຍ້ອນເສຍໃຈ ເສຍດາຍລູກ ຂ້ອຍສະອື້ນພາກພູມໃຈທີ່ມີໂອກາດໄດ້ເປັນແມ່ແລ້ວ ແລະ ສະອື້ນຕື້ນຕັນໃຈ ສຳນຶກຮູ້ບຸນງານຄວາມດີຂອງ ແພດໝໍ ໂດຍສະເພາະ ທ່ານໝໍຍິງໃຈດີຄົນນີ້ ດຣ. ສີສະຫວາດ !

24/VII
ຫ້າມຈຳໜ່າຍ

ໄວໜຸ່ມທີ່ຕ້ອງໃຊ້ທັງພະລັງກາຍ ແລະ ໃຈ ເພື່ອສ້າງພື້ນຖານໃກ້ແກ່ຊີວິດ ສັງຄົມນັ້ນຈຳຕ້ອງມີສິ່ງດຶງຈ່ອງໝັ້ນໜຽວສົມຄວນ ສຳລັບ ທອນແລ້ວ ເຖິງວ່າວຽກງານຈະກິນເວລາໃນມື້ໜຶ່ງໆໄປແລ້ວກໍຕາມ ເຂົາກໍ່ຍັງຮູ້ສຶກວ່າ ມີບ່ອນຫວ່າງໃນຫົວໃຈ...ສຳລັບບນ້ຽນຄວາມຮູ້ສຶກຕໍ່ນາງໄວ້.



# ທີ່ຝາກໃຈ

ຕາເວັນລົງບໍ່ທັນລັບປາຍໄມ້ ຄວາມ ມືດ ເລີ່ມແຜ່ຄຸມໄປທົ່ວປ່າດົງ ທີ່ກວ້າງເປົ່າ ປ່ຽວ ຕໍ່ໜ້າເຕົາຖ່ານທີ່ທັນສະໄໝຮູບ ຊົງຄືທາດຈອມມີ້ນສູງ ອຶມຄຶມ ຈຸລຳລຽງຖ່ານອອກເຕົາຍັງຄົງສືບຕໍ່ ເຮັດວຽກ ຢ່າງມັງມໍ້ຟ້າວຟັ່ງ ຜ່ອງເອີ້ນໃສ່ກັນເອີກອາກ ແຂງແສງຈັນເກືອບເພັງ ທີ່ ເຄື່ອນຂຶ້ນໃສ່ແຈງແຕ່ຫົວຄ່ຳ ຈຶ່ງວ່າເບິ່ງໜ້າກັນເຫັນເປັນມົວມາຍ ແມ່ນວ່າ ແຕ່ລະຄົນຈະດຳມຸມໄປທົ່ວຕົວ

ຫົວໜ້າໜ່ວຍຜະລິດນັ້ນລະຕ່ອນຜູ້ເພິ່ນມຸມນອນດຳປີ້ ພືວຄ້ຳ ຂອງ ຄົນເຂດຮ້ອນພໍຖືກຖ່ານເຂົ້າແດ່ເບິ່ງເພິ່ນ " ຍັງແຕ່ຕາກັບແຂ້ວ " ຄືພວກ ອ້າຍນ້ອງວ່າ ສັງເກດເຫັນວ່າ ການຂົນຖ່ານອອກເຕົາແລວນີ້ສະທ້ອນ ບັນ ຫາໃໝ່ອອກມາ ບຸນທອນຖອນໃຈໃຫຍ່

- ບໍ່ກາຍ ໔໐໐ ກິໂລດອກ !

ທີ່ຟາກໃຈ

ສຽງອ້າຍປ້ອງຮ້ອງພະນັນກັນແຕ່ຫວ່າງບໍ່ທັນມິດ ຍັງກ້ອງຢູ່ໃນຫູ ບຸນທອນຮູ້ດີວ່າອ້າຍນ້ອງຄາດຄະເນມັກບໍ່ຜິດພາດຫລາຍ ເຜົາຖ່ານນຳກັນມານີ້ຈົນຈະຫມົດລະດູຜະລິດຢູ່ແລ້ວ ນັບວ່າຫລາຍຄົນກໍ່ເກີດຄວາມຊຳນານຫລາຍດ້ານຕ່າງໆກັນ ບໍ່ວ່າຈະແມ່ນການຕັດ ລຳລຽງຟືນ ເອົາຟືນເຂົ້າເຕົາ ການສັງເກດສີຂອງຄວັນທີ່ອອກຈາກປ່ອງທໍ່ ຫລືແມ່ນແຕ່ວ່າ ບໍລິມາດຖ່ານ ເຜົາແລ້ວ ທີ່ເປັນຜົນຜະລິດຕົວຈິງຈາກແຕ່ລະເຕົາ

ຕາມທຳມະດາແລ້ວ ຈາກໄມ້ຟືນປະເພດດີ ແລະ ກາງ ຄືໄມ້ບົກແລະໄມ້ຕີ້ວ ແລະ ໂດຍສະເພາະຍັງແມ່ນໄມ້ຊະນິດທອນເສດຈາກໄມ້ຕັດປ້ຳ ເພື່ອການກໍ່ສ້າງຢູ່ກະໂຕຂອບເຂດເມືອງໃຫມ່ເອງນີ້ ຜົນຜະລິດຄວນຈະເພີ່ມ ຂຶ້ນຈາກ ໔໐໐ ກິໂລ (ຄືແຕ່ຕອນຜະລິດທຳອິດ-ຊຶ່ງເວລານັ້ນກໍ່ຍັງບໍ່ມີບົດ ຮຽນຫລາຍ) ມາເປັນຮອດ ໗໐໐-໘໐໐ ນັ້ນຈຶ່ງແມ່ນ ແຕ່ເປັນຫຍັງຈຶ່ງມາຫລຸດລົງສ່ຳຕອນເລີ່ມຕົ້ນເອົາໂລດ ?

ຄວາມແມ່ນແທ້ ຫົວຫນ້າຫນ່ວຍຜະລິດຖ່ານ ບຸນທອນ ບໍ່ໄຊ່ວ່າໄດ້ຮຽນວິຊາການດ້ານນີ້ມາແຕ່ຢ່າງໃດ ເຂົາຜ່ານການສຶກສາຊັ້ນກາງຈາກ ສາທາລະນະລັດ ປະຊາທິປະໄຕ ເຢຍລະມັນ ໃນຫມວດວິຊາການປ່າໄມ້ແທ້ ແຕ່ໃນຂະແຫນງວິຊາກົນຈັກ ຫາກແຕ່ວ່າ ພໍຖືກບັນຈຸເຂົ້າໃນບໍລິສັດປ່າໄມ້ເລກ ໑ ກໍ່ເຂົ້າຮັບວຽກງານໄປຕາມຄວາມຈຳເປັນ ເພາະບໍ່ມີວິຊາສະເພາະດ້ານເຮັດຖ່ານ ເຮັດແນວໃດບໍ່ເປັນແລ້ວ ພວກຫມູ່ເພື່ອນຂະແຫນງການອື່ນໆໃນທົ່ວປ່າໄມ້ເລກ ໑ ກໍ່ບໍ່ໄຊ່ວ່າໄດ້ຮ່ຳຮຽນມາຫມົດທຸກຄົນດອກ ອັນນີ້ລະ ທີ່ເປັນຈຸດພິເສດຂອງກອງຜະລິດເມືອງໃຫມ່ ກໍ່ດາຍ: ຄົນມີຫລາຍຄົນ ບໍ່ມີວິຊາສະເພາະ ແຕ່ຫາກເຂົ້າຮັບການອົບຮົມແບບລະຍະສັ້ນ ແລ້ວກໍ່ລົງມືປະຕິບັດຕົວຈິງ ທັງເຮັດທັງຮຽນ ແລະ ຖອດຖອນບົດຮຽນໄປນຳ ບໍ່ວ່າຈະແມ່ນຫນ່ວຍສຳຫລວດປ່າ ສ້າງທາງ ຫລືຊຸດຄົ້ນຕັດປ້ຳ ກໍ່ລ້ວນແລ້ວແຕ່ກໍ່ສ້າງກັນເອົາເອງເປັນສ່ວນໃຫຍ່

ດວງຈຳປາ

ຫົວໜ້າໜ່ວຍຜະລິດ ຢ່າງເລາະອ້ອມກອງຖ່ານຢ່າງພິຈາລະນາ ຖ່ານເຕົານີ້ໄດ້ດຳເນີນການຜະລິດ ຕາມເຕັກນິກທີ່ບົ່ງບອກໄວ້ໃນປື້ມຄູ່ມື ຢ່າງຊັດເຈນ ຄືເຄີຍເຮັດຜ່ານມາ ເຕົາ ນາກ ໔ ແບບທັນສະໄໝ ເຮັດດ້ວຍເຫລັກ ຈຳນວນ ໘ ເຕົາ ທີ່ທຳການຜະລິດນີ້ ເປັນຊະນິດເຄື່ອນທີ່ໄດ້ ບໍລິສັດເຫັນວ່າ ເໝາະສຳລັບຈະນຳມາທົດລອງໃຊ້ຢູ່ກັບປ່າ ພາຍຫລັງ ທີ່ ເຂດເນືອງໃໝ່ໄດ້ຮັບການບຸກເບີກ ເອົາໄມ້ອອກຈຳນວນໜຶ່ງແລ້ວ ກໍມີຕົ້ນ ໄມ້ເສດທີ່ໜ້າເສຍດາຍ ເໝາະສົມແກ່ການນຳໃຊ້ເຂົ້າໃນເສດຖະກິດ ເຜົາຖ່ານ ບໍລິສັດຈຶ່ງຂຶ້ນແຜນການຜະລິດດ້ານນີ້ ເພື່ອໃຫ້ມີລາຍໄດ້ສົມທົບເຂົ້າຕື່ມ ຕາມທິດທາງຫັນເປັນລັດວິສະຫະກິດ

ເຕົາເຫລົ່ານີ້ ໜ່ວຍໜຶ່ງ ສາມາດບັນຈຸຟືນເຂົ້າເຕັມທັງ ມີ ຖ່ານໄດ້ຮອດ ກໍ່ ແມັດກ້ອນໃຊ້ເວລາໃນການຜະລິດທັງໝົດ ໔໘ ຊົ່ວໂມງ ທັງນີ້ ນັບທັງ ໑໐ ຊົ່ວໂມງທີ່ມອດເຕົາໃຫ້ເຢັນກ່ອນເອົາຖ່ານອອກ ເຕັກນິກໃນການເຜົາ ກໍມີອັນງ່າຍ ໄວກວ່າເຕົາພື້ນບ້ານ ແຕ່ກໍ່ຍັງມີອັນສັບສົນຢູ່ພໍ່ສົມຄວນເຕົາໜ່ວຍໜຶ່ງມີທໍ່ເຜົາຢູ່ ໘ ທໍ່ ປ່ຽນກັນເຜົາ ຊຸດລະ ໔ ສັບຫວ່າງກັນກັບອັນ ທີ່ອັດໄວ້ ໔ ທໍ່ ໂດຍສັງເກດຈາກຄວັນທີ່ອອກທາງເທິງທໍ່ ຈຶ່ງປ່ຽນຊຸດ ຄືຕອນຈູດທຳອິດຄວັນຈະເປັນສີດຳ ເມື່ອຄວັນປ່ຽນເປັນສີຂາວ ໝາຍເຖິງວ່າ ຖ່ານສຸກແລ້ວ ຕອງຖອດໄຟອອກອັດ ແລວຈູດທໍ່ຊຸດສອງຕໍ່ໄປ

- ຫົວໜ້າ ຖ່ານເຕົານີ້ສຸກບໍ່ທົ່ວກັນຈັກດີ້ ! ຫົວໜ້າຈຸເຜົາໃຫ້ຂໍ້ສັງເກດ

- ນັ້ນຕີ້ ນ້ອງເຮົາຈະຕ້ອງຊ່ວຍກັນກວດກາ ອີກຄັ້ງເພື່ອ ສະຫລຸບຄວາມເຫັນລະອຽດ ມັນເປັນນຳເນື້ອໄມ້ບໍ ຫລື ການລຳລຽງໄມ້ເຂົ້າ ? ຫລືແນວໃດ ? ສະເພາະສີຂອງຄວັນ ເຮົາກໍ່ວ່າຄັກໃຈຢູ່ໄດ້ນັ້ ໄຊ ? ຫລືວ່າຍັງມີຫຍັງອີກທີ່ເຮົາຍັງກຳບໍ່ໄດ້ ? ເລື່ອງນີ້ ຈະຕອງລາຍງານຂຶ້ນບໍລິສັດຕື່ມ ເພາະວ່າເດືອນແລວກໍໄດ້ຮັບສອງແສງວ່າເຮົາເຮັດຫລຸບທຶນຫລາຍ

- ຄືວ່າຫັ້ນລະ ຫົວໜ້າ, ລາຄາຖ່ານຢູ່ປາກຊັນຕ່ຳແທ້ງ ! ກິໂລ

ໜຶ່ງມີແຕ່ ໔ ກີບ ຂະນະທີ່ຢູ່ວຽງ ຕົກເປັນຮອດ ໕ - ໖ ກີບພຸ້ນ !

- ແຕ່ເຮົາຈະແກ່ເຂົ້າວຽງກໍບໍ່ໄດ້ ໄຊ ຄ່າຂົນສົ່ງເຮົາເປັນຖຽວ ລະຕັ້ງ ໔-໕.໐໐໐ ກີບ ຊິເປັນຫວະ ? ຈຳເປັນຕ້ອງຂາຍກັບທີ່ແນວນີ້ແລ້ວ ແຕ່ກໍ່ຕ້ອງຄິດໄລ່ໃຫ້ແທດຕົວຈິງລະ ຂຶ້ນວຽງເທື່ອນີ້ອ້າຍຈະສະເໜີຂໍ້ຄວາມແນະນຳຕື່ມ ແມ່ນຜິດພາດນຳຫຍັງບໍ ?

- ມີວຽກຂຶ້ນວຽງ ອ້າຍທອນ ຍິ້ມອອກລະເນາະ ຊິໄດ້ເຫັນໜ້າ "ຂວັນໃຈ " !

ເຖິງແມ່ນໃນຄວາມມືດສົວລົ້ວຂອງຍາມຄ່ຳ ບຸນທອນ ກໍ່ຮູ້ສຶກວ່າ ຈະເຫັນຮອຍຍິ້ມປອກໄບທີ່ມຸມປາກຂອງອ້າຍນ້ອງຮ່ວມງານ ແຕ່ເຂົາບໍ່ອາດມີ ຄຳແກ້ໂຕ ໄດ້ແຕ່ຕັດບົດສົນທະນາດ້ວຍຄຳວ່າ " ບະ ! " ຄຳດຽວແລ້ວກໍ່ ຫຼຸບເຄື່ອງມືໄປມ້ຽນເຂົ້າຫ້ອງສາງນ້ອຍທີ່ປຸກໄວ້ໃກ້ເຕົາ ຫລຽວເບິ່ງທົ່ວໆເພື່ອກວດກາຄັ້ງສຸດທ້າຍ ແລ້ວນຳໜ້າບັນດາກຳມະກອນໃໝ່ອອກຍ່າງ ເມືອນຳທາງນ້ອຍລັດໄປສູ່ເຮືອນພັກລວມຢູ່ຊຸມໃກ້ນ້ຳຊັນ

ບັດນີ້ ແສງເດືອນສ່ອງກະຈາຍທົ່ວໜ້ານ້ຳ ນອງງານຍິ່ງໜັກນ້ຳຊັນ ຍາມຄ່ຳ ຍັງຊຸ່ມ ເພາະແດດເດືອນຫ້າທີ່ແຫງ ແລ້ງໄດ້ເຜົາອົບອາຍຮ້ອນມາຕະຫຼອດວັນ ອາກາດປ່າເຢືອກເຢັນໄວແຕ່" ຄືນດຶກ " ຄື ບຸນທອນ ເຄີຍຊິນເສຍແລ້ວກັບການລົງອາບນ້ຳຊັນ ຍາມກາງຄືນ ໂດຍສະເພາະຍາມເດືອນຫງາຍແນວນີ້

ວຽກງານຢູ່ປ່າ ບາງຄັ້ງກໍ່ບໍ່ມີໂມງຍາມຈຳກັດ ທຸກຄົນເຮັດວຽກ ຢາກໃຫ້ແລ້ວຕາມແຜນການ ຕາມຄາດໝາຍ ແລະ ທັງອີງຕາມຄວາມຮຽກຮ້ອງ

ຕ້ອງການຂອງໜ້າວຽກ ຂອງສະພາບອ້ອມຮອບແບບພາວະວິໄສ ການບຸກເບີກປ່າໄມ້ ແມ່ນການເອົາຊີວິດເຂົ້າພົວພັນກັບທຳມະຊາດ ຍານພະລຶດໄດ້ຈຶ່ງມີວຽກເຮັດ ຖ້າວັນໃດຝົນຕົກລົງມາແຮງແລ້ວ ກໍຕ້ອງໂຈະ ບາງ ໜ້າວຽກ ແຮງເຮັດໄປ " ຊາວປ່າ " ຄືເຂົາກໍແຮງເຂົ້າໃຈຕື່ມວ່າ ຄວາມຮັບຜິດຊອບຕໍ່ວຽກງານນັ້ນມີຫຼາຍກວ່າທີ່ມີຂຽນໄວ້ໃນເອກະສານ ລະບຽບຫຼັກການ ຂອງບໍລິສັດນັ້ນອີກ ມັນຮຽກຮ້ອງໃຫ້ພະນັກງານຕະຫຼອດເຖິງ ອ້າຍນ້ອງກຳມະກອນຕ້ອງຮຽນຮູ້ ເຂົ້າໃຈ ຮັກປ່າຮັກຕົ້ນໄມ້ ຮັກ ທຳມະຊາດ " ຊາວປ່າໄມ້ " ເຂົ້າປ່າ ເພື່ອບຸກເບີກຕັດປ່າຕົ້ນໄມ້ກໍຈິງ ແຕ່ຕ້ອງເຮັດຢ່າງມີວິທະຍາສາດ ມີແຜນການ ບໍ່ໃຫ້ປ່າຖືກທຳລາຍຕາຍເປົ່າ ພະລິດອອກມາຕ້ອງໃຫ້ຕອບສະໜອງຄວາມຕ້ອງການອັນຈຳເປັນຂອງບ້ານເມືອງ ບໍ່ແມ່ນເຮັດຊະຊາຍ ຕັດຕາງຖິ້ມ ປະກອງໄວ້ ກັກຕຸນໄວ້ຈົນຜຸໂດກ ຄືດັ່ງພວກພໍ່ຄ້າໄມ້ນາຍທຶນໃນລະບອບເກົ່າເຄີຍທຳລາຍລ້າງຜານປ່າມາແລ້ວ ບໍ່ຈັກວ່າຈັກທໍ່ໃດຮ້ອຍພັນຄິວ !

ລອຍລ່ອງ ໃນສາຍນະທີ ທີ່ຊາວເມືອງໃໝ່ສຸດແພງຫວງ ບຸນທອນ ຄຶດພໍ້ຄວາມປອກຂອງອ້າຍນ້ອງຫວ່າງແລງຫັ້ນ, ຄຶດພໍ້ວົງໜ້ານົນ ອວບອິ່ມ ຂອງນາງ ທີ່ຄົນເຮີ້ອງໃສ່ວ່າເປັນ " ຂວັນໃຈ " ຂອງເຂົາ

ກໍແມ່ນແຫລະ ! ນາງເປັນ " ຂວັນໃຈ " ຂອງເຂົາ ເປັນມາຫຼາຍເດືອນແລ້ວ ເຖິງວ່າຢູ່ໄກກັນຫຼາຍອາທິດຈຶ່ງພົບກັນ ແຕ່ຍາມມີວຽກ ວຸ່ນການຫຍຸ້ງ ຕ້ອງຟັນຟ່າອຸປະສັກ ນາງກໍຈະປະກົດອອກມາໃນມະໂນພາບ ຊ່ວຍເປັນກຳລັງໃຈໃຫ້ແກ່ເຂົາເປັນຈຸດທີ່ໝາຍໃນຊີວິດ-ບ່ອນຢັ້ງຢືນວ່າທີ່ນັ້ນ ລະເຂົາຈະໄປ່ ທີ່ນັ້ນລະ ທີ່ຝາກໃຈ ຝາກຄວາມຫວັງ !

ໄພວັນທີ່ຄຶດເຖິງ ! ເທື່ອນີ້ນັບວ່າເກືອບສອງເດືອນແລ້ວໄດ໋ນັ້ນ ທີ່ບໍ່ ໄດ້ເມືອຍາມ ນາງຈະຄຶດເຖິງເຂົາບໍ່ນໍ້ ? ນາງຈະຮູ້ຈັກຄຶດຈິດປິດ ຈື່ປີ້ ນຳເລື່ອງເລັກນ້ອຍຂອງຄູ່ບ່າວສາວທີ່ຮັກກັນບໍ່ ? ເດົາບໍ່ອອກເລີຍເພາະ ໄພວັນນາງເປັນຄົນມິດຂືນແບບໜ້າວໆ ທັງຂີ້ອາຍ ນາງເປັນສາວຊົນນະບົດເຖິງ

ແມ່ນວ່າໄດ້ມາດຳລົງຊີວິດຢູ່ເມືອງຫຼວງຫຼາຍປີ ນາງກໍຍັງຮັກສາວາດສະຫງ່ຽມຄ່ຽມຄືນນັ້ນມ້ວນເອົາໄວ້ບໍ່ປ່ຽນແປງ ແຕ່ກໍຍ້ອນຂໍ້ນີ້ເອງຫວ່າ ທີ່ເຮັດ ໃຫ້ນາງຖືກຕາຕ້ອງໃຈເຂົາ ແຕ່ຕອນແຮກພົບ ?

ບຸນທອນ ຍັງຈື່ຈຳວັນທີ່ເວົ້າກັນຢູ່ທ່ານ້ຳແຫ່ງນີ້ ເມື່ອຕົ້ນປີ ນັ້ນຄະນະບໍລິສັດລົງມາຕິດແທດວຽກງານກໍ່ສ້າງຂັ້ນຕົ້ນ ບັນດານາງສາວເລຂາ ຫຼາຍນາງໃນບໍລິສັດແນວຫລັງ ກໍຕິດຕາມມາເພື່ອຊ່ວຍວຽກ ໄພວັນກໍຮ່ວມ ມາໃນຂະບວນດັ່ງກ່າວ ຕອນນັ້ນກໍຍັງບໍ່ສະໜິດສະໜົມກັນເລີຍ ພຽງແຕ່ວ່າຮູ້ກັນດີ ເຄີຍໄດ້ຕໍ່ປາກຕໍ່ຄວາມລົມກັນແບບບ່າວສາວມາແລ້ວຄັ້ງໜຶ່ງ ແລວໂດຍບໍ່ຄາດຝັນ ພໍເຂົາລອບຊອນນາງຄ່ອຍໆ ໃນເວລາຫວ່າງວຽກຍາມແລງ ນາງກໍພົກຕົວ ໃຫ້ກຽດ ຍ່າງມາຮອດທ່ານ້ຳກັບເຂົາສອງຕໍ່ສອງ !

ເວລານັ້ນ ພວມຄ້ອຍແລງ ແສງແດດອ່ອນຈາງ ລົມໜາວຂອງຕົ້ນປີ ພັດວູບໆຈົນສາຂາງ່າໄມ້ແກວ່ງໄກວ ແລະໜ້ານ້ຳກໍສະທ້ອນປ້ອນແປ້ະເບົາໆ ຄວາມເຢັນແບບອາກາດປ່າພູ ຊອດຊຶມຮອດຫົວໃຈ ແຕ່ການໄດ້ຍ່າງຮຽງຄູ່ມາກັບຍິງ ທີ່ ໄຝ່ປອງ ແມ່ນ ມັນກັບກາຍເປັນອາຍອຸ່ນຈາກຄວາມຫວັງອັນເຮືອງຮອງ ຕ້ານຄືນຫວງຫັນກັບ ຄວາມໜາວທາງກາຍພາຍນອກ !

ໄພວັນ ຕຸ້ມແພຂິດແລ້ນ ຮໍ່ບ່າ ທັງສອງພ້ອມກັນນັ່ງແຄມນ້ຳ ບ່ອນມີໂງ່ນຫີນສະອາດບ່ອນທີ່ບຸນທອນ ມັກມາງອຍໂດດນ້ຳຍາມນ້ຳຂຶ້ນ ຈາກໂງ່ນຫີນແຫ່ງນີ້ ຈະສາມາດແນມເຫັນຫົວຫັດທີ່ສະຫວາດສະເຫວີຍແປນຕາຂອງສາຍນ້ຳຊັນ ທີ່ໃສຂຽວງາມ ເຊື່ອງຕົວຢ່າງລັບລີ້ຢູ່ກາງດົງດິບ

ເຂົາຍັງຈື່ທີ່ສຸດວ່າ ຄວາມຮູ້ສຶກຮຸ່ງຂອງຫົວໃຈ ເວລານັ້ນ ຮ້ອນ ເຮົ່ງ ປານແປວໄຟ ‘ບໍ່ຍອມປະໃຫ້ເວລາຜ່ານໄປພໍນາທີ

- ເລື່ອງຖາມນ້ອງຢູ່ບໍລິສັດນັ້ນ ນ້ອງຈະວ່າແນວໃດ ?

ເຂົາອອກປາກເຈາະຈົ້ມໂດຍກົງ ຢ່າງບໍ່ມີອາຍ

ບຸນທອນ ຍອມຮັບວ່າເຂົາບໍ່ແມ່ນຄົນຊ່າງເວົ້າ ລົມສາວກໍບໍ່ເປັນດອກ ຈົນອາຍຸ ໒໖ ປີຍັງບໍ່ເຄີຍມີຊູ້ເປັນການເປັນງານນຳເພິ່ນ ຄິດມັກໃຜແລ້ວບໍ່ເຄີຍກ້າອອກປາກຈັກເທື່ອ ແຕ່ຄາວນີ້ກັບຜູ້ນີ້ ມັນກໍມີສະພາບການອຳນວຍແດ່ ຍອນວ່າ ແລງນັ້ນ ທີ່ບໍລິສັດ ວົງສັງສັນນ້ອຍໆສະເພາະພາຍໃນ ເພື່ອສະຫລອງວັນຊາດ ໒ ທັນວາ ກໍພັດມີບັນຍາກາດມ່ວນຊື່ນແຈ່ມໃສຫຼາຍ ເຫຼົ້າກໍອາວມີພໍໄດ້ຊຶມໆ ຍ້ອນ ແລະ ປະກອບກັນສະຫາຍຫົວໜ້າແຜນການ ຜູ້ຊ່າງເວົ້າຊ່າງຈາກໍເປັນຜູ້ເບີກທາງໃຫ້ເຂົາແທ້ເຂົາວ່າ ເວົ້າແທ້ແລ້ວ ກໍແມ່ນເພິ່ນນັ້ນລະ ທີ່ເວົ້າຕ່າງໃຫ້ຕັ້ງຫຼາຍປະໂຫຍກ ສ່ວນບຸນທອນພໍແຕ່ເວົ້າລົ້ມ ຢຳ້ປະໂຫຍກສຸດທ້າຍ-ບ່ອນຈະເອົາຄວາມຄັກທໍ່ນັ້ນເອງ

ຈັ່ງຊັ້ນ ມາຢູ່ຕໍ່ໜ້ານາງຊັ້ນ ອັນເປັນສັກຂີພະຍານ ທີ່ສັກສິດ ເຂົາຈຶ່ງ ກ້າ (ແບບບາບິ່ນເລີຍລະ !) ເລັ່ງລັດ ຕາມຄວາມປາຖະໜາທີ່ແຮງຮ້ອນ

× ×

×

ໃຫ້ຕາຍເທາະ ! ຊາຍໜຸ່ມບໍ່ຄິດວ່າມັນຈະງ່າຍດາຍປານນັ້ນ ! ບ່ອຍ ວ່າຖາມ ແລະ ຈ້ອງຕາເບິ່ງນາງ ຢ່າງປັກອົກປັກໃຈ ຈົງໃຈ ແກມອ້ອນວອນ (ຊັ້ນລະຕິ ຖ້າຫາກວ່າ ດວງຕາເປັນປ່ອງຢ້ຽມຂອງຫົວໃຈຄືເພິ່ນວ່າ !.. ...) ນາງພຽງແຕ່ພິນໜ້າໜີ ສາຍຕາເຂົາ ຊົງອິດເອື້ອນຢູ່ຄາວໜຶ່ງ ຄາວດຽວເທົ່ານັ້ນ ! ພໍດີກັບ ທີ່ເຂົາພວມຄິດຍາກຢູ່ວ່າ " ກູຕາຍ " ຈະວ່າແນວໃດຕໍ່ໄປລະນີ້ ? ນາງກໍເລີຍ-ເພີຍປາກອອກມາ ສຽງພໍເປັນ ຊຸມອິ່ນວ່າ:

- ຊິວ່າແນວໃດ ? ... ກໍ... ແລ້ວແຕ່ອ້າຍລະ..."

ສາຍຕາເພິ່ນກໍແນມເໝີ່ລອຍອອກໄປກາງນ້ຳພຸນ!

ບຸນທອນ ສັງເກດເຫັນວ່າ ນິ້ວມ້ອຍອວບອິ່ມ ກຽງຄືລຳທຽນຂອງນາງລອດຜ້າຕຸ້ມອອກມາຈັບກັນຢູ່ຕັກ ສັ່ນຫນ້ອຍຫນຶ່ງ"

ນັ້ນແມ່ນພຽງພໍແລວ ສຳລັບເຂົາທີ່ຈະກາບຸກເຂົ້າບໍລິສັດ ຈັບໃບສະເຫນີ-ນາຂຽນລົງລາຍເຊັນ ຂໍສາວຄອບຄົວໃນອາທິດຕໍ່ມານັ້ນເອງ !

ທີ່ບໍລິສັດ ການປະຊຸມລາຍງານ ປະຈຳເດືອນ ດຳເນີນໄປຢ່າງຄັ່ງຄຽດ ຕະຫຼອດຄາບເຊົ້າ ກອງພະລຸດ ມີຫນ້າຢູ່ອ້ອມໂຕະຄົບຊຸດ : ຫົວຫນ້າຫນ່ວຍສຳຫລວດປ່າໄມ້ ຫນ່ວຍ ສຳຫລວດທາງ ຫນ່ວຍຕັດປ່າ ຂົນສົ່ງ ເສດຖະກິດປ່າໄມ້ ເຄື່ອງປ່າຂອງດົງ, ກະສິກຳ ກໍ່ສ້າງ ຂົວທາງ ຯລຯ ພັກທຽງ ບຸນທອນ ຖືກແກ່ໄປກິນເຂົ້ານຳພວກອ້າຍ ພວກລຸງ ທີ່ມັກເຮັດເປັນປະເພນີ ເວລາເຂົ້າມາລວມກັນ ກໍຕ້ອງມີການສັງສັນກັນແບບພື້ນບ້ານ. ກິນລາບ ກິນຕົ້ມຕ່າງລົມກັນຕໍ່ ສາວບັນຍາກາດຮັກແພງລະຫວ່າງແນວຫນ້າຢູ່ປ່າໄມ້ ກັບຂະບວນແນວຫລັງຂອງ ບໍລິສັດ ເປັນອັນວ່າບໍ່ໄດ້ເວົ້າລົມຫຍັງ ເປັນສ່ວນຕົວກັບ ໄພວັນເທື່ອ ພຽງແຕ່ຖາມຂ່າວຕອນເຊົ້ານີ້ສອງສາມຄວາມ ຄືນນີ້ເຂົາເດີນທາງຈາກເມືອງໃຫມ່ ມາຮອດເດິກ ເຫັນວ່າບໍ່ຄວນໄປລົບກວນນາງຢູ່ເຮືອນລວມ ຄິດວ່າແນວໃດມື້ນີ້ຈະຫາໂອກາດໄປລົມນ້ອຍກັນຕອນໃດຕອນຫນຶ່ງ

ພໍຮອດສອງໂມງ ການແລກປ່ຽນຄວາມເຫັນ ແລະ ຟັງຄຳຊີ້ນຳ ຂອງຫົວຫນ້າບໍລິສັດກໍດຳເນີນຕໍ່ ຈົນຮອດສີ່ໂມງເຄິ່ງ ປານນັ້ນທ່ານຫົວຫນ້າຍັງເວົ້າ

ປອດໃສ່ຕອນເລີກລາຈາກກັນວ່າ:

- ບຸນທອນ ຢູ່ປຶກສາວຽກນຳອ້າຍຕື່ມກ່ອນເດີ້ !

ຊາຍໜຸ່ມຮ່າງສູງ ຜິວຄ້ຳ ຕາຄົມແຂກຢືນລັ່ງເລຢູ່ຂ້າງໂຕະປະຊຸມ ບັນຫາຖືກຖຽງກັນວັນນີ້ ນັບວ່າຍກ້ຳຢູ່ນຳເລື່ອງເຕົາຖ່ານເປັນສ່ວນໃຫຍ່ ແຕ່ລະນະຍັງບໍ່ຍອມຕົກລົງວ່າໃຫ້ຢຸຕິການຜະລິດໃນປີຕໍ່ໄປ ການຂຶ້ນແຜນໃໝ່ຈະຕ້ອງລະອຽດຖີ່ຖ້ວນຕື່ມ ນັ້ນໝາຍຄວາມວ່າ ເຂົາເອງກໍ່ຈະຕ້ອງບຸກບືນຫຼາຍຂຶ້ນຈັກໃດ ທ່ານຫົວໜ້າຄົງຈະຢາກໂອ້ລົມກັບເຂົາໃຫ້ມີກຳລັງໃຈບໍ ?

ສຽງເຄາະປະຕູດັງກອກໆ ທ່ານຫົວໜ້າ ຊຶ່ງຍັງຢືນທ້ອນເອກະສານຢູ່ທີ່ໂຕະເອີ້ນໃສ່ວ່າ:

- ເຂົ້າມາແມ້ !

ຮ່າງຄິງ ກົມອ່າວອວບ ຂອງໄພວັນໂຜ່ເຂົ້າມາ ນາງກໍ້ໜ້າຕື່ນຕາຕໍ່ພໍ່ນາງ ບຸນທອນ ໃຈເຕັ້ນ ຈົນບໍ່ເປັນຈັງຫວະ ແຕ່ທັງສອງກໍ່ຍັງຮັກສາທ່າທີສະຫງົບສະຫງ່ຽມຍ່າງໄປນັ່ງທີ່ຕັ່ງຮັບແຂກ ຕາມຄຳເຊີນຂອງທ່ານ ຫົວໜ້າບໍລິສັດ

ຄວາມມິດງຽບ ຄອບຄອງທົ່ວຫ້ອງການກວ້າງ ສະອາດເປັນລະບຽບ ນັ້ນຊົ່ວຂະນະໜຶ່ງ ແລ້ວທ່ານຫົວໜ້າກໍ່ຂຶ້ນຕົ້ນຄວາມລົມ

- ເອີ້ນພວກນ້ອງທັງສອງມາລົມກັນມື້ນີ້-ເລື່ອງພວກນ້ອງຍື່ນໃບ ສະເໜີຂໍສ້າງຄອບຄົວນຳກັນນັ້ນລະ. . . ທີ່ວ່າ ຍັງບໍ່ໄດ້ອະນຸມັດໃຫ້. . . ຢາກ ທຳຄວາມເຂົ້າໃຈນຳກັນຕື່ມນັ້ນ. . . ?

ບ່າວສາວ ບໍ່ກ້າຮອດແນມເບິ່ງໜ້າກັນ ຕ່າງກໍ່ສານມືໄວ້ເທິງຕັກ ຮັບຟັງຂ່າວຂໍ້ທີ່ເດົາບໍ່ຖືກ- ແລະ ຈົນບໍ່ກ້າເດົາ !

- ບຸນທອນ, ນ້ຳສຽງຂອງທ່ານຫົວໜ້າອ່ອນໂຍນຜິດຈາກເວລາເວົ້າວຽກຢູ່ກອງປະຊຸມ ປານຄົນລະຄົນ - ພວກອ້າຍໝົດຄະນະ ພ້ອມຝ່າຍຈັດຕັ້ງຢາກຊີ້ແຈງຢ່າງຈິງໃຈໃນເລື່ອງນີ້ ອີງໃສ່ວ່າ ພວກນ້ອງທັງສອງກໍ່ມີລະດັບ

ຄວາມຮັບຮູ້ສຶກ ແນວຄິດມີຫລັກໝັ້ນແໜ້ນແກ່ນ ຈຶ່ງກ້າເວົ້າແນວນີ້ບໍ່ປິດບັງສິ້ນເງື່ອນອັນໃດດອກ ຂໍໃຫ້ພວກນ້ອງເຊື່ອໝັ້ນເທາະ

ບຸນທອນ ເງີຍໜ້າຂຶ້ນ ປະສານສາຍຕາກັບທ່ານຫົວໜ້າ ຢ່າງ ກ້າຫານ ທັງຢືນຢັນວ່າ:

- ເຈົ້າ ພວກນ້ອງພ້ອມຈະຮັບຟັງ

- ພວກເຮົາກໍເຫັນວ່າພວກນ້ອງຕ່າງກໍເປັນຜູ້ທີ່ຫາວຫັນໃນວຽກງານ ຄື ໄພວັນຊີ້ເຮົາຖືວ່າແມ່ນລູກສາວຂອງປ່າໄມ້ເລກ ໑ ລຸະໄປ ເຂົ້າມາ ຮ່ວມກັບພວກເຮົາ ແຕ່ທຳອິດ ຕັ້ງແຕ່ບໍລິສັດຍັງບໍ່ທັນເປັນຕອນເປັນໂຕນັ້ນ ? ສ່ວນບຸນທອນ ກໍເປັນພະນັກງານທີ່ວ່າສ່າງກັນຂຶ້ນໃນແປວໄຟວຽກງານແນວໜ້າແທ້ແທ້ ບໍລິສຸດຜ່ອງໃສທຸກດ້ານ ທາງລຸງຄະນະຢູ່ເມືອງໃໝ່ພຸ່ມ ເພີ່ນກໍຊຸກຍູ້ມາຢູ່ທາງເຮົາພີ້ກໍລ້ວນເຫັນດີນຳໝົດນີ້ ! ການທີ່ພວກນ້ອງມັກຮັກກັນ ຈູດປະສົງຢາກໝັ້ນຢາກໝົນຮ່ວມນຳກັນນີ້ ພວກເຮົາແມ່ນເຫັນດີ... ແຕ່ມັນມີ ແນວນີ້...

ບຸນທອນ ຮູ້ສຶກວ່ານ້ຳສຽງຂອງທ່ານຫົວໜ້າຄືວ່າຢາກຝືນໆວາດໜຶ່ງ ແຕ່ບໍ່ອາດເຂົ້າໃຈໄດ້ວ່າເປັນຍ້ອນຫຍັງ

ບັດນີ້ ປີໃໝ່ສາກົນ ກໍໄດ້ວຽນບັນຈົບ ຄົບຮອບມາອີກ

ບຸນທອນ ໝົກໝຸ່ນຢູ່ກັບວຽກງານໃໝ່ ຢ່າງບໍ່ເງີຍໜ້າເງີຍຕາ ມາຮ່ວມຊີວິດຢູ່ນຳກອງພະລິດຊຸດຄົ້ນປ່າໄມ້ທີ່ຄາຍພັກຫ້ວຍນ້ຳເຜີ້ງ ຊຶ່ງມີນຳກັນຮອດ ໗໐ ກວ່າຄົນ ຊາຍໜຸ່ມຮູ້ສຶກຟົດຟື້ນມ່ວນຊື່ນຢູ່ເລື້ອຍໆ ວຽກງານຊຸດຄົ້ນໃນສົກປີນີ້ພວມເລັ່ງລັດເຂົ້າສູ່ເຂດ ສຳຫລວດຕີນພູ ທີ່ລືຊາດ້ານຄວາມສູງຊັນປານກຳແພງ ສະເພາະໜ່ວຍຂົນສົ່ງລວມ

ຫມອນ ຊຶ່ງບຸນທອນ ຮັບຜິດຊອບນັ້ນນຳກັນ ໑໐ ຄົນເຮັດວຽກຊຸດລະສອງ ສະຫາຍຄື ໂຊເຜີ ແລະ ພູຊວຍ ການເຮັດວຽກ ແມ່ນບໍ່ມີໂມງຍາມ ຈຳກັດ ພາກັນລຸກແຕ່ ໔ ໂມງແຈ້ງ ຊຸ່ມຈັກລົດ ແລ້ວກໍ່ຂົນໄມ້ເມືອລົງສະຫນາມເມືອງເກົ່າ ຖຽວຫນຶ່ງກ່ອນ ຈຶ່ງພໍດີມາປັ້ນເຂົ້າ ກວ່າຈະເລີກກໍ່ແມ່ນຄ່ຳມືດ ຫຼືຮອດ ໗-໘ ໂມງແລງ ວຽກງານຍິ່ງສິ່ງເຮັດໄດ້ລື່ນຄາດຫມາຍ ວັນລະ ໒໐ ແມັດກ້ອນ ! ງູລວງຫມອນກໍ່ເຮັດວຽກແຂ່ງເວລາຄືກັນ ສົນໃດຈະດຶງລາກ - ທ່ອນໄມ້ທີ່ນອນນະລວຍໄຂວ່ຂວາງໃນດົງນັ້ນ ອອກມາກອງເປັນລະບຽບ ຢູ່ສະຫນາມຂາງຄາຍພັກແຮມ ໃຫ້ຫມົດໄດ້ ກໍ່ແມ່ນເຮັດຢ່າງບຸກຫນັກໂລດ

ສຽງຈັກລົດຄີບ ດັງອື້ນໆ ກ່ອນດົງໃຫຍ່ ບຸນທອນ ບັນຊາ ປາກຄີບໃຫ້ຈັບທ່ອນໄມ້ຫນາຕັ້ງເປັນ ໔-໒໐ ຊັງຕີແມັດ ຢ່າງງ່າຍດາຍ ເຂົາຮູ້ສຶກ ມ່ວນ ແລະ ພໍໃຈນຳວຽກງານນີ້ ເຄື່ອງຈັກທັນສະໄຫມ່ຊ່ວຍໃຫ້ມະນຸດເຮົາ ເປັນຜູ້ສາມາດເປັນເຈົ້າການໃນວຽກງານ ຄືກັບວ່າເຂົາເປັນ " ເຈົ້າປ່າ " ເປັນຄົນຂອງປ່າ ທີ່ຮູ້ຈັກຕົ້ນໄມ້ ຮູ້ຈັກຈຸດດີ ຈຸດອ່ອນຂອງມັນ ແລະ ສາມາດຂຸດຄົ້ນເອົາມັນມາສ້າງປະໂຫຍດແກບານເມືອງ

ວຽກງານນີ້ເບົາບາງລົງຫຼາຍ ເພາະຝົນຕົກຫນັກມາ ມື້ ວັນ ມື້ ຄືນ ແລວ ຫນວຍຕັດປ່າຈົນຕອງຢຸດພັກຊົ່ວຄາວ ຝົນຫລົງລະດູ ປື້ນກັບຄຳບູຮານເຄີຍວ່າ " ບໍ່ທອນເວັ້ນເດືອນສາມ ບໍ່ທອນຮາມເດືອນ ໔ ເວັ້ນແຕ່ຍີ່ ກັບຈຽງ " ນີ້ກໍ່ເດືອນຍີ່ແດດແດດ ແຕ່ຝົນເຈົ້າເຮືອນຊາວນາຕົກຈົນມຶນຫູມຶນຕາບໍ່ຂຶ້ນ ຈົນທາງຕັດໃຫມ່ຂາດ ຄົງຈະຕອງກິນເວລາອີກຫຼາຍມື້ກວ່າຫນວຍ ສ້າງທາງຈະປົວແປງຄືນໄດ້ເປັນປົກກະຕິ ຫນວຍຍິ່ງສິ່ງຂອງເຂົາກໍ່ພຽງແຕ່ເຮັດວຽກ " ລວງຫມອນ " ພໍດີຝົນເຊື້ອນມາແຕ່ເຊົ້າຮອດ ໑໑ ໂມງ ແດດກໍ່ແຈມໃສ ບຸນທອນ ໂຕນລົງຈາກລົດຄີບຢ່າງຄ່ອງໄວ

- ຫມົດຝົນແລ້ວຟ້າກໍ່ແຈ້ງ ບາ ! ຈັ່ງແມ່ນມັນສະຫວ່າງໃຈບາດນີ້ !

ອ້າຍທອນບໍ່ຄິດຢາກຂຶ້ນເມືອວຽງແດ່ບໍ ? ອ້າຍນ້ອງຜູ້ຊ່ວຍວຽກຫ້ອງຂຶ້ນ

- ບໍ່ເມືອດອກ ໝົດລະດູຜະລິດກ່ອນຈັ່ງຊິເມືອບາດດຽວ" ເຂົາ ຕອບ ປອກໆ ແຕ່ໃນໃຈກໍ່ຄິດຊວາດຫາຮູມງຂຶ້ນມາ

ສອງເດືອນແລ້ວ ນັບແຕ່ເລີ່ມລະດູການຜະລິດໃຫມ່ ເຂົາຍັງບໍ່ໄດ້ຂຶ້ນວຽງຈັກເທື່ອ ທ້າຍເດືອນແລ້ວນີ້ ກໍ່ຄາຢູ່ປຶກສາວຽກນຳຄະນະປ່າໄມ້ເລື່ອງ ວາງແຜນປູກເຮືອນໃຫມ່ຂອງພະນັກງານ

- ອ້າຍທອນ ຊິບໍ່ເມືອຫວງໃບສະເຫນີນັ້ນແດ່ຫວາ ? ມັນຮອດຂອບປີແລ້ວຕ່ວານີ້ ບ້າ ສັງມາໃຈເຢັນແທ້ເດ ? ທາງສຽງປອກແກມອັດສະຈັນ

ທັງສອງຍ່າງມາຮອດຫວຍບ່ອນອາບນ້ຳຂອງຊາວກຳມະກອນ

- ເຢັນຄືນ້ຳຫວຍນ້ຳເຜີ້ງນີ້ລະນໍ້ !

ສຽງສະຫາຍຫນຶ່ງຈາກຫນ່ວຍຕັດປ່ຳເອີ້ນປອກ ພາຍຫລັງດັກຟັງຄວາມລົມຂອງສອງອ້າຍບ່າວນັ້ນມານຳທາງ.

- ລະວັງເດີ້ ! ປະໄວ້ຄົນ " ແນວຫລັງ " ເກີດປ່ຽນໃຈລະຍາກໄດ້ສະຫາຍ !

ທຸກຄົນຫົວນຳຄຳສັບທີ່ຜູ້ກ່ຽວໃຊ້ວ່າ " ແນວຫລັງ "

- ເລື່ອງວຽກລະເພີ່ນຈັ່ງໃຈຮອນອ້າຍເຮົານະ ! ເລັ່ງອ້າຍນ້ອງກໍ່ເກັ່ງປັດໄທ ! ບາດທີເລື່ອງຮັກ ເພິ່ນບໍ່ຊ່າງບິ່ນດອກ ເພິ່ນຊິປະໃຫ້ມັນສຸກ ເອງງອນເອງຈືນວ່າຫລົ່ນຈາກຕົ້ນເອງພຸ້ນຕີ້ !

ສຽງຫົວຂອງພວກອ້າຍບ່າວຄືນດັງແຊວຂຶ້ນຂັດກັບສຽງຄາງຫີ່ນໆ ຈວດແຈັດຂອງຈັກເລື່ອຍທີ່ພວມເຮັດວຽກຢູ່ໄກໆ

ບຸນທອນ ປະໃຫ້ອ້າຍນ້ອງປອກຢາງອາລົມດີ ເຂົາຫົວຍຸ້ມໆ ຕາມອັດ ທະຍາໄສ. ດຽວນີ້ເຂົາກາຍເປັນຄົນທີ່ສຸຂຸມທຸ່ມທ່ຽງຂຶ້ນຫຼາຍ ຄຳເວົ້າ ຂອງທ່ານຫົວຫນ້າໃນຄັ້ງນັ້ນລະດົມໃຈໄດ້ຢ່າງມະຫາສານ ໃຜຈະຮູ້ດີໄປກວ່າເຂົາ ແລະ ໄພວັນ ວ່າການທີ່ຂັ້ນເທິງບໍ່ອະນຸມັດນັ້ນແມ່ນເຫດຜົນທີ່ຈີບງາມເຫມາະສົມທຸກດ້ານ

ເຂົາບໍ່ວິຕົກກັງວົນແມ່ນແຕ່ຫນ້ອຍເລີຍ !

- ການສ້າງຄອບຄົວ ບໍ່ແມ່ນເລື່ອງສ່ຽງໄພ ເຂົາຍັງຈື່ຄຳເຕືອນ ຂອງ ທ່ານຫົວຫນ້າໄດ້ດີ ຄູ່ສົມລົດຄວນກຽມພ້ອມຮອບດ້ານ ບໍ່ວ່າວັດຖຸກໍ່ຄືຈິດໃຈ..

... ໂດຍສະເພາະພວກເຮົາພະນັກງານກຳມະກອນຄວນໃຫ້ " ຄອບຄົວ " ນັ້ນມາຊຸກຍູ້ວຽກງານຂອງເຮົາ ບໍ່ແມ່ນຈະໃຫ້ມາຈອງຫນ່ວງຈົນເສັຍອະນາຄົດ ດີ...

ແລ້ວເພິ່ນກໍ່ໄດ້ຍົກຕົວຢ່າງຄູ່ບ່າວສາວອື່ນໆ ທີ່ມັກຮັກກັນ ບາງຄູ່ພຽງແຕ່ ໔-໖ ເດືອນ ກໍ່ເລີຍເກີດເບື່ອຫນ່າຍກັນຂຶ້ນຈົນຕ້ອງຂໍຖອນໃບສະເຫນີກໍ່ມີ

- ບໍ່ມີຫຍັງດອກ ພວກອ້າຍເອົາເວລາເພື່ອກຽມຕົວໃຫ້ພ້ອມນັ້ນແລ້ວ ເຂົາລົມຂະນະທີ່ນັ່ງລໍຖ້າຜຽນລົງອາບ

ແລະເພື່ອໃຫ້ອ້າຍນ້ອງເຂົ້າໃຈເຫດຜົນທີ່ການຈັດຕັ້ງໄດ້ໂຈະໃບສະ ເຫນີ ເທື່ອແລ້ວນີ້ ບຸນທອນ ກໍ່ເລົ່າເລື່ອງທີ່ທ່ານຫົວຫນ້າບໍລິສັດເພິ່ນໄດ້ໂອລົມ ເຂົາ ແລະ ໄພວັນ ຄັ້ງນັ້ນສູ່ຟັງຕາງຂ້າເວລາ

ເພິ່ນໄດ້ຍົກກໍລະນີຂອງສະຫາຍ ປະສິດ ມາໃຫ້ຟັງ ປະສິດຮຽນ ມາຈາກຕ່າງປະເທດຄືກັນ ເມື່ອເຂົ້າສັບຊ້ອນວຽກງານໃນກະຊວງ ແລະ ລົງສູ່ພື້ນຖານ ສຳຫລວດປ່າເຂົາກໍ່ຫ້າວຫັນດີ.

- ນັ້ນກໍ່ມັກປຸບປັບ ຢາກເອົາໂລດຄືກັນວ່າຊັ້ນເພິ່ນວ່າ ທັງທີ່ວນະ ເວ ລານັ້ນຂັ້ນເທິງກໍ່ຄິດວ່າໃຫ້ເອົາເມັຍໄວ ຕາມທີ່ໃຈລາວຮ້ອນຢາກໄດ້ຄືຊິ ເປັນ ຜົນດີ ກໍ່ເລີຍອະນຸມັດໃຫ້ ບາດເອົາແລ້ວວ່າຊັ້ນ ! ເກີດເປັນເລື່ອງ ຂັດ ແຍ່ງກັນ ຮອດກັບພໍ່ເຖົ້າແມ່ເຖົ້າ ອີກກະທິກ ! ບໍ່ມີຫຍັງ-ຄວາມຈິງກໍ່ຄາຍ ເວລານັ້ນ ລາວກໍ່ເອົາເມັຍໄປຢູ່ນຳຢູ່ເມືອງໃຫມ່ ກໍ່ມີເຮືອນໃຫ້ຢູ່ ເຮືອນ ພະນັກງານແຕ່ວ່າຍັງແມ່ນລັກສະນະຊົ່ວຄາວນີ້ ເວລານັ້ນ ໄຟຟ້າກໍ່ບໍ່ທັນມີ ເຮັດແນວໃດຂອງວ່າລູກດໍ່ກໍ່ໃຫມ່ ມັນກໍ່ບໍ່ທັນສະຫວ່າງສະໄຫວຄືດຽວນີ້ແລ້ວ ! ຂະເຈົ້າກໍ່ບໍ່ທັນໄດ້ວ່າຫຍັງຜົວເມັຍກໍ່ຊົງຊິອົດຢູ່ນຳກັນໄດ້ ຫາກແຕ່ວ່າ ແມ່

ເຖົ້ານັ້ນຕິ ລົງເມື່ອຍາມລູກສາວໄປເຫັນສະພາບແນວນັ້ນໂລດຮ້ອງໂຮ ຂຶ້ນໂລດ ! ແມ່ເຖົ້າພັດເປັນຄົນໃນວຽງວ່າຊັ້ນ ນາງນັ້ນພັດແມ່ນລູກສາວດຽວອີກ ກໍ່ມັນນະ ! ດຶງເອົາລູກສາວຄືນມາຢູ່ວຽງນຳ ບໍ່ໃຫ້ລົງເມືອງໃຫມ່ອີກ ແນວນັ້ນແນວນີ້... ທາງທາວນັ້ນ ຄັນເມຍບໍ່ຢູ່ນຳແລວ ລາວກໍເລີຍບໍ່ຊາງ ຢູ່ໃຈມັນບໍ່ຢູ່ພູ້ນ ! ມາຂໍຍ້າຍ ! ເວົ້າເລື່ອງຍ້າຍທາງບໍລິສັດເພິ່ນກໍເຮັດ ວຽກມີແຜນການນັ້ ? ຍ້າຍກໍ່ຕອງຮອດຍາມລະບໍ ຈຶ່ງຍ້າຍໄດ ເພິ່ນກໍຈະ ພິຈາລະນາຢູ່ ແຕວ່າລາວຫາກໃຈຮ້ອນອີກຢ່າງຫນຶ່ງ ກໍ່ເປັນນຳພໍ່ແມ່ຂອງເມຍນັ້ນແລວບໍ່ພິບຶດ ລາວກໍເລີຍມາຄອບວ່າຂໍລາອອກເລີຍວ່າຊັ້ນ ! ຈິໄປຄາຂາຍນຳ ພໍ່ເຖົ້າແມ່ເຖົ້າ... ເວົ້າໄປລະໄດ ! "

- ບໍ່ເວົ້າແລວ ເລື່ອງອ້າຍສິດຂອງວ່າເມຍລາວກໍເປັນປະຊາຊົນ ບໍ່ໄດຢູ່ໃນການຈັດຕັ້ງຂອງເຮົາ. ເວົ້າລະດົນກັນມັນກໍຍາກນໍ້ ? ພໍ່ແມ່ເມຍກໍພັດບໍ່ມີທັດສະນະດານການສາງສາສັງຄົມນິຍົມຈັກຫນ້ອຍ ! ຄືເອື້ອຍໄພວັນນີ້ ລາວກໍມີລະດັບຮັບຮູຕາງກັນຕະວາ ! ອ້າຍນອງຂັດຂຶ້ນກ່ອນທີ່ບຸນທອນ ຈະທັນເລົ່າເລື່ອງສຸດ.

- ແທໄດ ຕອນນັ້ນ ອ້າຍສິດກໍກາຍເປັນຄົນເສຍຫາດຂາດຄຸນໄປ ຫຼາຍເຕີບ... ຫາກຕອນນີ້ ຄືເຫັນລາວຄືນມາເຮັດວຽກບໍ ແມ່ນບໍ່ອ້າຍທອນ ?ສະຫາຍຈາກຕຸດປ່າກໍສະແດງອອກ ວ່າຮູ້ຈັກເລື່ອງນີ້ດີ.

- ແມ່ນແທ, ບຸນທອນ ຮັບຄຳ, ທັງນີ້ກໍຍ້ອນການກໍ່ສາງອົບຮົມຂອງການນຳພວກເຮົາ. ກະຄືທີ່ພວກເຮົາເຄີຍຮ່ຳຮຽນມານັ້ນແລວ ທານຫົວຫນາເພິ່ນຍ້ຳເລື້ອຍໆວ່າໃຫ້ຄິດຄັກໆ ຄັນໃຜຈິອອກໄປຫາກິນແບບເອກະເທດກໍດາຍ ຄາຂາຍກໍດີ... ເພິ່ນຫາກໍ່ມີດອກອັນຕົວຢ່າງຕ່າງໆທີ່ຍົກມາ... ເລື່ອງທີ່ນຮອນທີ່ພັກລັດໄດຖອກເທອອກເພື່ອສາງພະນັກງານວິຊາສະເພາະຄືຊົນເຮົານີ້ນະຫນຶ່ງກໍແມ່ນເປັນການສະແດງຄວາມຮູບຸນຄຸນທີ່ພັກລັດໄດກໍ່ສາງເຮົາ-ໃຫ ໂອກາດເຮົາໄດຮ່ຳຮຽນສູງ ແລວທາງດານທັດສະນະຫລັກຫມັ້ນອີກ... ທິດທາງເພິ່ນກໍບອກແລວວ່າປະເທດຊາດພວກເຮົາຈະເດີນຕາມເສັ້ນທາງ ສັງຄົມ

ນິຍົມ ເພື່ອຄວາມສົມບູນພູນສຸກຂອງປວງຊົນ ແລ້ວມາຮອດຫນີ້ ຊາແຕ່ ມີຄວາມຫຍຸ້ງຍາກຫນ່ອຍດຽວ ດ້ານຄວາມສະດວກສະບາຍ ຊຶ່ງກໍແມ່ນບັນຫາຊົ່ວຄາວນັ້ນ-ກໍຈະມາໃຈອ່ອນ ແລ້ວຖອຍກັບໄປຫາລະບອບນາຍທຶນ-ໄປຮັບໃຊ້ພວກທີ່ມັນກົດຂີ່ຂູດຮີດຄົນຫັ້ນ ! ເຮົາລະພາກັນຕໍ່ສູ້ລອດລົ້ມລອດຕາຍມາແລ້ວ ຍັງຊິໂງຄືນໄປ-ຈິເປັນບໍ່ ?... ເພິ່ນກໍມີແຕ່ກໍ່ສ້າງອົບຮົມຊີ້ໃຫ້ເຫັນທາງຜິດທາງຖືກນີ້ລະ... ແຕ່ວ່າບັນຫາຄອບຄົວຈອງຫນວງນີ້ ກໍບໍ່ງ່າຍ ຫົວຫນ້າ ເພິ່ນວ່າ... ຄືສະຫາຍສິດ ຫັ້ນກໍຕັ້ງວ່າ ໔-໖ ເດືອນ ຈັ່ງກັບມາຮັບນຳເພິ່ນຫມົດ ແລ້ວກໍໄດ້ຊັບຊ້ອນຄືນຢູ່ບໍລິສັດແນວຫລັງຫັ້ນຊົ່ວຄາວບໍ່ດົນກໍຈະໄດ້ລົງມາ ສະຫນາມຫນີ້ແລ້ວ ເພາະວ່າລາວກໍມີວິຊາສະເພາະທາງນີ້ ວ່າຊັ້ນໄດ໋ ຈັ່ງວ່າກັບພວກອ້າຍເພິ່ນກໍເອົາແທ້ເອົາວ່າໃຫ້ຄັກໆໃຈກ່ອນ ພວກອ້າຍບໍ່ມີຫຍັງຂັດຂ້ອງດອກ

ກຳມະກອນທັງສອງ ຟັງບຸນທອນບັນລະຍາຍຢ່າງນິຍົມຊົມຊອບ ໃນຄວາມຮູ້ສຶກຂອງຂະເຈົ້າ ກໍເຫັນຈະແຈງແລ້ວວ່າອ້າຍຄົນນີ້ປ່ຽນນິດໄສໃຈ ຄືເປັນຜູ້ສຸຂຸມ ເຢືອກເຢັນເຂົ້າ ເປັນວາດຜູ້ໃຫຍ່ສົມອາຍຸເກືອບສາມສິບຂອງລາວ ແລະ ກໍສົມກັບທີ່ໄດ້ຮັບການຫລໍ່ຫລອມມານຳວຽກງານ

ດົນໆຈະມີຜູ້ຊ່າງເລົ່າເລື່ອງຍາວໆແນວນີ້ ຢູ່ກາງປ່າ ພໍແລ້ວວຽກແລ້ວມັນເຫງົາມີຜູ້ລົມ ໃຜກໍຢາກຟັງ ໂດຍສະເພາະເລື່ອງທີ່ກ່ຽວຂ້ອງກັບຄົນຫນຸ່ມຫນຸ່ມຄືຂະເຈົ້າເອງ

ຫນຸ່ມ ບຸນທອນ ກໍພໍໃຈເລົ່າເຖິງປະສົບການຊີວິດ ທີ່ເຂົາຜ່ານຜ່າມາດ້ວຍຄວາມລຳບາກໃຈຄາວນັ້ນ ເຂົາບໍ່ຄາດຄິດມາກ່ອນດອກວ່າ ຄວາມມັກຄວາມຮັກຂອງເຂົາກັບໄພວັນ ຈະມີອຸປະສັກມາຂັດຂວາງການຮ່ວມສ້າງຄອບຄົວ ໃຫ້ແກ່ຍາວມາຈົນປານນີ້ ຄິດແຕ່ວ່າ ທັງສອງພໍໃຈກັນ ມີຊຸດົນຄະຕິອັນດຽວກັນ ນິດໄສໃຈຄໍ ໄປກັນໄດ້ ແລ້ວກໍບໍ່ມີບັນຫາ ດ້ວຍວ່າ ການ ຈັດຕັ້ງ

ກໍຖືວ່າຕ່າງຄົນກໍຕ່າງມີພື້ນງານດີເດັ່ນຢູ່ແລ້ວ ແຕ່ການຈັດຕັ້ງຜັດ ຫລີງເຫັນການໄກກວ່ານັ້ນອີກ

" ຕ້ອງເວົ້າຣອດວ່າ ຈະດຳລົງຊີວິດແນວໃດ ໃຫ້ມັນງຸ້ມກັນ ທາງດ້ານເສດຖະກິດນໍາ ບ່າງເທື່ອກໍແມ່ນເລື່ອງນອກຕົວ ພາວະວິໄສ ທີ່ຈະມາເຮັດໃຫ້ເຮົາຫຍຸ້ງຍາກຍ້ອນ ຄືກໍລະນີຫາວສິດ ກັບເນຍນັ້ນແລວ... "

ບຸນທອນ ຈື່ໄດ້ວ່າ ເວລາທີ່ທ່ານຫົວໜ້າກ່າວເຊັ່ນນັ້ນ ເຂົາພົບວ່າ ໄພວັນທັບມາແນມໜ້າເຂົາດ້ວຍແສງຕາປະກາຍກາຄົມ ດັ່ງຢາກປະກາດ ຄວາມຕັດສິນໃຈອັນບໍ່ປ່ຽນແປງທີ່ວ່າ:

" ພວກເຮົາຈະຢູ່ຄຽງບ່າຄຽງໄຫລ່ກັນຕະຫລອດໄປ... "

ເຂົາຍັງຮູ້ສຶກອົບອຸ່ນ ມີແຮງຍາດໃນໃຈຢ່າງປະຫລາດ ທຸກເທື່ອທີ່ຄິດຮອດວິນາທີນັ້ນຂຶ້ນມາ

- ໂອ໊ຍ ! ອ້າຍນ້ອຍ ກັບເອື້ອຍໄພທັ້ນບໍ່ມີຫຍັງຊິພິດພາດດອກ ອ້າຍຢູ່ໃສລາວກໍຢູ່ນຳໄດ້ໂລດລະ ທຳອິດພວກເຮົາຄິດວ່າ: ຢ້ານແຕ່ອ້າຍພີ່ຊິບໍ່ເຖິງຖອງທີ່ລາວ ເພາະອ້າຍລະຜ່ານເມືອງນອກມາແລ້ວ ! ແຕ່ວ່າອ້າຍກໍໄດ້ພິສູດແລ້ວເດວ່າເປັນ " ຊາວປ່າ " ຂອງເຮົາແທ້ແລ້ວ ! ອ້າຍນ້ອງ ໃນໜ່ວຍລວນໜອນ ສະໜັບສະໜູນອີກ

- ແນ່ນອນ ພວກເຮົາຕ່າງກໍເຊື່ອກັນທັງກໍກະກຽມຈິດໃຈໄປນຳທຸກນີ້.

- ຮວາຍ ! ຍາມນີ້ໄດ້ອ້າຍ ເຂົ້າກໍໃໝ່ ປາກໍມັນນະ ເດືອນຍີ່ນີ້ລະອາກາດກໍໜາວດີ !

ບຸນທອນ ໄດ້ແຕ່ຍິ້ມຍິ້ມ ໂດດລົງສູ່ຮ່ອງຫ້ວຍ ສະສວ່າຍຄືງຕໍ່ໄປ

ກັບຈາກອາບນໍ້າ ຫົວໜ້າຜະແນກປ່າໄມ້ ຊື່ງກັບເມືອເມືອງໃໝ່ ແລງວານນີ້ຜັດຍ່າງວັບໆມາຮອດ ຕີນໂຮບດ້ວຍຂີ້ຕົມປານໃສ່ເກີບໂບກ

- ກຽມຕົວຮັບຕ້ອນແຂກ ມີນັກຂ່າວຫລາຍຄົນຈະລົງມາຕິດແທດ. ພວກ

ດວງຈຳປາ

ເພິ່ນສະຫມັກໃຈຢ່າງນາວ່າຊັ້ນ... ຈັ່ງວ່າອ້າຍຟ້າວອອກມາກ່ອນ. ທີນທາງ ຈົ້ນຫຼາຍນ້ຳຂັງປານຫວຍ ເລີຍເສຍເວລາເຈາະແປງມານຳ ຢ່ານ ພວກເພິ່ນ ຫມິ່ນລົ້ມ... ນີ້ຮອດນັກຂ່າວແມ່ຍິງ ວ່າຊັ້ນກໍ່ !

ໃຜໆກໍຕື່ນເຕັ້ນ ຫຸ້ມມາສູ່ຖາມເຖິງແຜນການຮັບຕ້ອນເປັນວຸ້ນວາຍ ເປັນ ຄັ້ງທຳອິດທີ່ຊາວປ່າ ຈະໄດ້ຕ້ອນຮັບແຂກຈາກພາກສ່ວນຫນັງສືພິມ

ນີ້ການເອີ້ນປະຊຸມດ່ວນ ຫລັງຄາບເຂົ້າທ່ຽງ ຈັດແບ່ງວຽກງານ ແລະສົ່ງ ຄົນອອກນຳເອົາຈຸຫນ່ວຍອື່ນໆທີ່ເຮັດວຽກທາງອອກໄປອີກ ມາເຕົ້າໂຮມກັນໃນ ຄ່ຳຄືນນີ້ ເພື່ອໃຫ້ນັກຂ່າວສຳພາດກ່ຽວກັບຊີວິດ ແລະ ວຽກງານປູ່ພື້ນຖານ - ການຜະລິດ

ສີ່ໂມງແລງ ບັນດານັກຂ່າວຈຶ່ງຍ່າງມາຮອດ ຈູລະ ນີ-໔ ຄືນ ບຸນທອນ ວິນນຳຈົດແຕ່ນພິນງານຕົວຈິງຂອງການຜະລິດຕົ້ນລະດູ ລົງໃສ່ກະດານ ແຜນ ການແຜນໃຫຍ່ເອົາຂຽນຕົວເລກລົງດ້ວຍຄວາມອິ່ມອົກອິ່ມໃຈ ເພາະພົນ ງານ ເດືອນນີ້ ມັນບໍ່ວ່າໄດ້ລື່ນຄາດຫມາຍ ຢ່າງຫນ້າອັດສະຈັນ ຍອນຄາມນີ້ນຳວຽກ ເອົາບໍ່ໄດ້ແລ່ນອອກໄປຮັບຕ້ອນແຂກຄືຫມູ່ຜູ້ອື່ນ ແຕ່ທັນທີນັ້ນ ຫົວຫນ້າ ຜະ ແນກແຜນການ ຂອງບໍລິສັດ ກໍ່ຍ່າງເລີຍມາຮອດ ບຸນທອນ ຈັບມືບຸນທອນ ສັ່ນ ຈົນແຂນຊິຂາດ.

- ຊົມເຊີຍເດີ້ບຸນທອນ ! ຊົມເຊີຍ !

ຊາຍຫນຸ່ມຟ້າວດຶງແຂນເພິ່ນມາຫາຕາຕະລາງ ຊີ້ໃຫ້ເບິ່ງຕົວເລກທີ່ ຫນ້າ ພາກພູມໃຈນັ້ນ

ສະຫລຸບການຜະລິດ ປະຈຳເດືອນ ຕົດ-ປາ້ ຝີມີ໔ ຕົ້ນ - ໑.໔໗໕ - ທອນ ບໍລິມາດ ໔.໔໕໘ ມ.

ລາກແກລວມຫມອນ - ຝິຝ໐ "

ອົນສົ່ງຮອດສະຫນາມ - ຝ໑໙ "

... ໆລໆ

ສະຫາຍຫົວໜ້າແຜນການສົນໃຈນຳຕົວເລກຢູ່ຄາວດຽວ ພັດດຶງ ແຂນບຸນທ່ອນອອກມານອກພານ ບອກວ່າ:

- ພູນນະ !

ເພີ່ນຊີ້ມືໄປທາງເຂົ້າທີ່ເປັນຕຶກເປະປະຜູ້ທີ່ຍ່າງເຂົ້າມາຕ່ອງຈິກຕີນ ຈ່ອງຈັບກັນເປັນແຖວ... ນັ້ນແມ່ນນາງ ທອນແພງ ມາຈາກບໍລິສັດ ນັ້ນນອງໄກສອນ ເລຂາຂອງທ່ານຫົວໜ້າ ຄົນນັ້ນບໍ່ຮູ້ໜ້າ ຄົງແມ່ນນັກຂ່າວ... ແລະນັ້ນ... ໂອະ !

ບຸນທອນເກືອບບໍ່ເຊື່ອສາຍຕາຕົນເອງ ນັ້ນແມ່ນ ໄພວັນ ! ນາງ ຫາບກະຕ່າຂອງກິນ ບຸກມານຳໝູ່-ຍ່າງ ໑໐ ກິໂລແມັດ ແຕ່ເມືອງເກົ່າ ມາຫາຫ້ວຍນ້ຳເຜັ້ງ !

ແຕ່ກ່ອນທີ່ເຂົາຈະທັນຄິດ ຫລື ເຮັດຢ່າງໃດ ລຸງອິນຖາ ຄະນະ ອຳນວຍການປະຈຳການຢູ່ເມືອງໃໝ່ ກໍເລັ່ງມາຫາເຂົາ ລຸງຈົກເຈ້ຍຊະນິດໜຶ່ງ ມາເດໃຫ້ເຂົາຕໍ່ໜ້າຫຼາຍໆຄົນ.

- ລຸງຂໍສະແດງຄວາມຍິນດີນຳພວກຫຼານ ທີ່ສົມຄວາມຫວັງແລ້ວ ຫລານໄພວັນ ມານີ້ ຢາກປຶກສາວຽກງານແຕ່ງດອງກັບຫຼານກໍ ! ແລະ ເຮືອນ ພະນັກງານຊິປູກໃໝ່ກໍອະນຸມັດໃຫ້ຫຼານນຳຫລັງໜຶ່ງ ອອກແບບເອງເນີ້ !

ຫົວໜ້າໜ່ວຍຂົນສົ່ງລວນໝູ່ອນກາຍເປັນຄົນກືກໄປກັບບາດ ດວງຕາເທົ່ານັ້ນທີ່ເບີກກວ້າງ ສາຍແສງການວາວວາວຢ່າງມີຄວາມສຸກປຽມລົ້ນ ເຂົາແນມນຳຫຼັງ ໄພວັນ ທີ່ມຸ່ງໜ້າໄປທາງຜານພັກເຊົາສຳລັບແມ່ຍິງຫລັງເໜືອສຸດຂອງຄາຍ

ຫົວໜ້າຄຸ້ມຄອງສີເກັ້ຍໆເຂົ້າມາຕົບບ່າຖາມສຽງດັງວ່າ:

- ຈັ່ງໃດ ໜູໂຕທີ່ລ້ຽງຢູ່ເມືອງໃໝ່ພໍ່ຊິຊຸ່ນດອງແລ້ວຍອມບໍ່ລະ ?

ຮອດຕອນນີ້ ບຸນທອນ ຈຶ່ງຕັ້ງສະຕິໄດ້ຕອບຕາມຄວາມຈິງ :

- ໂຕນັ້ນ ນ້ອງກຽມໄວ້ເຮັດກິນລ້ຽງໄດ້ອ້າຍ !

- ໂຕກິນລ້ຽງນັ້ນບໍ່ລິສູດ ອະນຸມັດຕ່າງຫາກແລ້ວ ! ນະໂຍບາຍ ໂຕບັກໃຫຍ່ ! ລາຍລະອຽດຖາມ ນາງໄພວັນ ຫັ້ນເນີ້...

ສຽງຫົວ ຮາ ປອກເຢີ້ຍດັງຂຶ້ນຄັບຄົງ

ແສງແດດອ່ອນລອດປາຍໄມ້ລົງມາຕ້ອງເດີ່ນດິນຖົມໃໝ່ ພໍ່ກະຍຸດກະຢ່າງ ລຳແສງຂອງມັນທອດລົງສີ່ອ່ອນເຢັນຕາ ທົ່ວທັງປ່າເລີ່ມຖືກຄວາມໜາວເຢັນແຊກຊຶມ

ບຸນທອນບອກຕົວເອງວ່າ ຄືນນີ້ ເຂົາຄົງອົບອຸ່ນໃຈເປັນພິເສດ ເພາະບັດນີ້ເຂົາມີແລ້ວ-ທີ່ຝາກໃຈ !



# ກາງນາ



ແນມທົ່ງນາບ້ານນ້ອງ ເຂົ້າອ່ອນພວມຂຽວ
ລົມແລງພັດ ຕ່ອຍຕິເຟືອນຟັ້ນ
ຂຽວອ່ອນ ຂຽວໃບເຂົ້າ ລີລານວຍນາດ
ເດັ່ຽລະດາດທົ່ງກວ້າງ ຄອຍອ້າຍ ກ່ຽວນຳ.

ເຊີນ ເຢີ ນາຢ່ອງຢ້ຽມ ບ້ານປາຂາດອນ ນ້ອງນີ້
ບໍ່ທອນ ເຄືອງຄຳອູດ ສ່ຳຊິກິນ ລົງທ້ອງ
ແນມວ່າ ມາແປງສ້າງ ກະສິກຳ ເຕີບໃຫຍ່
ເຂົ້າຊິຕື່ມໜາ ນາຊິຕື່ມກວ້າງ ຍາມໄດ້ພັດທະນາ ພີ່ເອີຍ



# ກ່ຽວກັບຜູ້ຂຽນ

ຕໍ່ຈາກຫຼັງປົກ

ບາງໂອກາດ ພາຍຸຊີວິດໄດ້ ພັດວິນີ່ໜ່ຳສຸດແຮງກໍ່ຕາມ ນອກຈາກ ຂຽນ ແລະ ແຕ່ງເອງແລ້ວ, ດວງຈຳປາຍັງມີຜົນງານດ້ານການແປວັນນະກຳເອກທີ່ສຳຄັນໆຂອງໂລກອີກຫຼາຍເລື່ອງເຊັ່ນ " ແມ່ " ຂອງມັກຊິມ ກອັກກີ ເລື່ອງສັ້ນໃນຊຸດ "ພວກເຮົາຊາວໂຊວຽດ" ຂອງ ບໍຣິສ ເປເລວອຍ (ສຳນັກພິມກ້າວໜ້າ ມົດສະກູ)

ດວງຈຳປາ ເປັນສະມາຊິກຂອງກອງບັນນາທິການ ວັນນະສິນ ມາແຕ່ແຮກຕັ້ງ (໑໙໗໘) ແລະ ປະຈຸບັນ ເປັນຫົວໜ້າ ບ.ກ. ດວງຈຳປາ ມີບົດຮຽນ ຢ່າງຫຼວງຫຼາຍໃນການພົວພັນໃກ້ຊິດກັບເພື່ອນນັກຂຽນ ທັງເກົ່າ - ແລະ ໃໝ່ ຜູ້ຢາກຮ່ຳຮຽນມາ ແລະ ນ້ອງນຸ່ງຜູ້ຕັ້ນມີຢາກຂຽນ ສາມາດເວົ້າໄດ້ວ່າ ດວງຈຳປາມີວາທະສິນເທົ່າໆກັບການຂຽນ ເຄີຍໄດ້ຮັບ ຮາງວັນທີໜຶ່ງໃນການເສັງປາຖະກະຖາ

ເຖິງວ່າ ຈະຂຽນມາຫຼາຍ ຂຽນມາດົນ ມີຜົນງານພິມອອກຮ່ວມ ກັບນັກຂຽນອື່ນໆມາແລ້ວ (ໂຮມເລື່ອງສັ້ນນັກຂຽນຍິງ ຄ.ສ. ໑໙໘໓, ປາດຳ ໂລພາ ສ.ນ.ພ. ສ.ປ.ປ.ລ. ໑໙໗໘, ໂຮມເລື່ອງສັ້ນ ສະໂມສອນນັກຂຽນໜຸ່ມ ໑໙໘໘). ແຕ່ດວງຈຳປາ ກໍ່ຍັງບໍ່ທັນມີ "ຜົນງານ" ເປັນເຫຼັ້ມ ສົມບູນຂອງຕົນເອງຈັກເທື່ອ ດັ່ງນັ້ນ " ກ່ອນຈະເຖິງວັນນີ້ " ຈຶ່ງມີ ຄວາມໝາຍສະເພາະສຳລັບຜູ້ຂຽນ ແລະ ທ່ານຜູ້ອ່ານເທົ່າໆກັນ

ທ່ານຜູ້ອ່ານທີ່ຮັກແພງ !

ເພື່ອໃຫ້ການຈັດພິມປື້ມເຫຼັ້ມຕໍ່ໄປຂອງພວກເຮົາມີຂໍ້ຂາດຕົກ ບົກພ່ອງຫນ້ອຍທີ່ສຸດ ເທົ່າທີ່ຈະຫນ້ອຍໄດ້ ທາງສຳນັກພິມ ວັນນະສິນມີຄວາມຍິນດີຮັບເອົາຄຳຕິຊົມທຸກຢ່າງ ບໍ່ວ່າທາງດ້ານຄຸນນະພາບຂອງປຶ້ມກໍ່ຄືຮູບແບບການຈັດເຫຼັ້ມ

ສົ່ງຄວາມຄິດຄວາມເຫັນຂອງທ່ານມາໄດ້ຍັງສຳນັກງານ ວາລະສານ" ວັນນະສິນ " ຕູ້ ປ.ນ. ໑໖໓໑ ວຽງຈັນ, ສ.ປ.ປ.ລ.

ຂໍຂອບໃຈ ລ່ວງຫນ້າ



## ກ່ຽວກັບຜູ້ຂຽນ

ດວງຈຳປາ ຫລື ດາລາ ກັນລະຍາ (ວີຣະວົງ) ເປັນລູກທ້ອງປີຂອງຍາພໍ່ມະຫາ ສີລາ ວີຣະວົງແລະ ແມ່ ມາລີ ເກີດປີ ໑໙໔໐ ເປັນປີບ້ານເມືອງ ວຸ່ນວາຍຍ້ອນທາງສົງຄາມໂລກຄັ້ງທີສອງພາດຟອງມາເຖິງແຜ່ນດິນລາວ ຈັ່ງຊັ້ນ ດວງຈຳປາ ຈຶ່ງມີໂອກາດຖືກ "ກັກຂັງ" ກັບແມ່ແຕ່ອາຍຸໄດ້ ໑໑ ເດືອນ ສາເຫດວ່າຍາພໍ່ເຈົ້າເປັນນັກເຄື່ອນໄຫວ ຄົນຫນຶ່ງຂອງຂະບວນລາວອິດສະຫລະ ເອົາ ຕົວຫລົບຫນີຈາກການຈັບກຸມຂອງເຈົ້າຫນ້າທີ່ຝະລັ່ງ

ໃນໄວເດັກ "ດວງຈຳປາ" ເຕີບໃຫຍ່ຢູ່ເທິງກອງປຶ້ມ ທັງທີ່ຂຽນເປັນພາສາລາວ ແລະ ພາສາໄທ ເມື່ອເຕີບໃຫຍ່ໄດ້ຮ່ຳຮຽນ ວາດແວວເດັ່ນໃນດ້ານພາສາທີ່ສະແດງອອກຢ່າງຈະແຈ້ງ ເນື່ອງຈາກມີນ້ອງຕ້ອງເບິ່ງແຍງຊ່ອຍພໍ່ແມ່ ດວງຈຳປາ ຈຶ່ງຢຸດການຮຽນຢູ່ວິທະຍາໄລປາວີ ວຽງຈັນ ຕັ້ງແຕ່ອາຍຸພຽງ ໑໗ ປີ (ຄ.ສ ໑໙໕໗), ທັນນາປະກອບອາຊີບເປັນແມ່ພິມຂອງຊາດຢູ່ຫລາຍປີ ແຕ່ກໍບໍ່ເວັ້ນຫວ່າງການຂອກຮູ້ຮ່ຳຮຽນ ພາສາລາວ ປະເທດຂອງຕົນເອງ ຈົນສາມາດສອບເສັງເອົາທຶນໄປຮຽນຕໍ່ເສີມຄວາມຮູ້ທີ່ສະຫະລັດອາເມລິກາໄດ້ (໑໙໖໔ - ໖໕)

ຈາກປະສົບການ ດ້ານຊີວິດໃນຫລາຍ ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ປະກອບກັບແຮງດົນພາຍໃນສາຍເລືອດເຊື້ອ ເຮັດໃຫ້ "ດວງຈຳປາ" ຈັບປາກກາ ບໍ່ວາງຈັກເທື່ອ ເຖິງວ່າໃນ

ອ່ານຕໍ່ຫນ້າ 120